

# 占芭 ຈຳປາ

ແດນສະຫວັນເມືອງດິນ--ຈິວຈ້າຍເກົ້ວ

ສປຈີນຕັ້ງໜ້າຊຸກຍູ້ການ

ດ້ານແບບອຳນວຍຄວາມສະດວກ

ລາຄາ: 13000 ກີບ ¥10

ISSN 1673-3266

9 771673 326056 02>

2/2006

总第6期



# ມະຫາພຸດທະຮູບເລີ່ຊານ(ເສຊວນເມືອງຈີນ)








# ສວນຊຽງຂວັນວຽງຈັນເມືອງລາວ







# ສາລະບານ

2/2006 总第 6 期



## 【特 别 报 道】ຂ່າວພິເສດ

04 ຍົກສູງຄວາມສາມາດປະດິດສ້າງອັນໃໝ່ເປັນເຈົ້າຕົນເອງ ສະຖາປະນາສ້າງປະເທດແບບໃໝ່

## 【中 国 之 窗】ປ່ອງຢ້ຽມເມືອງຈີນ




08 ປະເທດຈີນຈະເສີມຂະຫຍາຍບົດບາດສ້າງສັນຢ່າງຕັ້ງໜ້າເພື່ອແກ້ໄຂບັນຫາພູມອາກາດ
10 ສປຈີນໃຊ້ມາດຕາການສາມປະການເພື່ອຮັບປະກັນອາຫານປອດໄພ
12 ແມ່ຍິງຈີນເປັນຜູ້ຊີ້ນຳການຊົມໃຊ້ໃນຄອບຄົວ
14 ສປຈີນຕັ້ງໜ້າຊຸກຍູ້ການຄ້າແບບອຳນວຍຄວາມສະດວກ
16 ການບຸກເບີກຜະລິດທາງກະເສດຂອງຈີນໄດ້ມີທ່າແຮງແລະເງື່ອນໄຂນຳໜ້າເພື່ອບັນລຸແບບທັນສະໄໝ
18 ຈີນສ້າງສຳເລັດສູນກອບກູ້ແຜ່ພັນສັດປ່າທີ່ໃຫຍ່ສຸດ
19 ຈຳນວນຜູ້ອາສາສະໝັກໃນຄຸ້ມເຂດປະເທດຈີນມີຮອດ 16 ລ້ານຄົນ




封面 老挝万象塔龙塔　摄影 杨 云

主　　办：云南省对外文化交流协会
编辑出版：《占芭》杂志社
总 顾 问：丹　增 晏友琼
梁公卿 刘　平 苏正国
总 编 辑：郑　明
副总编辑：戴世平
执行副总编辑：杨　云
编辑总监：董保延
责任编辑：罗　汉 苏雯雯
美术总监：祝　群
发行主任：禹正玉
老文译审：黄　冰
翻　　译：黄　冰 白厚启
老文录入：白厚启

发行范围：国内外公开发行
出版日期：每月五日
邮发代号：64-36
国际标准刊号：ISSN 1673-3266
国内统一刊号：CN53C1200 / D

ຈັດທຳໂດຍ: ສະມາຄົມແລກປ່ຽນວັດທະນະທຳກັບຕ່າງປະເທດ
ແຂວງຢູນນານແຫ່ງ ສ ປ ຈີນ
ປະທານທີ່ປຶກສາ: ຕານເຈັ້ນ ຢຽນຢຽວສົງ ແລງກົງຊິ ຫຼິວຜິງ ຊູເຈີນກົ່ວ
ຫົວໜ້າບັນນາທິການ: ເຈີນໝິງ
ຮອງຫົວໜ້າບັນນາທິການ: ຕ້າຍສືຜິງ
ຮອງຫົວໜ້າບັນນາທິການ
ບໍລິຫານ: ຢາງຢູນ
ຜູ້ຄຸ້ມງານ ບັນນາທິການ: ຕົງປາວຢຽນ
ບັນນາທິການປະຈຳ: ໂຫຼຮ່ານ ຊູເວີນເວີນ
ຜູ້ຄຸ້ມງານຝ່າຍສິລະປະ: ຈູ້ສິນ
ຫົວໜ້າພົມຈຳໜ່າຍ ຢູຍເຈີງຢູຍ
ບັນນາທິການ ພາສາລາວ: ຮວງປິນ
ຜູ້ແປພາສາ: ຮວງປິນ ປາຍໂຫສີ
ຜູ້ພິມພາສາລາວ: ປາຍໂຫສີ

ພິມຈຳໜ່າຍເປີດເຜີຍ: ພາຍໃນແລະຕ່າງປະເທດ
ອອກຈຳໜ່າຍ: ວັນທີ 5 ທຸກເດືອນ
ລະຫັດວາລະສາ ມາດຖາ ສາກົ : ISSN 1673-3266
ລະຫັດວາລະສານປະເທດຈີນ: CN53-1200/D
http://www.yunnan.cn
GMS.yunnan.cn

E-mail: ynzhanba@163.com
ສະຖານທີ່: ເບີເຮືອນ 76 ຖະໜົນຮວາຊານໝານລູ່ນະຄອນຄຸນໝິງແຂວງຢູນນານ
ລະຫັດໄປສະນີ: 650021 ເບີໂທ: 0086-0871-3621079 ໂທລະເລກ: 0086-0871-3621069

## [环球扫描] ສະແກນຮອບໂລກ

20 ແຫຼ່ງມາແລະຊື່ມ່ອນ ໆຂອງປະເທດອາຟຣິກາ

## [中老交往] ການໄປມາຫາສູ່ກັນລະຫວ່າງຈີນ-ລາວ



22 ສປປລາວຕັ້ງໜ້ານຳໃຊ້ງານນິທັດສະການນານໜິງເປີດກວ້າງການຮ່ວມມືເສດຖະກິດການຄ້າ

23 ຢູນນານຈະຕັ້ງສູນເຝິກອົບຮົມພາສາຈີນຢູ່ລາວ

24 ຢູນນານກັບຫຼວງພະບາງສປປລາວຮ່ວມໄມ້ຮ່ວມມືພັດທະນາການທ່ອງທ່ຽວ

## [老挝印象] ພາບປະທັບໃນເມືອງລາວ

26 ແວ່ຊິມໃຊ້ສະປາທີ່ແຄມຂອງ

## [文化博览] ລຽບຊົມວັດທະນະທຳ



28 ກົງຟູ---ມວຍວູສູ

30 ຢູນນານ: ສາຄອນແຫ່ງດົນຕີຊົນເຜົ່າ

32 ການແກະສະຫຼັກໄມ້ທີ່ພິດສະດານໂດດເດັ່ນຂອງຊົນເຜົ່າປ່າຍ

## [旅游纵横] ການທ່ອງທ່ຽວທັດສະນາຈອນ



34 ແດນສະຫວັນເມືອງຄົນ--ຈິວຈ້າຍເກົ້ວ(ທຸບເຂົ້າເກົ້າບ້ານ)

36 ແດນດິນປະເສີດໃຕ້ຟ້າຢູນນານ--ຈ້ຽນຊວນ

38 ເມືອງໂຫຼຜິງ,ເລື່ອນລອຍຢູ່ທະເລດອກໄມ້ໄພສານ

## [今日云南] ຢູນນານໃນວັນນີ້

40 ງານນິທັດສະການຊັບສິນທາງວັດທະນະທຳພາກຕາເວັນຕົກຈີນສະໄໝປະຖົມມະເລີກໄດ້ຈັດຂຶ້ນທີ່ຄຸນໝິງ

42 ກົງສຸນໃຫຍ່ລາວ,ໄທແລະມຽນມ້າປະຈຳຄຸນໝິງສັນລະເສີນວາລະສານທັງສາມ

44 ນາຕະກຳເພງຊົນເຜົ່າຢູນນານເພີ່ມສີສັນທີ່ກົວລາລຳເປີ

46 ອຸດສາຫະກຳທ່ອງທ່ຽວຄຸນໝິງຫັນຈາກແບບທັດສະນາຈອນໄປສູ່ແບບພັກຜ່ອນຢ່ອນກາຍ

## [东盟快讯] ຈັບກະແສຂ່າວອາຊຽນ



52 ກອງປະຊຸມເຈົ້ານາຍຊັ້ນສູງຈີນ--ອາຊຽນໄດ້ຈັດຂຶ້ນທີ່ນະຄອນກົວລາລຳເປີ

54 ອາຊຽນວາງແຜນສຸກເສີນປ້ອງກັນແລະຄວບຄຸມໂລກໄຂ້ຫວັດສັດປີກ

## [民族风情] ຮີດຄອງພື້ນແຜ່ນຂອງຊົນເຜົ່າ



56 ໄທຊານີ--ແສ່ວຄວາມງາມໃສ່ເສື້ອຜ້າ

58 ພິທີຄຶກຄື້ນໃນບຸນປີໃໝ່ຂອງເຜົ່າລີຊູ

60 ດອກດວງມາລາຢູນນານຫອມຫວນເປັນອາຫານ

## [为您服务] ບໍລິການທ່ານ

62 ອາຫານໂອຊາລົດຢູນນານ:ໄກ່ອົບໝໍ້ດິນ

## [学汉语] ຮຽນພາສາຈີນ

64 ຫາຊື້ໝາກໄມ້

## 提高自主创新能力　建设创新型国家

中国共产党的十六届五中全会把提高自主创新能力、建设创新型国家作为“十一五”时期的主要任务之一。这是从中国经济社会发展全局出发作出的重大决策，是对未来五年乃至今后较长时期内中国科技发展和产业结构优化升级作出的重大战略部署。全面落实这一战略任务，对于实现全面建设小康社会的宏伟目标，具有重大意义。

# ຍົກສູງຄວາມສາມາດປະດິດສ້າງອັນໃໝ່ເປັນເຈົ້າຕົນເອງ ສະຖາປະນາສ້າງປະເທດແບບໃໝ່



ກອງປະຊຸມຄົບຄະນະຂອງກຳມະການສູນກາງຄັ້ງທີ 5 ສະໄໝທີ 16 ຂອງພັກກອມມູນິດຈີນໄດ້ຍົກເອົາການຍົກສູງຄວາມສາມາດປະດິດສ້າງອັນໃໝ່ເປັນເຈົ້າຕົນເອງແລະສະຖາປະນາສ້າງປະເທດແບບໃໝ່ເປັນພາລະໜ້າທີ່ສຳຄັນປະການໜຶ່ງສຳລັບໄລຍະແຜນການ 5 ປີຄັ້ງທີ 11. ນີ້ແມ່ນຍຸດໂທບາຍຕົກລົງທີ່ໜັກແໜ້ນເຊິ່ງເລີ່ມຈາກພາກກວມລວມຂອງການພັດທະນາເສດຖະກິດ--ສັງຄົມປະເທດຈີນ, ແລະກໍ່ແມ່ນແຜນຍຸດທະສາດໜັກແໜ້ນຕໍ່ການພັດທະນາວິທະຍາສາດ--ເຕັກນິກແລະການດັດສົມໂຄງປະກອບຊັບສິນໃຫ້ເລື່ອນລະດັບຂອງຈີນໃນອະນາຄົດ 5 ປີຕະຫຼອດເວລາຍາວນານພາຍຂ້າງໜ້າ. ສະນັ້ນປະຕິບັດໜ້າທີ່ຍຸດທະສາດດັ່ງກ່າວໃຫ້ປະກົດຜົນເປັນຈິງຮອບດ້ານມັນມີຄວາມໝາຍອັນໜັກແໜ້ນຕໍ່ການບັນລຸເປົ້າໝາຍຍິ່ງໃຫຍ່ໃນການສ້າງສັງຄົມພໍຢູ່ພໍກິນຮອບດ້ານ.



ການປະດິດສ້າງອັນໃໝ່ແມ່ນດວງວິນຍານຄວາມກ້າວໜ້າຂອງຊົນຊາດໜຶ່ງ ໆ, ແລະກໍ່ແມ່ນແມ່ແຮງທີ່ບໍ່ສຸດສ້ຽງຂອງຄວາມຈະເລີນຮຸ່ງເຮືອງປະເທດໜຶ່ງ ໆ. ໃນຍຸກສະໄໝນີ້, ການປະດິດສ້າງອັນໃໝ່ນັບມື້ນັບກາຍເປັນຂີດໝາຍທີ່ສຳຄັນຂອງການປົດປ່ອຍແລະພັດທະນາກຳລັງຜະລິດຂອງສັງຄົມ, ສັງຄົມມະນຸດພວມຜ່ານການປະຕິວັດວິທະຍາສາດ--ເຕັກນິກຄັ້ງໃໝ່, ວິທະຍາສາດເຕັກນິກໄດ້ກາຍເປັນກຳລັງຕັດສິນຊີ້ຂາດຂອງການພັດທະນາເສດຖະກິດ--ສັງຄົມ, ແກ່ນສານການຊ່ວງຊິງກຳລັງສັງລວມຂອງຊາດແມ່ນການຊ່ວງຊິງຄວາມສາມາດປະດິດສ້າງອັນໃໝ່ເປັນເຈົ້າຕົນເອງ.

ຍົກສູງຄວາມສາມາດປະດິດສ້າງອັນໃໝ່ເປັນເຈົ້າຕົນເອງ, ສະຖາປະນາສ້າງປະເທດແບບໃໝ່, ຈະຕ້ອງກຳແໜ້ນສູນບໍລິການພັດທະນາເສດຖະກິດ--ສັງຄົມ. ຕັ້ງໜ້າພັດທະນາເຕັກໂນໂລຊີຊັ້ນສູງແຫ່ງຍຸດທະສາດແລະເຕັກນິກລັກສະນະລວມກໍ່ຄືເຕັກນິກຄົບວົງຈອນທີ່ສາມາດຍົກສູງລະດັບເຕັກນິກກວມລວມຂອງຊັບສິນ, ມີສິດທິຊັບສິນທາງປັນຍາເປັນເຈົ້າຕົນເອງຈຳນວນໜຶ່ງ, ກໍ່ສ້າງວິສາຫະກິດກໍ່ຄືຍີ່ຫໍ້ທີ່ມີກຳລັງແກ້ງແຍ້ງລະຫວ່າງຊາດຈຳນວນໜຶ່ງເພື່ອຊຸກຍູ້ແລະຍົກສູງລະດັບວິທະຍາສາດ--ເຕັກນິກກວມລວມຂອງຊາດແລະຄວາມສາມາດປະດິດສ້າງອັນໃໝ່.

ຍົກສູງຄວາມສາມາດປະດິດສ້າງອັນໃໝ່ເປັນເຈົ້າຕົນເອງ, ສະຖາປະນາສ້າງປະເທດແບບໃໝ່, ຈະຕ້ອງສ້າງລະບົບປະດິດສ້າງອັນໃໝ່ທາງດ້ານເຕັກນິກທີ່ເອົາວິສາຫະກິດເປັນເຈົ້າກຳ, ຕະຫຼາດເປັນທິດຊີ້ນຳແລະການປະສານສົມທົບລະຫວ່າງພາກການຜະລິດ--ໂຮງຮຽນ--ສະຖາບັນຄົ້ນຄວ້າ. ວິສາຫະກິດຕ້ອງເສີມຂະຫຍາຍບົດບາດສຳຄັນຂອງເຈົ້າກຳປະດິດສ້າງອັນໃໝ່, ເຊີດຊູຄວາມສາມາດປະດິດສ້າງອັນໃໝ່ເປັນເຈົ້າຕົນເອງໃຫ້ພົ້ນເດັ່ນ, ພະຍາຍາມຍາດແຍ່ງກຳໄດ້ເຕັກນິກຂອດສຳຄັນຂອງສິດທິຊັບສິນທາງປັນຍາເປັນເຈົ້າຕົນເອງ, ໃຫ້ຫັນເປັນກຳລັງຜະລິດພາກຕົວຈິງ, ເພື່ອເປັນການອຸທິດແກ່ການຍົກສູງຄວາມສາມາດປະດິດສ້າງອັນໃໝ່ເປັນເຈົ້າຕົນເອງຂອງຊາດ. ພ້ອມກັນ







ນີ້ ປ່ວແປງສະພາບແວວລ້ອມຕະຫລາດຂອງການປະດິດສ້າງເຕັກນິກອັນໃໝ່,ເລັ່ງລັດຫັນປ່ຽນໝາກຜົນວິທະຍາສາດເຕັກນິກກາຍເປັນກຳລັງຜະລິດພາກຕົວຈິງ.ເລັ່ງລັດສ້າງຕັ້ງລະບອບສະຖາບັນຄົ້ນຄວ້າທາງວິທະຍາສາດທັນສະໄໝ,ເສີມຂະຫຍາຍບົດບາດສຳຄັນໃນກົນໄກມີປະສິດທິຜົນທີ່ປະສານສົມທົບລະຫວ່າງພາກການຜະລິດ--ໂຮງຮຽນ--ສະຖາບັນຄົ້ນຄວ້າແລະລະບົບປະດິດສ້າງອັນໃໝ່ຂອງຊາດ,ເພື່ອໃຫ້ມີຊີວະພະລັງຕື່ມອີກ.

ຍົກສູງຄວາມສາມາດປະດິດສ້າງອັນໃໝ່ເປັນເຈົ້າຕົນເອງ,ສະຖາປະນາສ້າງປະເທດແບບໃໝ່ຈະຕ້ອງສ້າງລະບົບແລະກົນໄກທີ່ບຳເພັນສະພາບແວດລ້ອມເຊີດຊູການປະດິດສ້າງອັນໃໝ່ເປັນເຈົ້າຕົນເອງແລະດັດສົມການປະດິດສ້າງອັນໃໝ່ໃຫ້ສົມບູນ.ກ່ອນອື່ນ ຕ້ອງປົກປ້ອງສິດທິຊັບສິນທາງປັນຍາ.ລະບອບສິດທິຊັບສິນທາງປັນຍາແມ່ນເຄື່ອງມືສຳຄັນທີ່ບັນລຸຍຸດທະສາດພັດທະນາວິຊາການເຕັກນິກຂອງຊາດ,ຕ້ອງສ້າງລະບົບທີ່ບຳເພັນການປົກປ້ອງສິດທິຊັບສິນທາງປັນຍາໃຫ້ສົມບູນ,ແລະໃຫ້ກາຍເປັນສະພາບແວດລ້ອມສັງຄົມທີ່ເຊີດຊູນ້ຳໃຈກະຕືລືລົ້ນປະດິດສ້າງອັນໃໝ່,ເຊີດຊູພຶດຕິກຳປະດິດສ້າງອັນໃໝ່ແລະຍົກສູງຄ່າຕອບແທນຕໍ່ການປະດິດສ້າງອັນໃໝ່.ອີກດ້ານໜຶ່ງ ຕ້ອງສ້າງສະພາບແວດລ້ອມນະໂຍບາຍທີ່ອຳນວຍຜົນແກ່ການປະດິດສ້າງອັນໃໝ່ເປັນເຈົ້າຕົນເອງ.ປະການທີສາມຕ້ອງສ້າງກົນໄກໃຊ້ບຸກຄະລາກອນທີ່ອຳນວຍຜົນແກ່ຜູ້ປະດິດສ້າງອັນໃໝ່ເປັນເຈົ້າຕົນເອງ.ຄັດເລືອກເອົາບຸກຄະລາກອນຜູ້ກ້າບຸກບືນຍັ່ງສືບແລະກ້າບຸກເບີກປະດິດສ້າງອັນໃໝ່ນັ້ນຂຶ້ນມາດຳລົງຕຳແໜ່ງທີ່ສຳຄັນ.

ຍົກສູງຄວາມສາມາດປະດິດສ້າງອັນໃໝ່ເປັນເຈົ້າຕົນເອງ,ສະຖາປະນາສ້າງປະເທດແບບໃໝ່,ຈະຕ້ອງປະສານສົມທົບຢ່າງສະໜິດແໜ້ນກັບການອອກແຮງປະຕິບັດຍຸດທະສາດພັດທະນາປະເທດດ້ວຍວິທະຍາສາດ--ການສຶກສາແລະຍຸດທະສາດສ້າງປະເທດໃຫ້ເຂັ້ມແຂງດ້ວຍບຸກຄະລາກອນພອນສະຫວັນ.ຄວາມສາມາດປະດິດສ້າງອັນໃໝ່ເປັນເຈົ້າຕົນເອງ ມັນຊີ້ຂາດນຳການຍົກສູງຄຸນທາດຂອງຜູ້ອອກແຮງງານແລະການບຳລຸງກໍ່ສ້າງບຸກຄະລາກອນທີ່ມີຄຸນທາດສູງ.ຕ້ອງລົງເລິກຊຸກຍູ້ຍຸດທະສາດ

ພັດທະນາປະເທດດ້ວຍວິທະຍາສາດ--ການສຶກສາ,ພົນຂະຫຍາຍຄຸນປະໂຫຍດຂອງຊັບພະຍາກອນວິທະຍາສາດ--ເຕັກນິກຕ່າງ ໆຢ່າງເຕັມສ່ວນ;ສືບຕໍ່ເອົາຍຸດທະສາດພັດທະນາການສຶກສານຳໜ້າກ່ອນໝູ່,ຍົກສູງຄຸນະພາບການສຶກສາ.ເພີ່ມທະວີການກໍ່ສ້າງຖັນແຖວວິທະຍາສາດເຕັກນິກ,ບຳເພັນກົນໄກເຊີດຊູນ້ຳໃຈບຸກຄະລາກອນໃຫ້ສົມບູນ,ເສີມຂະຫຍາຍບົດບາດຂອດສຳຄັນຂອງບຸກຄະລາກອນໃນທ່າມກາງປະດິດສ້າງອັນໃໝ່ເປັນເຈົ້າຕົນເອງຢ່າງເຕັມສ່ວນ.

ຍົກສູງຄວາມສາມາດປະດິດສ້າງອັນໃໝ່ເປັນເຈົ້າຕົນເອງ,ສະຖາປະນາສ້າງປະເທດແບບໃໝ່,ຈະຕ້ອງເອົາການປະດິດສ້າງອັນໃໝ່ເປັນເຈົ້າຕົນເອງເປັນສິ່ງບົ່ມສ້າງແບບແຜນອັນດີງາມປະການໜຶ່ງ.ຕ້ອງເຮັດໃຫ້ການປະດິດສ້າງອັນໃໝ່ເປັນເຈົ້າຕົນເອງກາຍເປັນນ້ຳໃຈ,ສິນທຳແລະຄວາມນິຍົມທົ່ວໄປ,ເປັນລັກສະນະຍຸກສະໄໝທີ່ໂປ່ງໃສ.ບົ່ມສ້າງແບບແຜນປະດິດສ້າງອັນໃໝ່ເປັນເຈົ້າຕົນເອງນັ້ນ ກໍ່ຕ້ອງອອກແຮງລິເລີ່ມສົ່ງເສີມຈິດສຳນຶກປະດິດສ້າງອັນໃໝ່,ຍົກສູງຄວາມສາມາດຂອງການປະດິດສ້າງອັນໃໝ່ຢ່າງບໍ່ຢຸດຢັ້ງ,ເອົາໃຈໃສ່ຕໍ່ການສ້າງສະພາບແວດລ້ອມຂອງການປະດິດສ້າງອັນໃໝ່.

ຍົກສູງຄວາມສາມາດປະດິດສ້າງອັນໃໝ່ເປັນເຈົ້າຕົນເອງ,ສະຖາປະນາສ້າງປະເທດແບບໃໝ່,ມັນເປັນພາລະກິດອັນໜັກໜ່ວງແລະຫົນທາງຍາວໄກ.ທະແນມແຕ່ທົ່ວພັກທົ່ວສັງຄົມກໍ່ສຸມຈິດສຸມໃຈເຂົ້າຮ່ວມການປະດິດສ້າງອັນໃໝ່,ເຊີດຊູນ້ຳໃຈປະດິດສ້າງອັນໃໝ່ແລະສະໜັບສະໜູນອູ້ມຊູການປະດິດສ້າງອັນໃໝ່,ເຮັດໃຫ້ການປະດິດສ້າງອັນໃໝ່ທັນເປັນນ້ຳໃຈແລະດວງວິນຍານຂອງຊາດຈີນ,ສັງຄົມກໍ່ຈະຮັກສາຊີວະພະລັງແລະຄວາມມີຊີວິດຊີວາຕະຫຼອດໄປ,ປະເທດຊາດກໍ່ຈະມີແມ່ແຮງພັດທະນາທີ່ບໍ່ສຸດສ້ຽງຢ່າງແນ່ນອນ.






## 中国将为解决全球气候问题发挥积极的建设性作用

在《联合国气候变化框架公约》缔约方大会上，中国外交部发言人秦刚说，中方愿意在《联合国气候变化框架公约》，为改善全球气候发挥积极的建设性作用。

ໃນກອງປະຊຸມຝ່າຍສັນຍາ《ຂອບສົນທິສັນຍາການຜັນປ່ຽນຂອງພູມອາກາດແຫ່ງສະຫະປະຊາຊາດ》, ທ່ານສິ່ນກັງ ໂຄສົກກະຊວງການຕ່າງປະເທດຈີນກ່າວວ່າ:ຝ່າຍຈີນຍິນດີເສີມຂະຫຍາຍບົດບາດທີ່ຕັ້ງໜ້າແລະສ້າງສັນໃນກອງປະຊຸມຝ່າຍສັນຍາທີ່《ຂອບສົນທິສັນຍາການຜັນປ່ຽນຂອງພູມອາກາດແຫ່ງສະຫະປະຊາຊາດ》.

ທ່ານສິ່ນກັງກ່າວວ່າ:ສປຈີນເອົາໃຈໃສ່ກອງປະຊຸມຄັ້ງນີ້ເປັນຢ່າງສູງ, ປະຈຸບັນນີ້ໄດ້ສົ່ງຄະນະຜູ້ແທນທີ່ປະກອບໂດຍພາກກະຊວງການຕ່າງປະເທດຈີນ, ຄະນະກຳມະການພັດທະນາແລະປະຕິຮູບແຫ່ງຊາດຈີນກໍ່ຄືກະຊວງວິທະຍາສາດ-ເຕັກນິກຈີນເຂົ້າຮ່ວມກອງປະຊຸມ. ສປຈີນເຫັນວ່າ ກອງປະຊຸມຄັ້ງນີ້ມີໜ້າທີ່ສີ່ປະການະໜຶ່ງ, ຊຸກຍູ້ການປະຕິບັດສົນທິສັນຍາແລະອະ



# ປະເທດຈີນຈະເສີມຂະຫຍາຍບົດບາດສ້າງສັນຢ່າງຕັ້ງໜ້າ

ນຸສັນຍາໃຫ້ແທດຈິງຢ່າງຮອບດ້ານ;ສອງ,ລົງມືປະຕິຮູບກົນໄກພັດທະນາຄວາມສະອາດ;ສາມ,ວາງແຜນການ 5 ປີທີ່ເໝາະແກ່ການຜັນປ່ຽນຂອງພູມອາກາດຕື່ມອີກ;ສີ່,ເລີ່ມເປີດເຈລະຈາການຜັນປ່ຽນຂອງພູມອາກາດຮອບໃໝ່.ປະເທດຈີນສະໜັບສະໜູນການປະຕິບັດອະນຸສັນຍານະຄອນຫຼວງຢ່າງແທດຈິງບົນພື້ນຖານຍຶດຖືຫຼັກການຕົ້ນຕໍຂອງສົນທິສັນຍາ;ພ້ອມນີ້ຍັງຈະຕ້ອງຢັ່ງຫາວິທີຕ່າງ ໆທີ່ສອດຄ່ອງກັບສະພາບຂອງແຕ່ລະປະເທດເພື່ອສາມາດລະດົມຄວາມຈູບຈ້າວຫ້າວຫັນຂອງແຕ່ລະປະເທດຮັບມືກັບການຜັນປ່ຽນຂອງພູມອາກາດຢ່າງເຕັມສ່ວນ,ແລະຕັ້ງໜ້າພະຍາຍາມແກ້ໄຂສິ່ງທ້າທາຍຈາກການຜັນປ່ຽນຂອງພູມອາກາດສ້າງຂຶ້ນແກ່ມວນມະນຸດ.

ທ່ານສິ່ນກັງກ່າວເນັ້ນວ່າ:ສປຈີນຍຶດຖືຫຼັກການຮັບຜິດຊອບຮ່ວມກັນແຕ່ມີສ່ວນຕ່າງກັນຊຶ່ງກຳນົດໃນ«ອະນຸສັນຍານະຄອນຫຼວງ»,ແຕ່ກໍ່ບໍ່ໄດ້ໝາຍວ່າ ຈີນບໍ່ພະຍາຍາມຮັບມືກັບການຜັນປ່ຽນຂອງພູມອາກາດດອກ.ກົງກັນຂ້າມ,ລັດຖະບານຈີນຍຶດໝັ້ນທັດສະນະພັດທະນາວິທະຍາສາດ,ເດີນເສັ້ນທາງພັດທະນາທີ່ຍືນຍົງ,ຕັ້ງໜ້າເອົາໃຈໃສ່ການພັດທະນາສະໜິມກົມກຽວຄືນແລະທຳມະຊາດ;ໄປພ້ອມ ໆກັບການພັດທະນາເສດຖະກິດ,ຕັ້ງໜ້າເອົາໃຈໃສ່ອະນຸຮັກສິ່ງແວດລ້ອມແລະພູມອາກາດ.ຕໍ່ໄປພາຍໜ້າ,ບໍ່ວ່າຢູ່ພາຍໃນປະເທດຫລືພາຍໃນຂອບພະຫຸພາຄີ,ປະເທດຈີນກໍ່ຈະເສີມຂະຫຍາຍບົດບາດຢ່າງຕັ້ງໜ້າແລະສ້າງສັນເພື່ອແກ້ໄຂບັນຫາພູມອາກາດ.



# ເພື່ອແກ້ໄຂບັນຫາພູມອາກາດ

# ສປ ຈີນໃຊ້ມາດຕະການສາມປະການເພື່ອຮັບປະກັນອາຫານປອດໄພ





## 中国采取三大措施保障食品安全

中国国家工商行政管理部门将继续深入开展食品安全专项整治，严厉打击制假售假行为，切实维护食品消费安全。

ພາກຄຸ້ມຄອງບໍລິຫານອຸດສາຫະກຳການຄ້າແຫ່ງຊາດຈີນ ຈະສືບຕໍ່ລົງເລິກປັບປຸງສະເພາະກິດກ່ຽວກັບອາຫານປອດໄພ, ຕີຕ້ານພຶດຕິກຳທີ່ເຮັດຂອງປອມຈຳໜ່າຍຂາຍຂອງປອມຢ່າງເຂັ້ມງວດກວດຂັນ, ປົກປ້ອງອາຫານປອດໄພທີ່ບໍລິໂພກຊົມໃຊ້ຢ່າງແທ້ຈິງ.

ທ່ານວັງຈິ່ງຝູ່ ຫົວໜ້າກົມໃຫຍ່ຄຸ້ມຄອງບໍລິຫານອຸດສາຫະ

ກຳການຄ້າແຫ່ງຊາດຈີນໄດ້ກ່າວທີ່ກອງປະຊຸມວຽກງານຄຸ້ມຄອງບໍລິຫານອຸດສາຫະກຳການຄ້າທົ່ວປະເທດວ່າ:ໃນວຽກງານອາຫານປອດໄພປີ 2006,ຈີນຈະລວມສູນເປີດການກວດກາຕາມກົດໝາຍສະເພາະກິດສາມປະການ.ຄືເອົາກະຊວງປະສົມຄຸ້ມເຂດໂຕເມືອງ,ຊົນນະບົດແລະໂຕເມືອງກັບໝູ່ບ້ານເປັນຈຸດສຸມ,ດຳເນີນການກວດກາຕາມກົດໝາຍຕໍ່ເຂດຈຸດສຸມ,ຈຸດໜັກແມ່ນແກ້ໄຂບັນຫາຜູ້ທຳການທຸລະກິດຄ້າຂາຍບໍ່ມີປາຕັງແລະຜະລິດຫຼືຈຳໜ່າຍຂາຍອາຫານທີ່ປອມແປງເສື່ອມຄຸນະພາບ;ເພັ່ງເລັງໃສ່ຈຸດສຸມຕະຫຼາດ,ຕະຫຼາດສຸເປີ,ຕະຫຼາດນັດການຄ້າແລະຕະຫຼາດຂາຍສົ່ງ,ທຳການກວດກາຕາມກົດໝາຍສະເພາະກິດລະບຽບຜູກມັດຕົນເອງ,ຈຸດໜັກແກ້ໄຂບັນຫາກວດບັດເບີຢັ້ງຢືນນຳສິນຄ້າເຂົ້າຂອງເຈົ້າຂອງຮ້ານ,ການຍົກເລີກອາຫານທີ່ບໍ່ໄດ້ຕາມມາດຖານຫຼືຂາດຄຸນະພາບ,ກວດກາໜ້າທີ່ຮັບຜິດຊອບຕໍ່ລະບຽບຜູກມັດຕົນເອງແລະພາກປະຕິບັດແທດເຖິງ,ຊຸກຈູງແລະຕິດຕາມກວດກາຜູ້ທຳການທຸລະກິດຕ້ອງຮັບຜິດຊອບຕໍ່ຜູ້ບໍລິໂພກຢ່າງແທ້ຈິງແລະຮັບຜິດຊອບຕໍ່ອາຫານປອດໄພ;ຖືເອົາມື້ພັກວັນບຸນເປັນຕົ້ນຄື:ວັນກຳມະກອນສາກົນ,ວັນຊາດ,ເທສະການໄຫວ້ພະຈັນ,ວັນປີໃໝ່ສາກົນແລະບຸນກຸດຈີນເປັນຈຸດສຸມ,ເປີດບັ້ນກວດກາຕາມກົດໝາຍສະເພາະກິດທີ່ຕະຫຼາດຈຳໜ່າຍອາຫານການກິນໃນວັນບຸນ,ຈຸດສຸມເພື່ອແກ້ໄຂບັນຫາຈຳໜ່າຍອາຫານວັນບຸນທີ່ມີພິດເບື່ອຫຼືບໍ່ໄດ້ມາດຖານ,ເພື່ອຮັບປະກັນຄວາມປອດໄພແກ່ການບໍລິໂພກຊົມໃຊ້ໃນປາງບຸນ.

ໃນການປັບປຸງສະເພາະກິດອາຫານປອດໄພນັ້ນ,ຈະຕ້ອງຕິດຕາມຄຸ້ມຄອງຄຸນະພາບອາຫານເປັນຈຸດສຸມພົ້ນເດັ່ນ, ໂດຍສະເພາະແມ່ນສືບຕໍ່ເອົາຜະລິດພັນນ້ຳນົມເປັນຜະລິດພັນຈຸດສຸມ,ຖືເຄັ່ງການນຳເຂົ້າສູ່ຕະຫຼາດ,ອອກແຮງເພີ່ມທະວີການຕິດຕາມກວດກາຕະຫຼາດ,ປະຕິບັດລົງໂທດຕໍ່ພຶດຕິກຳຝ່າຝືນກົດໝາຍຊຶ່ງຈຳໜ່າຍຂາຍນ້ຳນົມທີ່ບໍ່ໄດ້ມາດຖານຫຼືປະປົນປອມແປງຢ່າງເຂັ້ມງວດ.

ຈະຕ້ອງສືບຕໍ່ປັບປຸງເຈົ້າກຳທຸລະກິດອາຫານໃຫ້ເປັນແບບແຜນຕາມກົດໝາຍ,ຍຶດຖືໃຫ້ມີບັດເບີແລະປາຕັງຢັ້ງຢືນຄັກແນ່,ເພື່ອຮັບປະກັນເຈົ້າກຳທຸລະກິດມີຄຸນສົມບັດແລະມີປະສິດທິຜົນຊອບດ້ວຍກົດໝາຍຢ່າງແທ້ຈິງ.ຕ້ອງບຳເພັນເຄືອຂ່າຍຕິດຕາມຄຸ້ມຄອງອາຫານປອດໄພ,ເພີ່ມທະວີການປະເມີນຄວາມສ່ຽງທາງດ້ານອາຫານປອດໄພ,ສ້າງກົນໄກແຈ້ງເຫດແລະຈັດການໃນພາວະສຸກເສີນໃຫ້ຄົບຖ້ວນ,ຍົກສູງລະດັບຕິດຕາມຄຸ້ມຄອງອາຫານປອດໄພແລະຄວາມສາມາດແກ້ໄຂກໍລະນີບັງເອີນຕື່ມອີກ,ຕັ້ງໜ້າຊຸກຍູ້ການສ້າງສັນກົນໄກຕິດຕາມຄຸ້ມຄອງທີ່ມີປະສິດທິພາບຍາວນານ.ຕ້ອງບຳເພັນລະບົບອະນຸຍາດນຳເຂົ້າຕະຫຼາດກ່ຽວກັບຄຸນະພາບສິນຄ້າໃຫ້ສົມບູນ,ເພີ່ມທະວີການກວດສອບຄຸນະພາບສິນຄ້າໂດຍເອົາອາຫານການກິນເປັນຈຸດສຸມໃນຂົງເຂດຈໍລະຈອນແຈກຢາຍ,ທຳການກວດສອບຄຸນະພາບສິນຄ້າດ້ວຍຄວາມໄວ,ຄົ້ນພົບແລະຈັດການສິນຄ້າທີ່ມີບັນຫາຄຸນະພາບໃຫ້ທ່ວງທັນເວລາ;ຕັ້ງຈຸດລາຍງານຂໍ້ມູນກວດສອບຄຸນະພາບສິນຄ້າໂດຍກົງໃນທົ່ວປະເທດ,ຕິດຕາມກວດສອບຈຸດປະຈຳ,ສ້າງຖານຂໍ້ມູນຕິດຕາມຄຸນະພາບສິນຄ້າ,ຍົກສູງລະດັບຕິດຕາມຄຸ້ມຄອງຄຸນະພາບສິນຄ້າຢ່າງບໍ່ຢຸດຢັ້ງ.





# ແມ່ຍິງຈີນເປັນຜູ້ຊີ້ນຳການຊົມໃຊ້ໃນຄອບຄົວ

## 中国妇女成为家庭消费主导者

据首届中国女性消费高层论坛的相关调查资料表明，中国妇女成为家庭消费的主导者。论坛期间，100 多家与会企业代表在“保障妇女儿童安全消费承诺书”上签字，承诺“用优质合格的产品，用热情周到的服务，满足中国妇女儿童日益增长的消费需求，保障妇女儿童消费安全，实现企业社会效益和经济效益的双赢”。

ຂໍ້ມູນສຳຫຼວດທີ່ກ່ຽວຂ້ອງໃນເວທີປາຖະກະຖາຂັ້ນສູງກ່ຽວກັບການບໍລິໂພກຊົມໃຊ້ຂອງເພດຍິງຈີນໄດ້ສະແດງໃຫ້ຮູ້ວ່າແມ່ຍິງຈີນໄດ້ເປັນຜູ້ຊີ້ນຳການບໍລິໂພກຊົມໃຊ້ໃນຄອບຄົວ.

ອີງຕາມຂໍ້ມູນສຳຫຼວດຫຼ້າສຸດໃນສູນຊີ້ນຳການບໍລິໂພກຊົມໃຊ້ຂອງເພດຍິງຈີນ, ເພດຍິງທີ່ແຕ່ງດອງແລ້ວໃນເມືອງຈີນມີ 77.3% ແມ່ນຕັດສິນຊີ້ຂາດການກິນຢູ່ນຸ່ງຫົ່ມແລະການຈັບຈ່າຍຫາຊື້ເຄື່ອງໃຊ້ສອຍປະຈຳວັນ, ມີເພດຍິງທີ່ແຕ່ງດອງແລ້ວ 22.7% “ເປັນເຈົ້າຕັດສິນໂດຍຕົນເອງ” ໃນເວລາຈ່າຍເງິນກ້ອນໃຫຍ່ສຳລັບຂອງລ້ຳຄ່າໃນຄອບຄົວ, ສ່ວນເພດຍິງທີ່ແຕ່ງດອງແລ້ວເວັ້ນຈາກດັ່ງກ່າວມາສ່ວນໃຫຍ່ກໍ່ມີຜົນສະທ້ອນໃນການຕົກລົງຂັ້ນສຸດທ້າຍຕໍ່ການບໍລິໂພກຊົມໃຊ້ທີ່ສຳຄັນໆໃນຄອບຄົວ.

ຫົວຂໍ້ໃນເວທີປາຖະກະຖາໃນຄັ້ງນີ້ຄື: “ບັນຫາຊົມໃຊ້ປອດໄພຂອງແມ່ຍິງແລະເດັກນ້ອຍຈີນແລະມາດຕາການຕອບໂຕ້”, ສຳມະນາກອນຮ່ວມປະຊຸມເຫັນວ່າ: ເນື່ອງຈາກແມ່ຍິງຈີນນອນຢູ່ຖານະຊີ້ນຳການບໍລິໂພກຊົມໃຊ້ໃນຄອບຄົວ, ເຮັດໃຫ້ແມ່ຍິງແລະເດັກນ້ອຍໃນປະເທດຈີນເກືອບ 8 ຮ້ອຍລ້ານຄົນກາຍເປັນຊຸມຊົນທີ່ມີທ່າແຮງດຶງດູດເອົາຄວາມຕ້ອງການພາຍໃນ, ພ້ອມນີ້ ພວກເຂົາເຈົ້າກໍ່ກາຍເປັນຜູ້ປະສົບໄພຍໄພຈາກສິນຄ້າປອມແປງແລະເສື່ອມຄຸນະພາບຂີ້ລ້າຍຈຳນວນໜຶ່ງ. ຊຸມປີມໍ່ໆມານີ້,



ຍ້ອນຜະລິດຕະພັນທີ່ປອມແປງຂີ້ລ້າຍ, ມີພິດໄພຫຼືມີສານພິດເກີນ ຂີດ, ເປັນເຫດໃຫ້ແມ່ຍິງແລະເດັກນ້ອຍຖືກບາດເຈັບເສຍອົງຄະ ຫລືຈົນເຖິງແກ່ຄວາມຕາຍກໍ່ມີເປັນເນື່ອງນິດ. ສະນັ້ນ ຮັບປະກັນ ການບໍລິໂພກປອດໄພຂອງແມ່ຍິງແລະເດັກໄດ້ກາຍເປັນຫົວ ເລື່ອງໂສກັນແລະສົນໃຈຮ່ວມກັນໃນທົ່ວສັງຄົມ, ແລະກໍ່ແມ່ນ ເນື້ອໃນອັນສຳຄັນປະການໜຶ່ງໃນການສ້າງສັງຄົມທີ່ສະໜິມກົມ ກຽວ. ເນື່ອງຈາກຖານະສຳຄັນຂອງແມ່ຍິງໃນການບໍລິໂພກ, ປົກປ້ອງສິດປະໂຫຍດບໍລິໂພກຂອງແມ່ຍິງແລ້ວ ກໍ່ໝາຍວ່າປົກ ປ້ອງສິດປະໂຫຍດຂອງຜູ້ຊົມໃຊ້ທົ່ວໄປເຊັ່ນກັນ.

ຜູ້ຊ່ຽວຊານນັກປາດແລະນັກທຸລະກິດທີ່ຮ່ວມປະຊຸມເຫັນພ້ອມ ກັນວ່າ: ໃນປະຈຸບັນນີ້ ຂົງເຂດທັງສີ່ດ້ານມັນສະໜິດຕິດພັນກັບ ການຊົມໃຊ້ຂອງແມ່ຍິງແລະເດັກເປັນຕົ້ນຄື: ອາຫານບໍລິໂພກ, ເຄື່ອງສຳອາງ, ຢຸກຢາບຳລຸງແລະການສ້ອມແຊມຕົກແຕ່ງ ເຮືອນຊານບ້ານຢູ່, ມູນເຫດທີ່ບໍ່ຮັບປະກັນຄວາມປອດໄພດັ່ງກ່າວ ທົ່ວສັງຄົມຈະຕ້ອງໄດ້ເພັ່ງເລັງເອົາໃຈໃສ່. ຄວນສ້າງລະບົບຮັບ ປະກັນການຊົມໃຊ້ໂດຍປອດໄພ, ກ່ອນອື່ນຕ້ອງລົງມືເລີ່ມຈາກ ຂອດຜະລິດ, ຕ້ອງລົງມືກວດກາແລະຈັດການຜູ້ຜະລິດແລະຈຳ ໜ່າຍໂດຍບໍ່ມີໃບອະນຸຍາດຢ່າງເຂັ້ມງວດ. ນອກຈາກນີ້ ຕ້ອງ ເພີ່ມທະວີການປະຕິບັດກົດໝາຍໃຫ້ໜັກແໜ້ນ, ເພີ່ມທະວີການ ສ້າງລະບຽບການກວດກາດູແລແລະຄວາມຊື່ສັດໄວ້ເນື້ອເຊື່ອ ໃຈກັນ.

ຜູ້ຕາງໜ້າວິສາຫະກິດທີ່ຮ່ວມປະຊຸມ 100 ກວ່າວິສາຫະກິດ ໄດ້ລົງນາມໃນ "ຄຳໝັ້ນສັນຍາຮັບປະກັນການຊົມໃຊ້ປອດໄພ ຂອງແມ່ຍິງແລະເດັກນ້ອຍ", ສັນຍາວ່າ: "ເພື່ອຕອບສະໜອງ ຄວາມຮຽກຮ້ອງຕ້ອງການຊົມໃຊ້ຂອງແມ່ຍິງແລະເດັກນ້ອຍຈີນ ທີ່ນັບມື້ນັບຂະຫຍາຍເຕີບໂຕ, ຈະນຳເອົາຜະລິດຕະພັນທີ່ມີຄຸນະ ພາບດີຖືກມາດຖານແລະບໍລິການຢ່າງອົບອຸ່ນຮອບຄອບຮັບປະ ກັນການຊົມໃຊ້ປອດໄພຂອງແມ່ຍິງແລະເດັກ, ພ້ອມທັງບັນລຸປະ ສິດທິພາບວິສາຫະກິດສັງຄົມຄວບຄູ່ກັບປະສິດທິຜົນທາງດ້ານ ເສດຖະກິດ.



# ສປຈີນຕັ້ງໜ້າຊຸກຍູ້ການຄ້າ ແບບອໍານວຍຄວາມສະດວກ




## 中国积极推动贸易便利化

世贸组织第六次部长级会议在香港举行。作为助推全球贸易发展的有效途经，贸易便利化成为在香港举行的世贸组织第六次部长级会议的重要议题之一。大会发言以及双边、多边磋商过程中，许多成员代表对这一问题表示了极大关注。

ກອງປະຊຸມຂັ້ນລັດຖະມົນຕີຄັ້ງທີ 6 ຂອງອົງການການຄ້າໂລກໄດ້ຈັດຂຶ້ນທີ່ຮົງກົງ. ເພື່ອໃຫ້ມີຊ່ອງທາງປະສິດທິພາບຊຸກຍູ້ການພັດທະນາການຄ້າໃນທົ່ວໂລກ, ການຄ້າແບບອໍານວຍຄວາມສະດວກເປັນຂໍ້ປະເດັນໜຶ່ງທີ່ສໍາຄັນໃນກອງປະຊຸມຂັ້ນລັດຖະມົນຕີຄັ້ງທີ 6 ຂອງອົງການການຄ້າໂລກທີ່ຈັດຂຶ້ນໃນຮົງກົງ. ຄໍາປາໄສໃນກອງປະຊຸມແລະໃນທ່າມກາງປຶກສາຫາລືກັນລະຫວ່າງທະວິພາຄີແລະພະຫຸພາຄີນັ້ນ ຜູ້ແທນສະມາຊິກຫລາຍທ່ານກໍ່ໄດ້ສະແດງຄວາມເອົາໃຈໃສ່ຕໍ່ບັນຫາດັ່ງກ່າວ.




ທ່ານຢີນລີ່ສຸນ ຫົວໜ້າຫ້ອງການ WTO ກົມໃຫຍ່ດ່ານພາສີຈີນກ່າວວ່າ:ໃນກອງປະຊຸມຮົງກົງ,ກ່ຽວກັບຂໍ້ສະເໜີເພີ່ມທະວີຄວາມໂປ່ງໃສໃນວຽກງານດ່ານພາສີແລະເຮັດໃຫ້ລະບຽບທຳນຽມຜ່ານດ່ານກະທັດລັດງ່າຍດາຍຂອງຈີນໄດ້ຮັບການສະໜັບສະໜູນຈາກຜູ້ແທນຈຳນວນສ່ວນຫຼາຍທີ່ສຸດ.ຕາມທ່ານນາງແນະນຳວ່າ:ລາຍງານກ່ຽວກັບການຄ້າເປັນແບບອຳນວຍຄວາມສະດວກໃນກອງປະຊຸມຮົງກົງນັ້ນ ແມ່ນສະເໜີອອກໃນນາມສະມາຊິກຄົບຄະນະໃນໜ່ວຍຖືຂໍ້ປະເດັນແຕ່ຢ່າງດຽວ,ສ່ວນລາຍງານໃນຂົງເຂດອື່ນ ໆນັ້ນຍ້ອນມີຄວາມບໍ່ລົງຮອຍກັນລະຫວ່າງສະມາຊິກດ້ວຍກັນສະເໜີອອກພຽງແຕ່ເປັນໃນນາມຂອງປະທານໜ່ວຍງານເທົ່ານັ້ນ.ມັນໄດ້ສະແດງໃຫ້ເຫັນຢ່າງເຕັມສ່ວນວ່າ,ຄວາມສຳຄັນຂອງການຄ້າແບບອຳນວຍຄວາມສະດວກໄດ້ຮັບຄວາມເຫັນພ້ອມທົ່ວໄປຈາກສະມາຊິກທີ່ກວ້າງຂວາງ.

ທ່ານນາງຢີນລີ່ສຸນກ່າວວ່າ:ປະເທດຈີນທີ່ເປັນປະເທດການຄ້າທີ 3 ຂອງໂລກ,ມີທ່າທີຂະຫຍັນຫ້າວຫັນຕໍ່ການຊຸກຍູ້ການຄ້າລະຫວ່າງຊາດເປັນແບບອຳນວຍຄວາມສະດວກ,ເພາະວ່າການຄ້າແບບອຳນວຍຄວາມສະດວກບໍ່ພຽງແຕ່ເຮັດໃຫ້ວິສາຫະກິດພາຍໃນປະເທດຫຼາຍກວ່ານີ້ເດີນອອກສູ່ນອກປະເທດແລະສ້າງເງື່ອນໄຂເຂົ້າຮ່ວມການແກ້ງແຍ້ງໃນສາກົນ,ພ້ອມທັງສອດຄ່ອງກັບຄວາມຮຽກຮ້ອງຕ້ອງການໃຫ້ມີປະສິດທິພາບຄຸ້ມຄອງດ່ານຜ່ານແດນ(ຫຼືທ່າເຮືອ)ແລະຊຸກຍູ້ການສ້າງດ່ານພາສີໃຫ້ທັນສະໄໝ.

ປະເທດຈີນໃນນາມເປັນສະມາຊິກໃໝ່ຂອງອົງການການຄ້າໂລກ.ກໍ່ໄດ້ສະແດງຄວາມຈິງໃຈຢ່າງເຕັມສ່ວນທາງດ້ານການຊຸກຍູ້ການຄ້າທົ່ວໂລກເປັນແບບອຳນວຍຄວາມສະດວກ,ແລະໄດ້ທຸ່ມເທເຫື່ອແຮງຂອງຕົນ.ດ່ານພາສີຂອງຈີນໄດ້ຕັ້ງໜ້າສ້າງເງື່ອນໄຂ,ພະຍາຍາມເປີດດ່ານ 24 ຊົ່ວໂມງສຳລັບດ່ານຜ່ານແດນທີ່ຊຸ້ມຂ້ຽວທຸລະການງານ,ເພື່ອຮັບປະກັນໃຫ້ສິນຄ້າຜ່ານດ່ານເດີນແມ່ນແລ່ນສະດວກເປັນປົກກະຕິ.ໃນປະຈຸບັນ,ດ່ານພາສີຜ່ານແດນຫຼືທ່າເຮືອສ່ວນໃຫຍ່ຂອງຈີນໄດ້ຈັດຕັ້ງໜ່ວຍຈັດການສຸກເສີນສຳລັບສິນຄ້າຂາອອກ--ຂາເຂົ້າຂ້າມດ່ານ,ສ່ວນບັນຫາຂັດຂ້ອງເວລາຂ້າມແດນກໍ່ຄົ້ນຄວ້າແກ້ໄຂທັນເວລາ,ພ້ອມທັງໃຫ້ການບໍລິການປຶກສາແກ້ຂໍ້ຂ້ອງໃຈ,ຮັບປະກັນບໍ່ໃຫ້ມີການຕິດຂັດ.

ພ້ອມກັນນີ້,ປະເທດຈີນກຳລັງອອກແຮງສົ່ງເສີມຊຸກຍູ້ການສ້າງສາດ່ານຜ່ານຄອມພິວເຕີ.ໄລ່ມາຮອດເດືອນທັນວາປີ 2005,ວິສາຫະກິດທີ່ເຂົ້າເຄືອຂ່າຍໄດ້ລື່ນກາຍສອງແສນ,ດ່ານຄອມພິວເຕີຂອງຈີນໄດ້ສ້າງເປັນເວທີຂໍ້ມູນຂ່າວສານເອກະພາບທີ່ຂ້າມພະແນກກົມກອງ,ຂ້າມເຂດແລະຂ້າມຂະແໜງວິຊາອາຊີບໃນເບື້ອງຕົ້ນ.

ທ່ານນາງຢີນລີ່ສຸນກ່າວວ່າ:ພາຍຫຼັງນີ້ບໍ່ເທົ່າໃດປີ,ສປຈີນຈະເຮັດໃຫ້ລະບຽບການດ່ານພາສີກະທັດລັດງ່າຍດາຍຕື່ມອີກ,ຕັ້ງໜ້າເຜີຍແຜ່ “ການບໍລິການແບບໜຶ່ງສະຖານີ” ແລະ “ລະບຽບຜ່ານດ່ານປອງດຽວ” ,ເພື່ອເລັ່ງລັດສິນຄ້າຈໍລະຈອນໃຫ້ໄວຂຶ້ນ,ຍົກປະສິດທິພາບການຄ້າໃຫ້ສູງ,ພ້ອມນີ້ເຮັດລະບຽບທຳນຽມຂ້າມແດນໃຫ້ກະທັດລັດງ່າຍດາຍ,ຊຸກຍູ້ແຜນການນຳໃຊ້ບັດເດີນທາງທຸລະກິດການຄ້າ,ຫລຸດຜ່ອນມາດຕາການຈຳກັດທີ່ບໍ່ຈຳເປັນເພື່ອສ້າງເງື່ອນໄຂອັນສະດວກກວ່າເກົ່າໃຫ້ແກ່ນັກທຸລະກິດທັງຫຼາຍສັນຈອນໄປມາ.





### 中国农垦已具备率先实现现代化的优势和条件

首届中国农垦发展论坛——现代农业发展专题会在广西南宁举行，来自中国农业部、财政部及国内外金融、机械、食品等行业专家及农垦系统代表就新时期农垦现代农业发展战略进行了深入的探讨和广泛的交流。与会代表指出，就目前中国农业整体发展水平来看，农垦已具备了率先建设现代农业的优势和条件。

# ການບຸກເບີກຜະລິດທາງກະເສດຂອງຈີນໄດ້ມີທ່າແຮງ ແລະເງື່ອນໄຂນຳໜ້າເພື່ອບັນລຸແບບທັນສະໄໝ

ເວທີປາຖະກະຖາພັດທະນາການບຸກເບີກຜະລິດທາງກະເສດຂອງຈີນສະໄໝປະຖົມມະເລີກ--ກອງປະຊຸມຫົວຂໍ້ສະເພາະກິດພັດທະນາກະສິກຳທັນສະໄໝໄດ້ຈັດຂຶ້ນທີ່ນານໜິງກວາງຊີສປຈີນ,ນັກຊ່ຽວຊານແລະຜູ້ແທນໃນສາຍໃຍການບຸກເບີກຜະລິດທີ່ມາຈາກກະຊວງກະສິກຳ,ກະຊວງການເງິນແລະພາກວິຊາອາຊີບການເງິນ,ກົນຈັກແລະອາຫານພາຍໃນແລະຕ່າງປະເທດໄດ້ພ້ອມກັນສຳມະນາຄົ້ນຫາແລະແລກປ່ຽນຢ່າງກວ້າງຂວາງກ່ຽວກັບຍຸດທະສາດພັດທະນາກະສິກຳທັນສະໄໝທີ່ບຸກເບີກຜະລິດທາງກະເສດໃນໄລຍະໃໝ່.ຜູ້ແທນທີ່ຮ່ວມປະຊຸມຊີ້ອອກວ່າ:ເມື່ອສັງເກດເບິ່ງລະດັບພັດທະນາກວມລວມຂອງກະສິກຳຈີນໃນປະຈຸບັນແລ້ວເຫັນວ່າ,ການບຸກເບີກຜະລິດທາງກະເສດໄດ້ມີທ່າແຮງແລະເງື່ອນໄຂນຳໜ້າສ້າງສາກະສິກຳທັນສະໄໝ.



ຜ່ານການລົ້ມລ້າງຍົກເລີກການສະສົມອາຫານຂອງພາກປະຕິບັດຕັ້ງ 50 ກວ່າປີມາ, ສາຍໃຍການບຸກເບີກຜະລິດທາງກະເສດຂອງຈີນໄດ້ຮັບປະສິດທິຜົນເປັນຢ່າງດີໃນທາງດ້ານການສ້າງສາແລະພັດທະນາກະສິກຳ. ທຸລະກິດເປັນແບບຂະໜາດແລະກະເສດສຸມຂອງກະສິກຳທີ່ບຸກເບີກຜະລິດທາງກະເສດຂອງຈີນກໍ່ຄືປະສິດທິຜົນທາງເສດຖະກິດລ້ວນແຕ່ນອນຢູ່ລະດັບຄ່ອນຂ້າງສູງ. ໃນທາງດ້ານລະບົບກົນຈັກກະສິກຳ, ຂະບວນຜະລິດພືດລະປູກສຳຄັນເປັນຕົ້ນຄືເຂົ້າເປຼ, ເຂົ້ານາ, ເຂົ້າສາລີ, ຖົ່ວເຫຼືອງແລະຝ້າຍກໍ່ໄດ້ບັນລຸລະບົບຜະລິດທີ່ເປັນລະບົບກົນຈັກໂດຍພື້ນຖານ; ໃນທາງດ້ານການນຳເຂົ້າ, ປະດິດຄິດສ້າງໃໝ່ແລະເຜີຍແຜ່ວິຊາການເຕັກນິກ, ເຕັກໂນໂລຊີໃໝ່ຊັ້ນສູງທັນສະໄໝ ກໍ່ໄດ້ໝູນໃຊ້ເຂົ້າເຂດບຸກເບີກຜະລິດສ່ວນໜຶ່ງປະກົດວ່າມີປະສິດທິຜົນເບື້ອງຕົ້ນ; ໃນທາງດ້ານນຳໃຊ້ເຕັກນິກຂໍ້ມູນຂ່າວສານ, ວິສາຫະກິດບຸກເບີກຜະລິດສ່ວນໜຶ່ງເລີ່ມນຳໃຊ້ລະບົບ 3S, ກະສິກຳແມ່ນຍຳໄດ້ມີການຂະຫຍາຍຕົວຄ່ອນຂ້າງໄວ; ໃນທາງດ້ານເຕັກນິກປຸງແຕ່ງຜະລິດຕະພັນກະສິກຳ, ມູນສ່ວນບັນຈຸເຕັກນິກແລະຄຸນຄ່າເສີມຂອງຜະລິດຕະພັນກໍ່ຖືກເຊີດຊູໃຫ້ສູງຂຶ້ນ; ໃນທາງດ້ານການຜະລິດກະສິກຳເປັນແບບມາດຖານ, ເຂດບຸກເບີກຜະລິດສ່ວນໃຫຍ່ໄດ້ບັນລຸເປັນແບບມາດຖານຕາມທຸກຂັ້ນທຸກດ້ານແລະທຸກໄລຍະ; ການວາງແຜນເຂດກະສິກຳເປັນແບບວິຊາຊີບໄດ້ເປັນຮູບເປັນຮ່າງຂຶ້ນໃນເບື້ອງຕົ້ນ.

ທ່ານຢາງຊາວພິນຫົວໜ້າກົມບຸກເບີກຜະລິດທາງກະເສດຂອງກະຊວງກະສິກຳຈີນໄດ້ປະກອບຄຳຄິດເຫັນວ່າໃນໄລຍະໃໝ່ພາກບຸກເບີກຜະລິດທາງກະເສດຕ້ອງອອກແຮງພະຍາຍາມເສີມຂະຫຍາຍ "ສີ່ບົດບາດ" ເຊັ່ນ: ບົດບາດສາທິດສ້າງສາກະສິກຳທັນສະໄໝ; ບົດບາດຫຼັກແຫຼ່ງພັດທະນາຜະລິດຕະພັນກະສິກຳທີ່ມີຄຸນະພາບດີ; ບົດບາດນຳພາກະສິກຳຈີນເຂົ້າຮ່ວມການແກ່ງແຍ່ງໃນສາກົນແລະບົດບາດຊຸກຍູ້ສົ່ງເສີມການສ້າງສາສັງຄົມພໍຢູ່ພໍກິນໃນຊົນນະບົດຮອບດ້ານ, ເພີ່ມລາຍຮັບແກ່ຊາວກະສິກອນແລະປົກປັກຮັກສາຄວາມຮຸ່ງເຮືອງສະຖຽນລະພາບໃນເຂດຊົນເຜົ່າຕາມເຂດຊາຍແດນໃຫ້ໝັ້ນຄົງສະຫງົບສຸກ.



# ຈີນສ້າງສຳເລັດສູນກອບກູ້ແພ່ພັນສັດປ່າທີ່ໃຫຍ່ສຸດ



## 中国建成最大的野生动物救护繁育中心

中国规模最大的野生动物救护繁育中心在北京市顺义区落成并投入使用。这个新建成的中心位于北京市潮白河畔，占地总面积 16 公顷，建有野生动物医院 381 平方米，各类野生动物笼舍 2000 多平方米，具有野生动物救护、繁育、疫源疫病监测、科研教学、动物保护宣传教育和国内、国际交流与合作六大功能。

ສູນກອບກູ້ແພ່ພັນສັດປ່າທີ່ມີຂະໜາດໃຫຍ່ສຸດຂອງຈີນໄດ້ສ້າງສຳເລັດລົງໃນເຂດສຸນຢີ້ນະຄອນປັກກິ່ງແລະໄດ້ເລີ່ມນຳໃຊ້. ສູນທີ່ສ້າງຂຶ້ນໃໝ່ນີ້ຕັ້ງຢູ່ແຄມນ້ຳສ່າວປ່າຍນະຄອນປັກກິ່ງ, ກວມເນື້ອທີ່ທັງໝົດ 16 ເຮັກຕາ, ສ້າງໂຮງໝໍສັດປ່າ 381 ຕາແມັດ, ຕູ້ມຍາງຄອກສັດປະເພດຕ່າງ ໆ 2000 ກ່ວາຕາແມັດ, ເຊິ່ງມີສັບພະຄຸນ 6 ປະການສຳລັບສັດປ່າໄດ້ແກ່ການກອບກູ້, ແພ່ພັນ, ການຕິດຕາມຄວບຄຸມພະຍາດແລະແຫຼ່ງພະຍາດ, ການສຶກສາຄົ້ນຄ້ວາທາງວິທະຍາສາດ, ການໂຄສະນາສຶກສາອົບຮົມອະນຸຮັກສັດປ່າແລະການແລກປ່ຽນແລະຮ່ວມມືລະຫວ່າງພາຍໃນປະເທດກໍ່ຄືລະຫວ່າງຊາດ.

ຕາມທ່ານຊືກູ່ຍເຊັນ ຮອງຫົວໜ້າກົມປ່າໄມ້ນະຄອນປັກກິ່ງແນະນຳໃຫ້ຮູ້ວ່າ: ນີ້ເປັນໂຄງການຈຸດສຸມໃນ "ໂຄງການກໍ່ສ້າງເຂດອະນຸຮັກສັດປ່າແລະເຂດອະນຸຮັກທຳມະຊາດ" ທີ່ນອນຢູ່ 6 ໂຄງການໃຫຍ່ການປ່າໄມ້ຂອງກົມປ່າໄມ້ແຫ່ງຊາດຈີນ, ທ່ານກ່າວວ່າ: "ມັນສະແດງເຖິງຄຳໝັ້ນສັນຍາທີ່ປັກກິ່ງສະເໜີອອກຈະຕັ້ງໜ້າອະນຸລັກຮັກສາສັດປ່າໃນຂະໜະທີ່ຍື່ນຄຳຮ້ອງຂໍຈັດທຳງານກິລາໂອລິມປິກ, ແລະກໍ່ແມ່ນຄວາມຈຳເປັນທີ່ສ້າງນະຄອນຫຼວງໃຫ້ກາຍເປັນໂຕເມືອງສາກົນແລະໂຕເມືອງນິເວດວິທະຍາ."

ທ່ານຈາງຈື້ໜິງຫົວໜ້າສູນກອບກູ້ແພ່ພັນສັດປ່ານະຄອນປັກກິ່ງເວົ້າວ່າ: ແຕ່ລະປີ ນະຄອນປັກກິ່ງຈະຕ້ອງກອບກູ້ຊ້ວານຊູສັດປ່າໃນລະຫວ່າງ 2000 ກວ່າໂຕ. ໃນປະຈຸບັນ, ສູນພວກເຮົາໄດ້ຮັບມາ 20 ກວ່າຊະນິດ, ລວມມີນົກປ່າ 800 ກວ່າໂຕ, ເຊິ່ງພາກບໍລິຫານທາງກົດໝາຍຮິບເອົາມາຈາກບັນດາຕະຫຼາດເປັນຕົ້ນແມ່ນໄລຍະຫວ່າງບໍ່ດົນເພື່ອປ້ອງກັນໂຣກໄຂ້ຫວັດສັດປີກແຜ່ລະບາດຮ້າຍແຮງ.



## 中国社区志愿者人数达 1600 多万人

目前，中国社区志愿者组织约有 75000 个，社区志愿者人数已达 1600 多万人。中国许多城市已建立了多种形式的社区服务志愿者活动的组织，并制定了有关章程和管理办法。



# ຈຳນວນຜູ້ອາສາສະໝັກໃນຄຸ້ມເຂດປະເທດຈີນມີຮອດ 16 ລ້ານຄົນ

ປະຈຸບັນນີ້, ອົງການຈັດຕັ້ງຜູ້ອາສາສະໝັກໃນຄຸ້ມເຂດປະເທດຈີນປະມານມີ 75 ພັນອົງການ. ຫຼາຍໂຕເມືອງໃນປະເທດຈີນໄດ້ສ້າງຕັ້ງອົງການເຄື່ອນໄຫວຜູ້ອາສາສະໝັກບໍລິການໃນຄຸ້ມເຂດທີ່ມີຫຼາຍຮູບການ, ແລະໄດ້ວາງຂໍ້ລະບຽບທີ່ກ່ຽວຂ້ອງແລະວິທີຄຸ້ມຄອງ. “ໄປພ້ອມ ໆກັບການພັດທະນາອາສາສະໝັກບໍລິການ, ອົງການຈັດຕັ້ງຜູ້ອາສາສະໝັກປະເທດຈີນໄດ້ຄ່ອຍ ໆ ບຳເພັນລະບອບການຈັດຕັ້ງແລະຂໍ້ລະບຽບການເຄື່ອນໄຫວໃຫ້ສົມບູນ, ເລີ່ມມີກອງປະຊຸມສະໄໝສາມັນ, ຄ່ອຍໆກ້າວສູ່ແບບແຜນເທື່ອລະກ້າວ.” ທ່ານມາເສວຍລີ ຮອງປະທານສະມາຄົມກິດຈະການສັງຄົມຈີນແນະນຳໃຫ້ຊາບວ່າ: “ເດີມທີການເຄື່ອນໄຫວອາສາສະໝັກບໍລິການສຳຄັນແມ່ນຊ່ວຍເຫຼືອຜູ້ເຖົ້າຜູ້ແກ່, ຜູ້ອ່ອນເປ້ຍເພຍແຮງ, ຜູ້ເຈັບປ່ວຍຫຼືພິການແກ້ໄຂບາງຂໍ້ຫຍຸ້ງຍາກໃນຊີວິດການເປັນຢູ່, ແຕ່ມາດຽວນີ້, ຜູ້ອາສາສະໝັກໄດ້ຂະຫຍາຍຂັ້ນຕອນຈາກການອຸທິດແຕ່ຢ່າງດຽວ, ໄປສູ່ຂັ້ນຕອນໝູນໃຊ້ຜົນລາຍຮັບຈາກການບໍລິການທີ່ມີຄ່າຕອບແທນນັ້ນ ມາອູ້ມຊູການບໍລິການທີ່ບໍ່ຕ້ອງເສຍຄ່າ.”

ຕາມທີ່ໄດ້ຊາບມາ, ສະເລ່ຍອັດຕາຜູ້ຮ່ວມການເຄື່ອນໄຫວອາສາສະໝັກບໍລິການໃນໂລກ 10%, ປະເທດທີ່ຈະເລີນ 30% ຫາ 40%, ສ່ວນອັດຕາຜູ້ຮ່ວມຂອງພົນລະເມືອງໂຕເມືອງປະເທດຈີນພຽງແຕ່ 3%. ທ່ານລີເສວຍຈີ ລັດຖະມົນຕີກະຊວງກິດຈະການພົນລະເມືອງຊີ້ອອກວ່າ: ເບິ່ງກວມແລ້ວ, ການເຄື່ອນໄຫວຜູ້ອາສາສະໝັກບໍລິການຄຸ້ມເຂດຂອງປະເທດຈີນຍັງຢູ່ຂັ້ນຕອນເບື້ອງຕົ້ນທີ່ພັດທະນາ, ຖ້າຈະພ້ອມກັນສ້າງຖັນແຖວຜູ້ອາສາສະໝັກບໍລິການຄຸ້ມເຂດທີ່ໃຫຍ່ໂຕ, ລັດຖະບານຈະຕ້ອງໄດ້ເສີມຂະຫຍາຍບົດບາດຊີ້ນຳຢ່າງເຕັມສ່ວນ, ສ່ວນອົງການຈັດຕັ້ງປົກຄອງຕົນເອງຄຸ້ມເຂດກໍ່ຕ້ອງເສີມຂະຫຍາຍບົດບາດເຊັ່ນກັນ ເພື່ອສະໜັບສະໜູນອູ້ມຊູແລະເອົາໃຈໃສ່ບຳລຸງກໍ່ສ້າງຖັນແຖວຜູ້ອາສາສະໝັກໃຫ້ຂະຫຍາຍຕົວເຕີບໃຫຍ່.

## 非洲国家的趣称及由来

非洲由于独特的自然地理环境和富饶的自然资源以及特殊的社会历史发展因缘的影响，不少国家都有着十分有趣的别称。



# ແຫຼ່ງມາແລະຊື່ມ່ວນ ໆ ຂອງປະເທດອາຟຣິກາ

ເນື່ອງຈາກສະພາບແວດລ້ອມພູມສາດທຳມະຊາດທີ່ເປັນເອກະລັກສະເພາະຂອງທະວີບອາຟຣິກາແລະຊັບພະຍາກອນທຳມະຊາດທີ່ອຸດົມສົມບູນຕະຫຼອດເຖິງຜົນສະທ້ອນຈາກເງື່ອນໄຂປະຫວັດສາດສັງຄົມພິເສດ, ມີຫຼາຍປະເທດກໍ່ມີຊື່ມ່ວນໆຕ່າງຫາກເຊັ່ນວ່າ:

“ອານາຈັກຍອງຝ້າຍຍາວ” --ເອຢິບ. ຍອງຝ້າຍຍາວຂອງເອຢິບບໍ່ພຽງແຕ່ຄຸນະພາບດີເທົ່ານັ້ນ,ຍອດ



ຜະລິດຕະພາບກວມຜະລິດຕະພາບ 1 ສ່ວນ 3 ຂອງໂລກ,ເປັນປະເທດທີ່ຜະລິດຍອງຝ້າຍຍາວຫຼາຍກວ່າໝູ່ໃນໂລກ.

"ອານາຈັກທົ່ງຫຍ້າອັນຟາ" --ອານເຊລີ. ປະເທດອານເຊລີຜະລິດວັດຖຸດິບເຮັດເຈ້ຍມີຄຸນະພາບດີ--ຫຍ້າອັນຟາ(Alfa), ປະລິມານຜະລິດຫຍ້າອັນຟາຢືນຢູ່ອັນດັບໜຶ່ງໃນໂລກ.

"ອານາຈັກແຮ່ຟົດຟໍ" --ມາລົກ. ປະລິມານສະສົມແຮ່ຟົດຟໍປະເທດມາລົກມີຮອດ 50 ຕື້ກວ່າໂຕນ,ກວມຍອດປະລິມານສະສົມຂອງໂລກ 3ສ່ວນ 4,ປະລິມານສົ່ງອອກກວມຍອດປະລິມານສົ່ງອອກຂອງໂລກ 40%,ນອນຢູ່ອັນດັບໜຶ່ງຂອງໂລກ.

"ປະເທດພູພຽງ" --ເອທີໂອປີ. ດິນແດນພາຍໃນປະເທດມີ 2ສ່ວນ 3 ເປັນພູພຽງ ສະເລ່ຍມີຄວາມສູງລະດັບນ້ຳທະເລ 2500-3000 ແມັດ,ເປັນປະເທດທີ່ສະເລ່ຍມີຄວາມສູງສຸດໃນອາຟຣິກກາ.

"ປະເທດປໍໄຊແຊນ(sisal)ແລະຄະໂລວ(clove)" --ຕັງຊານີ. ປະເທດນີ້ເຄີຍເປັນປະເທດທີ່ຜະລິດແລະສົ່ງອອກປໍໄຊແຊນຫລາຍທີ່ສຸດໃນໂລກ,ພາຍຫຼັງປີ 1970,ຜະລິດຕະພາບປໍໄຊແຊນໄດ້ຄ່ອຍ ໆຫລຸດລົງ,ແຕ່ຜະລິດຕະພາບຄະໂລວຍັງກວມຍອດຜະລິດຕະພາບໃນໂລກ 80%ຂຶ້ນເມືອ,ເປັນປະເທດທີ່ຜະລິດແລະສົ່ງອອກຄະໂລວຫຼາຍທີ່ສຸດໃນໂລກ.

"ປະເທດຖົ່ວດິນ" --ເຊເນການ. ຜະລິດຕະພາບໝາກຖົ່ວດິນນອນຢູ່ອັນດັບ 5 ໃນໂລກ,ແຕ່ຜະລິດຕະພາບສະເລ່ຍໃສ່ຫົວຄົນພັດນອນຢູ່ອັນດັບໜຶ່ງໃນໂລກ,ປະລິມານສົ່ງອອກນ້ຳມັນຖົ່ວດິນກໍ່ນອນຢູ່ອັນດັບໜຶ່ງໃນໂລກ.

"ອານາຈັກທອງຄຳ" --ອາຟຣິກກາໃຕ້. ປະລິມານສະສົມຄຳປະມານ 25ພັນໂຕນ,ກວມຍອດປະລິມານສະສົມຂອງໂລກ 60%. ຕັ້ງແຕ່ປີ 1898 ເປັນຕົ້ນມາ,ຜະລິດຕະພາບທອງຄຳນອນຢູ່ອັນດັບໜຶ່ງໃນໂລກຕະຫຼອດມາ.ຊຸມປີມໍ່ ໆມານີ້,ຜະລິດຕະພາບທອງຄຳປະຈຳປີປະມານ 700ໂຕນ,ກວມຍອດຜະລິດຕະພາບໃນໂລກປະມານ 2ສ່ວນ 3.

"ສຸອິດໃນອາຟຣິກກາ" --ເລໂຊໂຕ. ເປັນພື້ນທີ່ພູຜາໄກຈາກທະເລທີ່ເປັນພາກພື້ນສູງສຸດຂອງພາກໃຕ້ອາຟຣິກກາ,ມີທັງຈອມດອຍທີ່ສະຫງ່າຜ່າເຜີຍ,ແລະມີທັງເຂດຮ່ອມຫ້ວຍຫຸບເຂົາແລະເປີ້ນພູທີ່ຮົ່ມເຢັນໄປດ້ວຍຕົ້ນໄມ້ຂຽວອົ່ງ ໆ,ທິວທັດແສນງົດງາມ,ທຸລະກິດການທ່ອງທ່ຽວກໍ່ຈະເລີນທີ່ສຸດ.

"ປະເທດປ່າດົງພົງໄພ" --ກາບົງ. ລະດັບຄວາມປົກຫຸ້ມຂອງປ່າໄມ້ 77%,ນອນຢູ່ອັນດັບໜຶ່ງໃນອາຟຣິກກາ.



## 老挝积极利用南博会拓展经贸合作

老挝贸易促进委员会副主席阿努蒙 · 吉迪拉表示，老挝将积极利用在广西南宁举行的第二届中国－东盟博览会加强与其他各国的联系，从双边及多边促进经贸合作，把更多的外国游客特别是中国游客吸引到老挝游览观光。

ທ່ານອານຸມອນ ຮອງປະທານຄະນະກຳມະການສົ່ງເສີມການຄ້າລາວສະແດງວ່າ: ລາວຈະຕັ້ງໜ້ານຳໃຊ້ງານນິທັດສະການຈີນ--ອາຊຽນສະໄໝທີ 2 ທີ່ຈັດຂຶ້ນຢູ່ນານໜິງກວາງຊີ,ເພີ່ມທະວີການຕິດຕໍ່ກັບບັນດາປະເທດອື່ນ ໆ,ສົ່ງເສີມການຮ່ວມມືເສດຖະກິດການຄ້າຈາກທະວິພາຄີແລະພະຫຸພາຄີ,ດູດດຶງເອົານັກທ່ອງທ່ຽວຕ່າງປະເທດ ໂດຍສະເພາະແມ່ນນັກທ່ອງທ່ຽວຈີນໄປທ່ອງທ່ຽວທັດສະນາຈອນໃນເມືອງລາວໃຫ້ຫຼາຍກວ່ານີ້.

ງານນິທັດສະການນານໜິງຄັ້ງນີ້,ວິສາຫະກິດເຂົ້າຮ່ວມວາງສະແດງຂອງຝ່າຍລາວມີ 26 ວິສາຫະກິດ,ໃນນັ້ນລວມທັງ 13 ບໍລິສັດທ່ອງທ່ຽວ.ໃນງານນິທັດສະການນານໜິງ,ຜະລິດຕະພັນຍອດນິຍົມເຊັ່ນ: ຜັດນິນຈີນດາ,ເຄື່ອງສິລະປະຫັດຖະກຳແລະເຄື່ອງເຟີນີເຈີ ທີ່ຜະລິດຈາກເມືອງລາວໄດ້ວາງສະແດງຕໍ່ແຂກຄົນທີ່ມາຈາກປະເທດຕ່າງ ໆ.ທ່ານອານຸມອນສະແດງວ່າ: ໃນໄລຍະງານນິທັດສະການ,ວິສາຫະກິດຝ່າຍລາວໄດ້ຮ່ວມການເຄື່ອນໄຫວວາງສະແດງຕ່າງ ໆພ້ອມທັງຈັດງານແນະນຳສະພາບແວດລ້ອມລົງທຶນແລະແນະນຳພະລັງບົ່ມຊ້ອນຂອງການທ່ອງທ່ຽວໃນເມືອງລາວ.ຫ້ອງ ໂຖງວາງສະແດງຂອງປະເທດລາວ ສຳຄັນແມ່ນວາງສະແດງບູຮານສະຖານປະຫວັດສາດອັນມັ່ງມູນແລະພູມພາບທຳມະຊາດທີ່ສວຍສົດງົດງາມ,ພຽບພ້ອມດ້ວຍເມືອງເກົ່າແກ່ຫຼວງພະບາງມໍລະດົກທາງດ້ານວັດທະນະທຳຂອງ ໂລກເປັນຕົ້ນ.ນອກຈາກການເຄື່ອນໄຫວສົ່ງເສີມການທ່ອງທ່ຽວແລ້ວ,ວິສາຫະກິດຝ່າຍລາວຍັງຈະສະເໜີ ໂຄງການຮ່ວມມືພັດທະນາຊັບພະຍາກອນເປັນຈຸດສຸມອີກ,ລວມທັງ ໂຄງການຂຸດຄົ້ນແລະຂຸດຄົ້ນແຮ່ສັງກະສີ.




# ສປປລາວຕັ້ງໜ້ານຳໃຊ້ງານນິທັດສະການນານໜິງ ເປີດກວ້າງການຮ່ວມມືເສດຖະກິດການຄ້າ



# ຢູນນານຈະຕັ້ງສູນເຝິກອົບຮົມພາສາຈີນຢູ່ລາວ

## 云南将在老挝设立汉语培训中心

在获得中央政府支持后，云南将与老挝合作设立汉语培训中心。老挝将根据自己的实际能力，帮助云南民族大学开展老挝语教学。云南也愿意协助老方培训汉语教师和编制汉语教材。

ການປະຊຸມຄັ້ງທີ 2 ຂອງໜ່ວຍງານຮ່ວມມືຢູນນານ--ພາກເໜືອລາວໄດ້ໄຂຂຶ້ນທີ່ຄຸນໝິງເປີດເຜີຍວ່າ ສປປລາວແລະພາກສ່ວນກ່ຽວຂ້ອງຢູນນານຈະຮ່ວມມືຕັ້ງສູນເຝິກອົບຮົມພາສາຈີນຢູ່ລາວ.

ພາຍຫຼັງໄດ້ຮັບການສະໜັບສະໜູນຈາກລັດຖະບານກາງແລ້ວ,ຢູນນານຈະຮ່ວມມືກັບຝ່າຍລາວຕັ້ງສູນເຝິກອົບຮົມພາສາຈີນ.ອີງຕາມຄວາມສາມາດຕົວຈິງຂອງຕົນ,ຝ່າຍລາວຊ່ວຍເຫຼືອມະຫາວິທະຍາໄລຊົນເຜົ່າຢູນນານເປີດການສິດສອນພາສາລາວ.ຝ່າຍຢູນນານກໍ່ຍິນດີຊ່ວຍຝ່າຍລາວເຝິກອົບຮົມຄູສອນພາສາຈີນແລະແຕ່ງປຶ້ມສອນພາສາຈີນ.ຢູນນານຍິນດີຕ້ອນຮັບນັກຮຽນນັກສຶກສາທີ່ມາສຶກສາຢູ່ຕ່າງປະເທດຂອງລາວ,ແລະຈະສະໜອງທຶນເລົ່າຮຽນໃຫ້ແກ່ຜູ້ຮຽນເກັ່ງສ່ວນໜຶ່ງ.ຝ່າຍລາວກໍ່ຍິນດີຕ້ອນຮັບນັກຮຽນນັກສຶກສາຢູນນານໄປສຶກສາຢູ່ເມືອງລາວ.

ຢູນນານມີທ່າດີທາງຂະແໜງສຶກສາແລະທ່າດີທາງພູມສາດທີ່ເຊື່ອມໂຍງກັບລາວແລະອາຊີອາຄະເນ,ໄປພ້ອມ ໆກັບການພັດທະນາຄືບໜ້າຂອງການສ້າງເຂດການຄ້າເສລີຈີນ--ອາຊຽນ,ການແລກປ່ຽນເສດຖະກິດແລະວັດທະນະທຳລະຫວ່າງລາວ--ຈີນສອງຝ່າຍກໍ່ນັບມື້ນັບຫລາຍຂຶ້ນຊຸກໄຊ້.ພາສາຈີນອັນເປັນພາສາໜຶ່ງໃນພາສາທາງການຂອງສະຫະປະຊາຊາດແລະພາສາໃນການງານ,ແລະທັງເປັນພາສາທີ່ນຳໃຊ້ກັນຫຼາຍທີ່ສຸດໃນໂລກປະຈຸບັນ,ຢູ່ທະວີບອາຊີ,ໄປຄຽງຄູ່ກັບການເພີ່ມທະວີເສດຖະກິດການຄ້າລະຫວ່າງປະເທດຈີນແລະປະເທດອາຊີກໍ່ຄືການພັດທະນາທຸລະກິດທ່ອງທ່ຽວ,ຜູ້ຄົນທີ່ສຶກສາຮ່ຳຮຽນພາສາຈີນໃນປະເທດອາຊີອາຄະເນແລະສປປລາວ ກໍ່ນັບວັນນັບຫລາຍຂຶ້ນເປັນເທື່ອລະກ້າວ.

# ຢູນນານກັບຫຼວງພະບາງສປປລາວຮ່ວມ ໄມ້ຮ່ວມມືພັດທະນາການທ່ອງທ່ຽວ



ປີ 2005,ຢູນນານໄດ້ລົງນາມເຊັນສັນຍາຮ່ວມມືການທ່ອງທ່ຽວສະບັບໜຶ່ງກັບແຂວງຫຼວງພະບາງຂອງລາວເປັນທາງການທີ່ງານແລກປ່ຽນການຄ້າທ່ອງທ່ຽວສາກົນຄຸນໝິງສປຈີນ,ສອງຝ່າຍຈະເປີດການຮ່ວມມືໃນພາຍຂ້າງໜ້າ.

ທ່ານ ຢີຟານ ຮອງຫົວໜ້າພະແນກທ່ອງທ່ຽວແຂວງຢູນນານ

## 云南与老挝琅勃拉邦携手开发旅游

云南省在 2005 中国昆明国际旅游交易会上正式与老挝琅勃拉邦省在一份旅游合作协议上签字，双方将在未来展开合作。





ກ່າວວ່າ:ແຂວງຢູນນານແລະແຂວງຫຼວງພະບາງມີພູຜາແມ່ນ້ຳຕິດຈອດກັນ,ລ້ວນແຕ່ມີຊັບພະຍາກອນທ່ອງທ່ຽວອັນມັ່ງມູນແລະວັດທະນະທຳຊົນເຜົ່າທີ່ຮຸ່ງເຮືອງສົດໃສ. ໂຄງການ "ເຂດທ່ອງທ່ຽວສີ່ລ່ຽມຄຳ" ໂດຍແຂວງຢູນນານນຳໜ້ານັ້ນກໍ່ພົວພັນເຖິງໂຄງການທ່ອງທ່ຽວສຳຄັນທີ່ພັດທະນາກ່ອນໝູ່ພາຍຂ້າງໜ້າສິບປີລະຫວ່າງແຂວງຢູນນານກັບແຂວງຫຼວງພະບາງ. ຜ່ານການປຶກສາຫາລືທັງສອງຝ່າຍ, ສອງແຂວງຈະເພີ່ມທະວີການຮ່ວມມືທາງດ້ານການໂຄສະນາຊຸກຍູ້ການຈຳໜ່າຍ, ການເຝິກອົບຮົມບຸກຄະລາກອນທ່ອງທ່ຽວ, ການພັດທະນາຜະລິດຕະພັນທ່ອງທ່ຽວ, ກໍ່ສ້າງໂຄງການ "ເສັ້ນທາງທ່ອງທ່ຽວທີ່ລ້ຳຄ່າແມ່ນ້ຳລານຊາງ--ແມ່ນ້ຳຂອງ" ແລະແຫຼ່ງຫຼືເຂດທິວທັດທ່ອງທ່ຽວ.

ພາຍໃນແຂວງຫຼວງພະບາງມີພະລາຊະວັງທີ່ຖືກຮັບຮອງເປັນມໍລະດົກດ້ານວັດທະນະທຳຂອງໂລກ, ແຕ່ລະປີຢ່າງໜ້ອຍກໍ່ດຶງດູດນັກທ່ອງທ່ຽວເອີລົບ 1--2ແສນຄົນ. ທ່ານຄຳເຜີຍ ຫົວໜ້າພະແນກການທ່ອງທ່ຽວແຂວງດັ່ງກ່າວເວົ້າວ່າ, ແຂວງຫຼວງພະບາງເອົາໃຈໃສ່ຕະຫຼາດທ່ອງທ່ຽວຂອງຢູນນານເປັນຢ່າງຍິ່ງ, ຫວັງຈະຮຽນເອົາປະສົບປະການຈາກຢູນນານໃຫ້ຫຼາຍ, ເພື່ອອອກແຮງຊຸກຍູ້ທຸລະກິດທ່ອງທ່ຽວຂອງລາວໃຫ້ຂະຫຍາຍຕົວພັດທະນາ. ຫວ່າງກ່ອນນີ້ຢູນນານເຄີຍໄດ້ຊ່ວຍແຂວງຫຼວງພະບາງເຝິກອົບຮົມບຸກຄະລາກອນທ່ອງທ່ຽວອາຊີບຊຸດໜຶ່ງມາແລ້ວ.



ຊ່ວງປີ 2005, ນັກທ່ອງທ່ຽວຈີນທີ່ໄປຍັງແຂວງຫຼວງພະບາງປະມານ 4000 ຄົນ. "ເຂດທ່ອງທ່ຽວສີ່ລ່ຽມຄຳ" ໝາຍເຖິງເຂດແຄ້ວນກວ້າງຂວາງໃນພາກສ່ວນຢູນນານຕິດຈອດກັບສປປລາວແລະມຽນມາ, ເຊິ່ງເປັນພາກສ່ວນປະກອບທີ່ສຳຄັນສຳລັບເສັ້ນທາງທ່ອງທ່ຽວທີ່ລ້ຳຄ່າແມ່ນ້ຳລານຊາງ--ແມ່ນ້ຳຂອງ.



## 在湄公河畔享受 Spa

傍晚，在老挝永珍市沿着湄公河散步，无意中拐进当地民居住家，是一派纯朴的乡居。写着 Papaya Spa 的招牌，一路吸引着我们，不由得踏步寻访。



# ແວ່ຊົມໃຊ້ສະປາ ທີ່ແຄມຂອງ

ຍາມຄ້ອຍຄ່ຳລົງແລງ,ຍ່າງຫລິ້ນລຽບຕາມແຄມຂອງນະຄອນວຽງຈັນໃນເມືອງລາວ,ບັງເອີນເລີຍແວ່ເຂົ້າເຮືອນຊາວເມືອງແຫ່ງໜຶ່ງທີ່ອາບເອ້ໄປດ້ວຍພາບຊາວບ້ານທີ່ບໍລິສຸດຜຸດຜອງ.ທີ່ໜ້າເຮືອນຕິດປ້າຍ Papaya Spa' ມັນດຶງດູດສາຍຕາຂອງພວກເຮົາມາຕາມທາງ,ຈຶ່ງພາກັນແວ່ເຂົ້າຢື້ຢາມ.

ນີ້ເປັນມື້ທຳອິດທີ່ມາຮອດເມືອງລາວ,ໝາຍຄວາມວ່າພາວະຄວາມເຄັ່ງຕຶງຂອງວຽກງານກ່ອນອອກເດີນທາງຍັງບໍ່ທັນຜ່ອນຄາຍກໍ່ເລີຍມາສູ່ສູນຮັກສາສຸຂະພາບ Spa ທີ່ຕົກແຕ່ງເປັນເຮືອນຊາວບ້ານຊາວເມືອງ.ຢູ່ນອກເດີ່ນບ້ານມີພຸ່ມດອກໄມ້ໃບຫຍ້າເກີດເຕັມສິ່ງກິ່ນຫອມຫວນຢ່າງມີຊີວິດຊີວາ,ໃນຂະນະນີ້ເຮົາຈະຮູ້ສຶກວ່າ ທຳມະຊາດມັນມີພະລັງດຶງດູດຈູງໃຈມວນມະນຸດຄືນເຮົາຕະຫຼອດໄປຫາອັນຈະພັນລະນາໄດ້ຍາກ,ມັນໝາຍ





ເຖິງຄວາມສະຫງົບອົບອຸ່ນຢູ່ຊຸ່ມກິນເຢັນລະຕີ້.

ຢູ່ໃນສູນສະປາທີ່ປະດັບຕົກແຕ່ງຢ່າງປານີດພາກເອກະຊົນຊາວເມືອງ, ມີການນວດແຜນບູຮານລາວ 1ຊົ່ວໂມງແລະອົບຢາສະໝຸນໄພເຄິ່ງຊົ່ວໂມງ, ເກັບຄ່າຜູ້ລະ 8 ໂດລາ, ລາຄາສຳນີ້ເປັນທີ່ດູດດື່ມຜູ້ຄົນມາແວ່ບໍ່ຂາດ, ໂດຍສະເພາະແມ່ນສີມືຂອງໝໍນວດເກັ່ງ ດີດັກແລະບັນຍາກາດສະຖານເດີ່ນບ້ານອ້ອມຮອບຍິ່ງກ່ອມຈິດມິດໃຈຢູ່ໃນເມືອງບ້ານບໍ່ວາຍ.

ຂ້າພະເຈົ້າໄດ້ຮັບການນວດແຜນບູຮານລາວທ່ານກາງພິກຕົວຕາມຄວາມສັ່ງຊີ້ບອກຂອງໝໍນວດ, ຖັດຈາກນັ້ນ, ກໍ່ຕຸ້ມຜ້າສະໂລ່ງໄປອົບຢາສະໝຸນໄພ, ຫາຍໃຈເອົາອາຍຮ້ອນບໍ່ພໍຄາວກໍ່ຮ້ອນຮຸດ ໆໄປທົ່ວຕົນໂຕ, ຮູ້ສຶກວ່າສະໝຸກກາຍເອົາແທ້, ບາດເຫື່ອນານພັດຫົນບໍ່ໄດ້ອີກ.

ຕົກກາງຄືນ, ຝົນຕົກຈາກຊາຍຄາລົງມາ, ຂ້າພະເຈົ້າແນມເຫັນຕົ້ນກ້ວຍປູກລຽບຕາມຊາຍຄາ, ຍິນສຽງຢາດຝົນຜຸບ ໆຕົກໃສ່ໃບກ້ວຍນອກບ້ານ, ມອງເບິ່ງທ້ອງຟ້າຄ່ອຍ ໆແຈ້ງສະຫວ່າງປາສະຈາກເມກເຝື້ອ, ສີສັນນະພາສົດໃສໃນເມືອງລາວສະດຸດສາຍຕາຂອງຂ້າພະເຈົ້າບໍ່ມີວັນລືມເລືອນ.

## 中国功夫——武术

中国武术是以技击为主要内容，以套路和搏斗为运动形式，注重内外兼修的传统体育和健康项目，是中国人民长期积累的文化遗产。

# ກັງຟູ---ມວຍວູສູ



"ກັງຟູ" ໃນພາສາຈີນມີຄວາມໝາຍວ່າ: "ວິຊາເກັ່ງກ້າສາມາດ".ເນື້ອໃນຕົ້ນຕໍຂອງມວຍວູສູຈີນແມ່ນຊົກຕີດ້ວຍສີມື,ປະກອບໄປດ້ວຍຮູບການເຄື່ອນເໜັງຕາມຊຸດອິລິຍາບົດແລະປະຊິດສູ້ຊົນກັນ.ເປັນປະເພດກິລາດັ້ງເດີມທີ່ເນັ້ນໜັກທາງດ້ານເຝິກຝົນກຳ

ລັງພາຍໃນແລະພາຍນອກຫຼືຮັກສາສຸຂະພາບ,ເຊິ່ງເປັນມູນມໍລະດົກວັດທະນະທຳທີ່ສະສົມມາຍາວນານຂອງປະຊາຊົນຈີນ.

ມວຍວູ້ສູ້ເກີດມາຈາກການອອກແຮງງານຜະລິດຂອງບັນພະບຸລຸດປະຖົມບູຮານ. ໃນການເຄື່ອນໄຫວຜະລິດແລະລ່າເນື້ອ, ຄົນເຮົາໄດ້ສະສົມທັກສະວິຊາ ຜ່າຟັນລັນແທງເປັນເທື່ອລະກ້າວ, ວິຊາບຸກຕີແລະປ້ອງກັນອັນເປັນຮູບຊົງປະຖົມປະຖານເຫຼົ່ານີ້ກໍ່ແມ່ນພື້ນຖານທີ່ເປັນຮູບເປັນຮ່າງຂອງວິຊາມວຍວູ້ສູ້ນັ້ນເອງ. ເມື່ອຮອດສະໄໝກອມມູນໂຄດວົງ,ມັກເກີດເສິກກົກເຫຼົ່າປະທັດປະຫານກັນເລື້ອຍ ໆ,ດ້ວຍເຫດນີ້,ປະສົບປະການສູ້ຮົບຕົບຕີກາງສະໜາມຮົບໄດ້ຊຸກຍູ້ໃຫ້ເກີດມີໜໍ່ແໜງມວຍວູ້ສູ້.

ມວຍວູ້ສູ້ເປັນຮູບເປັນຮ່າງຂຶ້ນໃນສະໄໝສັງຄົມຂ້າທາດ. ເມື່ອຜ່ານແປວໄຟສົງຄາມຢ່າງລຽນຕິດມາ,ເພື່ອສະໜອງກັບຄວາມຕ້ອງການຮົບເລວພາກຕົວຈິງ ເລີຍຜັນຂະຫຍາຍໄປສູ່ແບບໝູນໃຊ້ແລະແບບມາດຖານເທື່ອລະກ້າວ. ມາຮອດສະໄໝຊາງໂຈວ(ສະຕະວັດທີ 11),ໄດ້ເກີດມີທິດສະດີ ມວຍທ່າຍຈີ່, ຕໍ່ຈາກນັ້ນມາຈຶ່ງໄດ້ສ້າງເປັນລະບົບມວຍວູ້ສູ້ຈີນຢ່າງໝັ້ນຄົງ.





ສະໄໝລາຊະວົງໝິງແລະລາຊະວົງຊິງແມ່ນສະໄໝທີ່ມວຍວູ້ສູ້ຂະຫຍາຍຕົວເປັນການໃຫຍ່,ຕັ້ງຕົວເປັນນິກາຍຫຼາຍພັກພວກ, ປະກົດມີປະເພດມວຍລິງລາຍຫຼາຍແບບ,ກາຍເປັນລະບົບປະເພດມວຍທີ່ສຳຄັນເຊັ່ນ:ມວຍທ່າຍຈີ່,ມວຍສິງຢີ້ແລະມວຍປ່າກ້ວາເປັນຕົ້ນ.

ມວຍວູ້ສູ້ຈີນທີ່ເປັນກິລາກາຍະກຳ,ທາງດ້ານວິຊາການຍັງຄົງຮັກສາລັກສະນະຊົກຕີດ້ວຍສີມືໃນການບຸກແລະປ້ອງກັນ, ເຄື່ອນເໜັງໄປຕາມຂັ້ນເຊີງຊຸດອິລິຍາບົດສູ້ຊົນ. ພ້ອມນີ້,ປະສານສົມທົບດ້ວຍກຳລັງພາຍໃນແລະພາຍນອກຂອງມວຍວູ້ສູ້,ເຊິ່ງມີບົດບາດທຳນອງຊົນຊາດ,ມັນແມ່ນລັກສະນະພິເສດຂອງມວຍວູ້ສູ້ຈີນ.

ມວຍວູ້ສູ້ສາມາດຍົກສູງຄຸນທາດຮ່າງກາຍຂອງຄົນເຮົາແລະເສີມກຳລັງຮ່າງກາຍປ້ອງກັນຕົວ;ຍັງສາມາດເຝິກຝົນຫຼໍ່ຫລອມມານະຈິດ,ບົ່ມສ້າງຄຸນສົມບັດ;ຜ່ານການແລກປ່ຽນສີມືສີຕີນນຳກັນທ່າມກາງເຝິກແອບມວຍວູ້ສູ້ຍັງສາມາດເພີ່ມພູນຄູນສ້າງໄມຕີຈິດມິດຕະພາບເຊິ່ງກັນແລະກັນອີກດ້ວຍ.

# ຢູນນານ: ສາຄອນແຫ່ງດົນຕີຊົນເຜົ່າ

## 云南：民族音乐的海洋

美丽神奇的云南，是多民族文化产生的摇篮和人类文明的发源地之一。特殊的地理条件和历史条件，形成了云南独特丰厚，具有包容性、开放性、创造性的民族文化，为世界保存了绚丽多彩的罕见的民族文化大观园。作为其中瑰宝之一的民族音乐文化，更是历史悠久、种类繁多、变化丰富、影响深远。





ຢູນານທີ່ສວຍສົດອັດສະຈັນ,ເປັນແຫຼ່ງກຳເນີດວັດທະນະທຳຫຼາຍຊົນເຜົ່າແລະກໍ່ເປັນແຫຼ່ງອະລິຍະທຳຂອງມວນມະນຸດແຫ່ງໜຶ່ງ.ເງື່ອນໄຂພູມສາດແລະປະຫວັດສາດອັນພິເສດໄດ້ສ້າງໃຫ້ຢູນນານປະກອບໄປດ້ວຍວັດທະນະທຳຊົນຊາດຊົນເຜົ່າມີເອກະລັກສະເພາະທີ່ອຸດົມກົມກ່ອມ,ມີລັກສະນະບໍ່ປິດເຂ່ຍ,ເປີດກວ້າງແລະປະດິດຄິດແຕ່ງ,ໄດ້ຮັກສາອຸດທິຍານວັດທະນະທຳຊົນເຜົ່າທີ່ຫຼາຍສັນພັນສີຫາໄດ້ຍາກໃຫ້ແກ່ຊາວໂລກ.ໃນນັ້ນວັດທະນະທຳດົນຕີຊົນເຜົ່າເປັນສິ່ງປະເສີດ



ມີປະຫວັດຍາວນານ, ປະເພດຫຼາກຫຼາຍສະຫຼັບປັບປ່ຽນມີຜົນສະທ້ອນຢ່າງເລິກເຊິ່ງ.

ດົນຕີຊົນເຜົ່າຢູນນານບໍ່ພຽງແຕ່ອຸດົມໄປດ້ວຍຊັບພະຍາກອນເທົ່ານັ້ນ ຍັງມີສີສັນພິເສດທີ່ໂປ່ງໃສຫຼາຍອາດຫຼາຍທຳນອງ. ເພງຂັບຮ້ອງພື້ນເມືອງຂອງ 26 ຊົນເຜົ່າ ປະກອບມີ: ຂັບລຳເລົ່າເລື່ອງ, ເພງພູດອຍ, ຂັບກ້ອມ, ເພງຮັກ, ເພງເດັກນ້ອຍ, ເພງອອກແຮງງານ, ເພງລະບຳແລະຂັບລຳປະເພນີ, ລວມທັງໝົດ 20 ພັນເພງຂຶ້ນໄປ; ຈຳນວນເຄື່ອງເສບກໍ່ມີ 200 ກວ່າຊະນິດ, ເຄື່ອງເສບຊົນເຜົ່າທີ່ມີຜົນສະທ້ອນຫຼາຍກວ່າໝູ່ໃນເອທີດົນຕີທົ່ວປະເທດແມ່ນແຄນປາວູ, ແຄນນໍ້າເຕົ້າ, ກະຈັບປີ່ແລະປີ່ງໍ; ຍັງມີດົນຕີລະຄອນ, ດົນຕີງິ້ວ, ດົນຕີສາສະໜາແລະດົນຕີພິທີປະເພນີພື້ນເມືອງເປັນຕົ້ນເຊິ່ງເຮັດໃຫ້ດົນຕີຊົນເຜົ່າຢູນນານອຸດົມໄປດ້ວຍຄວາມຮູ້ແລະເລິກເຊິ່ງແນບນຽນທັງປະກົດສີສັນຫຼາກຫລາຍ. ມັນໄດ້ມີຊື່ສຽງໂດ່ງດັງໄປພາຍໃນແລະນອກປະເທດຈາກການໄປຢ້ຽມຢາມເອີລົບຂອງຄະນະດົນຕີບູຮານນາສີ, ການຂັບຮ້ອງພະຫຸສຽງຮວມໝູ່ຂອງເຜົ່າລີຊູຊ່າລື້ນະຄອນຫຼວງ, ດົນຕີຕົ່ງຈິງບັນເລງເສບຢູ່ວັນດົນຕີສາກົນ ຕະຫຼອດຮອດພາບຢູນນານທີ່ໜ້າປະທັບໃຈລະຄອນລະບຳເພງຊົນເຜົ່າຂະໜາດໃຫຍ່, ຜົນສະທ້ອນແລະພະລັງຈູງໃຈທາງດ້ານສິລະປະຂອງດົນຕີຊົນເຜົ່າຢູນນານທີ່ເປັນມຸກດາເຮືອງໃສໃນສາງມູນມັງສິລະປະວັດທະນະທຳຊາດຈີນຈະນັບມື້ນັບເພີ່ມຫຼາຍຂຶ້ນໃນສະຕະວັດຍຸກໃໝ່, ແລະເປັ່ງລັດສະໝີຮຸ່ງເຮືອງສົດໃສກວ່າເກົ່າອີກ.

ຢູນນານອັນເປັນຖິ່ນກຳເນີດຈະເລີນໄວຂອງທ່ານເນຍເອີມັກດົນຕີປະຊາຊົນນີ້ ອາດຈະມີເພື່ອນມິດ ພາຍໃນແລະຕ່າງປະເທດມາແວ່ຊົມຢູນນານນັບວັນນັບຫຼາຍ, ຍູທ່າງລ່ອງລອຍຕາມສາຄອນແຫ່ງດົນຕີຊົນເຜົ່າທີ່ນິ່ມນວນອ່ອນໂຍນ!







# ການແກະສະຫຼັກໄມ້ທີ່ພົດສະ ດານໂດດເດັ່ນຂອງຊົນເຜົ່າປ່າຍ



## 白族木雕巧夺天工

云南白族的木雕源远流长，精湛完美，是雕刻艺术中的一朵奇葩。剑川木雕分人物、动物、花卉三大类。无论何类体裁都用虚实结合的手法，细腻精巧的刻工，疏密得当的布局，以镂、透、衬、比的艺术技巧雕成。

ການແກະສະຫຼັກໄມ້ຂອງຊົນເຜົ່າປ່າຍຢູ່ນານມີປະຫວັດມາຍາວນານ, ມັນພົດສະດານຈົບງາມ, ເປັນດອກດວງອັນປະເສີດໃນສິລະປະແກະສະຫຼັກ.

ການແກະສະຫຼັກໄມ້ແບ່ງເປັນສາມປະເພດຄື: ຄົນ, ສັດແລະດວງດອກໄມ້. ຄົນ: ສ່ວນຫຼາຍຈະແມ່ນເທບນິຍາຍທີ່ເລົ່າສືບກັນມາ, ມີເທວະດາຟ້າແຖນຫຼືນັກປາດເມທາວິເຊັ່ນ: ທະນາທິບສິ່ງຂອງຕ້ອນປະເສີດ, ເທວະດາແປດອົງອວຍພອນວັນຄ້າຍວັນເກີດ, ຜູ້ເຖົ້າອາຍຸຍືນຖວາຍໝາກຄາຍແລະພາບລ້ຽງແກະເປັນຕົ້ນ. ສັດ: ເປັນຕົ້ນຄື:ນົກຍູງແຜນຫາງ, ນົກແຊວຈັບງ່າດອກເນີຍ, ນົກຂຽນແກ້ວບິນອ້ອມຕົ້ນແປກແລະປາໃນເຕັ້ນປະຕູລວງ



ເປັນຕົ້ນ.ດວງດອກໄມ້ນັ້ນ ສ່ວນຫຼາຍພັນລະນາຄວາມເປັນຈິງ, ຄວັດແກະດອກໄມ້ແປດຊະນິດທີ່ຕ່າງລະດູການຂອງຢູນນານສັງລວມເຂົ້າກັນຢ່າງກົມກຽວ, ສີມີແກະສະຫຼັກດອກບົວແລະດອກໂບຕັ໋ນດ້ວຍລວດລາຍຮູບນູນແລະຫລຸບ, ມີຊີວິດຊີວາເໝືອນດັ່ງ "ໝູ່ມາລາເບັ່ງບານສົ່ງກິ່ນຫອມຫວນ" .ດອກໄມ້ນາ ໆຊະນິດດັ່ງກ່າວເຫຼົ່ານີ້ສ່ວນຫຼາຍຈະຕິດພັນກັບສັດ, ເຊັ່ນ: "ເສືອລາຍພາດກອນຊົມດອກບົວ" ກໍ່ມີທຳນອງເອກະລັກສະເພາະ. ໃນນັ້ນ ມີການຄວັດຮູບໜ້າພຽງ, ການແກະສະຫຼັກຮູບນູນ, ການຄວັດຮູບຕັ້ງແລະການຄວັດຮູບໂຂ່ງ, ສີມີຄ່ອງແຄ່ວຄົມຄາຍ, ຂັດຖູເຫຼື້ອມດີ, ທາສີກົມກືນສົດໃສ.

ຊ່າງໄມ້ຊົນເຜົ່າປ່າຍໄດ້ເພັ່ງເລັງສີໄມ້ລາຍມືຄວັດແກະຂອງເຂົາເຈົ້າໃສ່ໜ້າຕ່າງແລະການປະດັບຕົກແຕ່ງປະຕູໜ້າບ້ານ, ໂດຍສະເພາະແມ່ນຫ້ອງຮັບແຂກມີຮູບຄວັດສັດຊະນິດຕ່າງ ໆໜ້າສະຫວ່າໂອ່ໂຖງ.

ເຄື່ອງເຟີນີເຈີສະຫຼັກໄມ້ແບບບູຮານທີ່ຊົນເຜົ່າປ່າຍຜະລິດນັ້ນ ໃຜມາເຫັນແລ້ວກໍ່ນິຍົມຊົມຊອບ. ການຄວັດແກະໄມ້ກຶບຫີນ




ອ່ອນເປັນສີມືພິເສດຢ່າງໜຶ່ງຂອງເຄື່ອງເຟີນີເຈີຊົນເຜົ່າປ່າຍ. ຊຸດເຟີນີເຈີປະກອບດ້ວຍໂຕະມົນໃຫຍ່, ໂຕະນ້ຳຊາ, ເກົ້າອີ້ລວງ, ຮ້ານຕັ້ງໂຖດອກໄມ້, ບັງຕາ, ບັງຕາແຂວນ ລວມມີ10ຢ່າງ. ໂຕະຍາວທີ່ມີສີ່ຂາ, ຂ້າງເທິງແກະສະຫຼັກຫົວສິງໂຕ, ຂ້າງລຸ່ມແກະສະຫຼັກເລັບຕີນສິງໂຕ, ປະຕິມໂຕມັນໄວ້, ໃຫ້ຫົວກັບຕີນເຊື່ອມຕໍ່ກັນອັນເປັນສີໄມ້ລາຍມືວິຈິດຕະການ. ເຄື່ອງເຟີນີເຈີເຫຼົ່ານີ້ມີລັກສະນະແປກປະຫຼາດແບບບູຮານແລະທົນທານແໜ້ນແກ່ນ. ເມື່ອທານ້ຳກ້ຽງສີດຳໃສ່ເຄື່ອງແກະສະຫຼັກໄມ້ກຶບໃສ່ຫີນອ່ອນລວດລາຍຕ່າງ ໆ, ປະກົດວ່າມັນຫລູຫລາສະຫງ່າງາມແລະ ລ້ຳຄ່າອີກດ້ວຍ.



## 人间仙境——九寨沟

世界上有更高的山峰，更大的湖泊，更浓密的原始森林，更神秘的民族村寨，但将这些绝美的景观 ---- 雪峰、湖泊、森林和少数民族村寨完美的组合在一起的地方，却只有九寨沟。以至世界各地的旅游者只能用“人间仙境”、“童话世界”这样的语言来描述。



# ແດນສະຫວັນເມືອງຄົນ-- ຈິວຈ້າຍເກົ້ວ(ຫຸບເຂົາເກົ້າບ້ານ)

ໃນໂລກນີ້ແມ່ນວ່າຈະມີຈອມດອຍສູງສຸດ,ໜອງນ້ຳວັງປາທີ່ກວ້າງໃຫຍ່,ປ່າໄມ້ດຶກດຳບັນທີ່ດົກໜາຫຼືມີໝູ່ບ້ານຊົນເຜົ່າສ່ວນໜ້ອຍທີ່ເລິກລັບອັດສະຈັນ,ຖ້າຈະລວມສູນເຂົ້າເປັນພູມພາບອັນສວຍສົດພົ້ນເດັ່ນນັ້ນກໍ່ມີແຕ່ຈິວຈ້າຍເກົ້ວເຊິ່ງເປັນຖິ່ນຖານປະກອບໄປດ້ວຍຈອມພູຫິມະ,ໜອງນ້ຳວັງປາ,ປ່າດົງພົງໄພແລະໝູ່ບ້ານຊົນເຜົ່າສ່ວນໜ້ອຍ.ສົມຜົນນັກທ່ອງທ່ຽວແຫ່ງຕ່າງ ໆທົ່ວໂລກໄດ້ພັນລະນາວ່ານີ້ແມ່ນ “ແດນສະຫວັນເມືອງຄົນ” ແລະ “ໂລກນິທານສຳລັບເດັກ” ວ່າຊັ້ນ.

ເຂດທິວທັດທີ່ມີຊື່ລືຊາຜາກົດຈິວຈ້າຍເກົ້ວຕັ້ງຢູ່ພູພຽງພາກເໜືອແຂວງເສຊວນ,ຢູ່ພາຍໃນເຂດແດນເມືອງນານຜິງກິ່ງແຂວງອາປ່າເສຊວນ,ຍ້ອນວ່າມີເກົ້າບ້ານຊົນເຜົ່າຕິເບດຕັ້ງຫຼັກປັກ



ຖານຢູ່ຫຸບເຂົາຈຶ່ງຕັ້ງຊື່ວ່າຈິວຈ້າຍເກົ້ວ, ດຽວນີ້ເປັນເຂດທິວທັດລືຊາຜາກົດທີ່ເປັນຈຸດສຸມຂອງຊາດ. ປີ 1991, ຈິວຈ້າຍເກົ້ວພ້ອມກັບເຂດທິວທັດຮວາງຫລົງຖືກຮັບຮອງເປັນມໍລະດົກທຳມະຊາດຂອງ ໂລກ. ສາຍພູຈິວຈ້າຍເກົ້ວປະກົດຮູບຕົວ "V" ແບ່ງເປັນສາມຫຸບເຂົາ, ເປັນເຂດຖິ່ນຖານຊຸມລຸມຂອງຊົນເຜົ່າຕີເບດ, ລວມມີເກົ້າໝູ່ບ້ານຢັ້ງຢາຍຢູ່ຕາມຮ່ອມພູຫຸບເຂົາ, ດ້ວຍເຫດນີ້ຈຶ່ງຕັ້ງຊື່ພູມສາດວ່າ ຈິວຈ້າຍເກົ້ວ(ຫຸບເຂົາເກົ້າບ້ານ).

ພາບວິວທິວທັດຈິວຈ້າຍເກົ້ວຍອດຢ້ຽມຢູ່ກັບນ້ຳ, ໜອງນ້ຳພູສູງທີ່ຊາວທ້ອງຖິ່ນເອີ້ນວ່າສາບໜອງປຽບເໝືອນກະຈົກສ່ອງໃສຫຼີ້ລາຍ ໆກັບປີກຂຽວແວວວາວ, ປານກັບວ່າວິສະນຸກຳນິລະມິດສ້າງຂຶ້ນຈະໄວ້ໃນປ່າດົງຫລືບົນພູຫິມະ. ໜອງນ້ຳໃສຕິ້ງຫຼີ້ງງຽບສະຫງັດສາມາດສ່ອງເຫັນພື້ນ, ລະດັບຄວາມ ໂປ່ງໃສເຖິງ 30 ປາຍແມັດ. ສາຍເຫດທີ່ເກີດເປັນໜອງນ້ຳສີຄາມນຈິວຈ້າຍເກົ້ວມີຫຼາຍປະການ, ເຊັ່ນວ່າ:ການປະກອບສ້າງທໍລະນີຫີນປູນທີ່ເປັນເອກະລັກສະເພາະ, ປ່າໄມ້ດຶກດຳບັນທີ່ດົກໜາແລະພູມອາກາດທີ່ເຢັນສະບາຍໃນພາກພູພຽງ.

ໜອງນ້ຳທີ່ງຽບສະຫງັດແລະນ້ຳຕົກຕາດທີ່ລົ້ນຫຼັ່ງລົງຍັ່ງມື້ຍັ່ງຄືນບໍ່ເຫືອດໄດ້ປະກອບເປັນທຳນອງເພງອັນປະເສີດຂອງເກົ້າບ້ານເປັນຕົ້ນແມ່ນສາບໜອງວູຮວາ, ນ້ຳ ໂຕນຕາດ ໂນຢືລັງ, ນ້ຳ ໂຕນຕາດສູເຈີນແລະນ້ຳ ໂຕນຕາດຫາດມຸກດາ, ສົ່ງສຽງຫາດ ໆປານກັບນົດເພງທີ່ມ່ວນຫູ.

"ຊົມລະຫາຈິວຈ້າຍງາມວິໄລໃຕ້ລຸ່ມຟ້າ". ໜອງນ້ຳສີຄາມປຽບເໝືອນທະເລ 108 ໜອງຢັ້ງຢາຍຕາມຮ່ອມພູ, ສົ່ງແສງແວວວາວດັ່ງມຸກດາເຫຼື້ອມສົດໃສ. ນ້ຳໃສລົ້ນຫລັ່ງຈາກພູສູງເປັນນ້ຳຕົກຕາດເຝືອນຝັ່ງເຊາະທັ່ງລົງຮອດພື້ນຫຸບເຂົາກາຍເປັນກະແສລຳຫ້ວຍໄຫຼປ່ອງໃສ່ສາບໜອງ. ຈິວຈ້າຍເກົ້ວຢັ້ງຢາຍໄປແຕ່ນ້ຳ ໂຕນຕາດ, ຕາດນ້ຳໄຫຼແຮງ, ຕາດນ້ຳຕື້ນແລະໜອງນ້ຳວັງປາ. ສະຖານທີ່ທິວທັດເຫຼົ່ານີ້ເຊື່ອມຕໍ່ກັນໄປດ້ວຍແລວທາງຂົວຫ້ອຍທີ່ຍາວຢຽດ, ມັນເປັນພາບວິວປ່າໄພອັນປະຫຼາດຂອງຫຸບເຂົາເກົ້າບ້ານ. ໃນນັ້ນແລວທາງຂົວຫ້ອຍໃນປ່າງຽບສະຫງັດລະຫວ່າງໜອງໜີແຜນດາຮອດໜອງວູຮວາຍາວປະມານ 3500 ແມັດ, ຈັ່ງແມ່ນພິລຶກແທ້ ໆ.

ຈິວຈ້າຍເກົ້ວປະກອບໄປດ້ວຍທິວທັດທຳມະຊາດທີ່ໜ້າປະຫຼາດອັດສະຈັນແລະສະຫງ່າເຊິ່ງມີສິ່ງແວດລ້ອມນິເວດອັນປະຖົມປະຖານ, ອາກາດສົດຊື່ນປາສະຈາກມົນລະພິດແລະມີທັງປ່າດົງພົງໄພ, ພູເຂົາຫິມະແລະໜອງນ້ຳວັງປາ, ມັນປະຖົມປະຖານແລະເລິກລັບ.

ລະດູທີ່ແສນງາມຂອງຈິວຈ້າຍເກົ້ວແມ່ນລະດູໃບໄມ້ຫຼົ່ນ, ເຮົາຈະໄດ້ຊົມ: "ພາບວິວລະດູຮ່ວງ ໂຮຍ, ໃບໄມ້ຫຼາກສີ, ໜອງນ້ຳສີຄາມ, ເງົາປີ້ນກາງນ້ຳ, ນ້ຳ ໂຕນຕາດ, ຕາດນ້ຳໄຫຼແຮງ ແລະແລວທາງຂົວຫ້ອຍ" ຢ່າງເຕັມໃຈ.

ເມື່ອເຮົາໄປແວ່ຊົມແຫຼ່ງທິວທັດດັ່ງກ່າວ, ຈະໄດ້ເຫັນພູມພາບທີ່ສວຍສົດງົດງາມ, ຈະໄດ້ຍິນສຽງນ້ຳໄຫຼລິນບໍ່ຂາດ, ຈະໄດ້ສູບເອົາອາກາດສົດຊື່ນເພີນຈິດເພີນໃຈເໝືອນກັບຕົກຢູ່ແດນສະຫວັນເມືອງຄືນຫັ້ນແລ.



# ແດນດິນປະເສີດໃຕ້ຟ້າຢູນນານ --ຈ້ຽນຊວນ



## 南天宝地——剑川

剑川，位于云南省大理白族自治州北部，它以浓郁古朴的民族风情、雄伟瑰丽的自然风光、博大精深的历史文化，成为大理国家级风景名胜的一个重要组成部份。

ເມືອງຈ້ຽນຊວນຕັ້ງຢູ່ພາກເໜືອຂອງກິ່ງແຂວງປົກຄອງຕົນເອງຊົນເຜົ່າປ່າຍຕາລີແຂວງຢູນນານ,ເຊິ່ງປ່ຽມລົ້ນໄປດ້ວຍຮີດຄອງພື້ນແຜ່ນຊົນເຜົ່າທີ່ເກົ່າແກ່ໜັກໜາ,ມີທິວທັດທຳມະຊາດທີ່ສົດສວຍງາມສະຫງ່າແລະອຸດົມໄປດ້ວຍຄວາມຮູ້ວັດທະນະທຳ





ປະຫວັດສາດທີ່ເລິກເຊິ່ງແນບນຽນ, ກາຍເປັນພາກປະກອບສ່ວນທີ່ສຳຄັນຂອງສະຖານທີ່ທິວທັດລືນາມລະດັບຊາດໃນຕາລີ.

ແຫຼ່ງທິວທັດໃນເຂດແດນເມືອງຈ້ຽນຊວນຫຼາກຫຼາຍ, ປະກົດລັກສະນະພູມພາບຕ່າງກັນ. "ແດນດິນປະເສີດໃຕ້ຟ້າຢູນນານ" --ພູສີ່ປາວ, ມີຮ່ອມຫ້ວຍປ່າໄພສວຍສົດງົດງາມ, ປ່າໄມ້ເມເປີນ(maple)ເກີດເຕັມປ່າ, ເນື້ອໃນວັດທະນະທຳປະຫວັດສາດໃນສະໄໝນ່ານເຈົ້າລາຊະວົງຖັງແລະຕາລີລາຊະວົງສົ້ງທີ່ບູຮານເກົ່າແກ່ຕະຫຼອດຮອດຮູບສິລະປິນທີ່ແກະສະຫຼັກຜິດສະດານເຊິ່ງພາກລັດໄດ້ປະກາດເປັນຫົວໜ່ວຍຄຸ້ມຄອງບູຮານວັດຖຸຈຸດສຸມຂອງທົ່ວປະເທດງວດທຳອິດ. ໃນນັ້ນ ຮູບນ່ານເຈົ້າ, ຮູບພະພຸດສາສະໜາລັບແລະຮູບຄວັດສິງໂຕຫີນເປັນຕົ້ນມີຄຸນຄ່າສູງທາງດ້ານສິລະປະແລະວັດທະນະທຳ. ງານຂັບຮ້ອງທີ່ພູສີ່ປາວຈັດຂຶ້ນເດືອນເຈັດຕາມຈັນທະຄະຕິຊູ່ປີຈັ່ງແມ່ນອໍລະຊອນວອນໃຈ, ຟັງຍິນສຽງຂັບລຳແວວວອນໄປທົ່ວແດນດ້າວ, ຖືກຍ້ອງວ່າເປັນ "ຕົວເມືອງຂັບຮ້ອງຂອງເມືອງຈີນ".

ໜອງຈ້ຽນຫູ່ເປັນໜອງນ້ຳທີ່ໃສຕິ້ງຫລີ້ງ, ຕົກລາຕີການທີ່ສະຫງົບງຽບເຮົາຈະແນມເຫັນແສງໄຟເຮືອຫາປາກາງໜອງ. ໃນນັ້ນປະກອບເປັນພາບວິວແປດແຫ່ງທີ່ສົດສວຍງາມຕາ.

ຄຳໂຄງສຳຜັດຄູ່ທີ່ເມືອງຈ້ຽນຊວນຖືກນັກປະພັນຊື່ດັງທ່ານລີຈຸນຍົກຍ້ອງວ່າ "ເປັນເອກໃນໃຕ້ຟ້າ". ພະອາຈະລີແລະດົນຕີຕົ່ງຈິງໃນເມືອງຈ້ຽນຊວນກໍ່ຖືກນັກປະຫວັດສາດສັງຄົມສັນລະເສີນ. ການຂັບລຳຖືວປາກແລະສິລະປະກຳພື້ນເມືອງເຊັ່ນການຄວັດແກະໄມ້, ສະຫຼັກຫີນທີ່ຊ່າລືຂອງເມືອງຈ້ຽນຊວນຕະຫຼອດເຖິງການຖັກແສ່ວແລະຍ້ອມຜ້າຂອງຊົນເຜົ່າປ່າຍອັນໄດ້ປະກອບເປັນປະກົດການວັດທະນະທຳປະເພນີພື້ນເມືອງແລະພູມພາບມະນຸດສາດໃນແດນດິນແຄວ້ນຖິ່ນດັ່ງກ່າວ.





# ເມືອງໂຫຼຜິງ:
# ເລື່ອນລອຍຢູ່ທະເລດອກໄມ້ໄພສານ

## 罗平：在十里花海游弋

云南罗平县距省会昆明 240 公里，地处滇、桂、黔三省交界的"金三角"地带，有"鸡鸣三省"的美誉。气候温和湿润，夏无酷暑，冬无严寒。它以绵延 20 万亩的油菜花海而闻名，被人称为“中国最大的花园”。早春二月，正是这里油菜花盛开的季节。

ເມືອງໂຫຼຜິງຢູນນານຫ່າງຈາກເມືອງເອກຄຸນໝິງ 240ກິໂລແມັດ,ຕັ້ງຢູ່ເຂດ “ສາມລ່ຽມຄຳ” ທີ່ແດນຕໍ່ແດນສາມແຂວງລະຫວ່າງຢູນນານ,ກວາງຊີແລະກຸ່ຍເຈົາ,ມີຊື່ງາມນາມຄອງວ່າ “ສາມແຂວງທີ່ມີໄກ່ຂັນດອມກັນ” .ມີອາກາດອົບອຸ່ນແລະຊຸ່ມເຢັນ,ລະດູຮ້ອນປາສະຈາກອາກາດອົບເອົ້າເຜົາຮ້ອນ,ລະດູໜາວກໍ່ບໍ່ຄ່ອຍໜາວຈັດກັດກະດູກ. ໂຫຼຜິງຊ່າລືໄປດ້ວຍເນື້ອທີ່ດອກດວງຜັກກາດມັນທີ່ກວ້າງຂວາງສອງແສນມູ,ຖືກໃສ່ຊື່ວ່າ “ສວນດອກໄມ້ແສນກວ້າງຂອງເມືອງຈີນ” .ຮອດເດືອນ 2ຕົ້ນລະດູບານໃໝ່ໃນແຫ່ງນີ້,ແມ່ນຍາມລະດູດອກຜັກກາດມັນພວມບານເບັ່ງສີ.

ເມື່ອເຮົານັ່ງໃນລົດງວາກໄປເບິ່ງນອກໜ້າຕ່າງລົດ,ຈະເຫັນຜືນດອກດວງເຫຼືອງອ່ອຍຮ່ອຍປະເຊີນກັບໜ້າ,ໃຕ້ທ້ອງຟ້າສີຄາມປອດໂປ່ງ,ດອກຜັກກາດມັນຕ້ອງແສງແດດເຫຼື້ອມມະຍິບມະຍັບໂອນເອນຕາມສາຍລົມພັດລະດູບານ.ລົດທີ່ແລ່ນຜ່ານປຽບເໝືອນເຫຼັ້ມເຮືອໄວລ່ອງລອຍກາງທະເລດອກໄມ້,ສ່ວນຈອມດອຍປ່ຽວ,ນ້ຳຫ້ວຍແລະຖຽງນາກໍ່ຈົມຢູ່ໃນທະເລດອກມາລາທັງສິ້ນ,ພື້ນທີ່ປູກຜັກກາດມັນກວ້າງຂວາງຈົນສຸດຊົ່ວຕາ,ຍາວຢຽດໄປຈຸກຸ່ມພູທີ່ຢູ່ກວງໄກ,ເປັນພາບທີ່ງາມສະຫງ່າເອົາແທ້.

ເຖິງວ່າດອກຜັກກາດມັນບໍ່ໄດ້ແມ່ນດອກແປກປະຫຼາດກໍ່ບໍ່ເປັນດອກລ້ຳຄ່າກໍ່ຕາມ,ແຕ່ຜືນນາດອກຜັກ



ກາດມັນທີ່ເມືອງໂຫຼຜິງຫາກຕ່າງກັບບ່ອນອື່ນຊຶ່ງຈະເອົາມາປຽບບໍ່ໄດ້ເລີຍເພາະມັນມີພາບສະຫງ່າຫຼາຍຫຼາກເຊັ່ນວ່າມີບາງບ່ອນ "ເປັນພັ່ນເປັນຜືນ" ,ບາງບ່ອນ "ລື່ນລ້ຳຕ່ຳສູງ" ,ບາງບ່ອນ "ຄົດລ້ຽວກ້ຽວໄປມາ" ແລະບາງບ່ອນກໍ່ "ວຽນຂຶ້ນວຽນລົງ" ປະສານກັບພູເຂົາລຳເນົາແມ່ນ້ຳລຳທານຕະຫຼອດເຖິງໝູ່ບ້ານປ່າໄພທີ່ປະກົດພູມພາບອອນຊອນອັນສວຍສົດງົດງາມດັ່ງຈິດຕະກຳຮູບແຕ້ມ.







## 首届中国西部（昆明）文化产业博览会在昆明举行

首届中国西部（昆明）文化产业博览会在昆明召开，这届盛会，以其高规格、高水准、大规模及丰富多彩的内容、丰硕的成果和广泛的影响，开创了中国西部文博会的先河，成为西部文化产业发展史上的一个重要标志。




# ງານນິທັດສະການຊັບສິນທາງວັດທະນະທຳພາກຕາເວັນຕົກຈີນສະໄໝປະຖົມມະເລີກໄດ້ຈັດຂຶ້ນທີ່ຄຸນໝິງ

ງານນິທັດສະການຊັບສິນທາງວັດທະນະທຳ(ຄຸນໝິງ)ພາກຕາເວັນຕົກຈີນສະໄໝປະຖົມມະເລີກໄດ້ຮຽກໄຂຂຶ້ນທີ່ຄຸນໝິງ, ຄະນະຜູ້ແທນທີ່ມາຈາກ 12 ເຂດແຂວງແລະເມືອງ,ວິສາຫະກິດວັດທະນະທຳທີ່ມີຊື່ສຽງແຕ່ງຕ່າງ ໆໃນທົ່ວປະເທດຕະຫຼອດເຖິງຄະນະຜູ້ແທນວິສາຫະກິດວັດທະນະທຳຂະໜາດໃຫຍ່ຂອງຕ່າງປະເທດແລະແຂກຜູ້ມີກຽດໄດ້ເຕົ້າໂຮມກັນທີ່ເມືອງລະດູບານ,ເພື່ອເຂົ້າຮ່ວມງານມະຫະກຳຊັບສິນທາງວັດທະນະທຳລະດັບຊາດທີ່ໃຫຍ່ ໂຕຄັ້ງນີ້.

ງານມະຫະກຳສະໄໝນີ້,ມີມາດຖານສູງ,ຂະໜາດໃຫຍ່ແລະເນື້ອໃນອຸດົມສົມບູນຫຼາຍຫຼາກ,ມີໝາກຜົນອຸດົມແລະຜົນສະທ້ອນຢ່າງກວ້າງຂວາງ,ໄດ້ເປີດສາກຄັ້ງລິເລີ່ມປະຖົມຂອງງານນິທັດສະການຊັບສິນທາງວັດທະນະທຳພາກຕາເວັນຕົກຈີນ,ເປັນຂີດໝາຍອັນສຳຄັນໃນປະຫວັດພັດທະນາຊັບສິນທາງວັດທະນະທຳພາກຕາເວັນຕົກຈີນ.

ການຈັດທຳງານນິທັດສະການຄັ້ງປະຖົມມະເລີກດັ່ງກ່າວໄດ້ຮັບການອອກແຮງສະໜັບສະໜູນຈາກສູນກາງແລະກະຊວງທະບວງກົມທີ່ກ່ຽວຂ້ອງ. ມັນເປັນມູມແງ່ສ່ອງແສງໃຫ້ເຫັນວ່າ ທົ່ວປະເທດໄດ້ຢືນຢັນຮັບຮອງເປັນຢ່າງສູງຕໍ່ຜົນງານໜ້າເພິ່ງພໍໃຈທີ່ຍາດມາໄດ້ຈາກການຊຸກຍູ້ສົ່ງເສີມພາລະກຳວັດທະນະທຳແລະພັດທະນາຊັບສິນທາງວັດທະນະທຳຂອງຢູນນານ. ບັນດາຜູ້ຊີ້ນຳຮ່ວມປະຊຸມ, ສະມາຊິກຄະນະຜູ້ແທນແລະແຂກຄົນຜູ້ມີກຽດທີ່ມາກໜ້າຫຼາຍຕາໄດ້ທະຍອຍກັນຕີລາຄາຢ່າງສູງຕໍ່ຊັບສິນທາງວັດທະນະທຳຢູນນານໄດ້ພົ້ນເດັ່ນຂຶ້ນຢ່າງໄວວາ, ພ້ອມທັງເຫັນວ່າແຂວງຢູນນານໄດ້ນຳໜ້າສະເໜີແລະຈັດທຳງານມະຫະກຳຊັບສິນທາງວັດທະນະທຳລະດັບຊາດ, ສະແດງໃຫ້ເຫັນວ່າແຂວງຢູນນານໄດ້ມີສາຍຕາລ້ຳໜ້າ, ມີມານະຄະຕິເດັດດ່ຽວລ້ຳເລີດແລະມີນ້ຳໃຈອາດຫານປະດິດສ້າງອັນໃໝ່ທາງວັດທະນະທຳ.

ໃນໄລຍະຈັດງານນິທັດສະການ, ຄະນະຜູ້ແທນບັນດາເຂດແຂວງແລະເມືອງພາກຕາເວັນຕົກທີ່ມີສີສັນສະເພາະຊົນເຜົ່າ, ມີລັກສະນະປະຖົມປະຖານແລະພູມີພາກຢ່າງໂປ່ງໃສ, ປະກອບເປັນຖັນແຖວແລະຂະໜາດທີ່ໃຫຍ່ໂຕ, ໄດ້ນຳເອົາຜະລິດຕະພັນທາງວັດທະນະທຳທີ່ຊ່ຳລື, ສິລະປະກຳສີມືພື້ນເມືອງຊົນເຜົ່າອັນພິດສະດານ, ວິຈິດຕະກຳທີ່ງາມຕາ ຍັງມີຂອງບູຮານວັດຖຸທີ່ມີປະຫວັດສາດຍາວນານຕະຫຼອດຮອດໂຄງການສົ່ງເສີມນັກທຸລະກິດມາລົງທຶນທາງດ້ານວັດທະນະທຳເປັນຕົ້ນວາງສະແດງຢູ່ສູນວາງສະແດງນິທັດສະການສາກົນຄຸນໝິງທີ່ກວ້າງຂວາງແຈ້ງສະຫວ່າງ, ຈຳນວນຄົນຜູ້ມາຢ້ຽມຊົມກາຍສອງແສນເທື່ອຄົນ, ເຊິ່ງໄດ້ສ້າງໃຫ້ງານນິທັດສະການຊັບສິນທາງວັດທະນະທຳພາກຕາເວັນຕົກສະໄໝປະຖົມມະເລີກກາຍເປັນກໍລະນີສຳຄັນຍິ່ງເລື່ອງໜຶ່ງທີ່ຊາວພາກຕາເວັນຕົກສົນໃຈນຳໃນລະຫວ່າງມໍ່ໆມານີ້.

ງານນິທັດສະການດັ່ງກ່າວຍັງໄດ້ສະໜອງກາລະເທສະຈິນຕະນາການຝຶດຝື້ນແກ່ບັນດາບຸກຄົນຊັ້ນສູງແລະຍອດພອນສະຫວັນໃນຂົງເຂດຊັບສິນທາງວັດທະນະທຳທີ່ຊຸມລຸມກັນໃນແຫ່ງດັ່ງກ່າວ. ບັນດານັກປາດນັກຊ່ຽວຊານແຕ່ລະຝ່າຍພາກັນອອກຫົວຄິດສະໜອງປັນຍາ, ໂອ້ລົມສຳມະນາກ່ຽວກັບຊັບສິນທາງວັດທະນະທຳດ້ວຍອາລົມເຜັດມັນບົນເວທີປາຖະກະຖາລະບົບພັດທະນາຊັບສິນທາງວັດທະນະທຳພາກຕາເວັນຕົກທີ່ປະກົດຫຼາຍສັນພັນສີ. ມີຂໍ້ມູນຂ່າວສານພັດທະນາຊັບສິນທາງວັດທະນະທຳທີ່ຫຼາກຫຼາຍແລະຫ້ອງນຶກພັດທະນາຕ່າງ ໆໃນເວທີປາຖະກະຖາໄດ້ແລກປ່ຽນເຊິ່ງກັນແລະກັນທັງກະທົບກັນ, ໄດ້ສະແດງອອກປະກົດການເວທີທີ່ແລກປ່ຽນກັນແລະດົນໃຈກັນໃນງານນິທັດສະການດັ່ງກ່າວຢ່າງເຕັມສ່ວນ. ການຈັດທຳເວທີປາຖະກະຖາລະບົບພັດທະນາຊັບສິນທາງວັດທະນະທຳພາກຕາເວັນຕົກປະສົບຜົນສຳເລັດ, ມັນໄດ້ຍົກຖານະບົດບາດຂອງງານນິທັດສະການຊັບສິນທາງວັດທະນະທຳພາກຕາເວັນຕົກສະໄໝປະຖົມມະເລີກສູງເດັ່ນຂຶ້ນ, ພ້ອມທັງໄດ້ຂະຫຍາຍອິດທິພົນສັງຄົມຂອງງານນິທັດສະການດັ່ງກ່າວໃຫ້ກວ້າງອອກ.

ການຈັດທຳງານນິທັດສະການຊັບສິນທາງວັດທະນະທຳພາກຕາເວັນຕົກຄັ້ງນີ້ປະສົບຜົນສຳເລັດ, ໄດ້ສ້າງບັນຍາກາດອັນດີແກ່ການພັດທະນາຊັບສິນທາງວັດທະນະທຳພາກຕາເວັນຕົກ, ໄດ້ສ້າງນ້ຳໃຈເຊື່ອໝັ້ນແລະຕັດສິນໃຈຢ່າງໜັກແໜ້ນຂອງບັນດາເຂດແຂວງແລະເມືອງພາກຕາເວັນຕົກຈີນເລັ່ງລັດພັດທະນາຊັບສິນທາງວັດທະນະທຳຕື່ມອີກ, ມີສະຖານະພາບອັນດີເລີດສຳລັບເພີ່ມທະວີການແລກປ່ຽນແລະຮ່ວມມືດ້ານຊັບສິນທາງວັດທະນະທຳທີ່ຄົບວົງຈອນຂອງບັນດາເຂດແຂວງແລະເມືອງເຊື່ອມໂຍງພົວພັນກັນ, ຍົກສູງພ້ອມກັນແລະພັດທະນາພ້ອມກັນ, ມັນມີຄວາມໝາຍເລິກເຊິ່ງແລະໜັກແໜ້ນສຳລັບສ້າງຍີ່ຫໍ້ທີ່ມີຊື່ສຽງໂດ່ງດັງຂອງງານນິທັດສະການຊັບສິນທາງວັດທະນະທຳພາກຕາເວັນຕົກ, ພ້ອມທັງຊຸກຍູ້ພາລະກຳວັດທະນະທຳແລະພັດທະນາຊັບສິນທາງວັດທະນະທຳເຂດພາກຕາເວັນຕົກກໍ່ຄືສ້າງສັນສັງຄົມສະໝົມກົມກຽວແຫ່ງສັງຄົມນິຍົມ. ມັນຈະສະທ້ອນພາບໜັກແໜ້ນແລ້ວຈາລຶກໄວ້ໜ້າປະຫວັດສາດທີ່ປະດິດສ້າງອັນໃໝ່ກ່ຽວກັບການພັດທະນາຊັບສິນທາງວັດທະນະທຳພາກຕາເວັນຕົກ.





# ກົງສຸນໃຫຍ່ລາວ,ໄທແລະມຽນມ້າປະຈຳຄຸນໝິງສັນລະເສີນວາລະສານທັງສາມ

## 老挝、泰国、缅甸驻昆明总领事盛赞三刊

云南省委外宣办近日在昆明举行《占芭》、《湄公河》、《吉祥》三杂志辞旧迎新茶话会，出席茶话会的老挝人民民主共和国驻昆总领事蓬沙瓦•普玛翁，泰王国驻昆总领事克西•查派文，缅甸联邦驻昆总领事吴苗丁在茶话会上盛赞三刊对沟通中、老、缅、泰起到了重要作用。



ຫ້ອງການໂຄສະນາຕໍ່ຕ່າງປະເທດຂອງຄະນະພັກແຂວງຢູນນານໄດ້ຈັດງານລ້ຽງນ້ຳຊາສົ່ງທ້າຍປີເກົ່າຕ້ອນຮັບປີໃໝ່ສຳລັບສາມວາລະສານ«ຈຳປາ»«ແມ່ນ້ຳໂຂງ»«ມຸງຄຸນ»ທີ່ຄຸນໝິງເມື່ອບໍ່ດົນມານີ້.ຜູ້ເຂົ້າຮ່ວມງານລ້ຽງນ້ຳຊາມີທ່ານໂຄສິດ ໄພພິບູນ ກົງສຸນໃຫຍ່ລາຊະອານາຈັກໄທປະຈຳຄຸນໝິງ,ທ່ານອູມິວຕິງ ກົງສຸນໃຫຍ່ມຽນມ້າປະຈຳຄຸນໝິງແລະທ່ານພົງສະຫວັດ ພູມາວົງ ກົງສຸນໃຫຍ່ສປປລາວປະຈຳຄຸນໝິງ,ທ່ານກົງສຸນໃຫຍ່ທັງສາມໄດ້ພ້ອມກັນກ່າວສັນລະເສີນສາມວາລະສານ

ທີ່ໄດ້ມີບົດບາດອັນສຳຄັນໃນການຕິດຕໍ່ລຸ່ລ່ວງກັນລະຫວ່າງຈີນ, ລາວ, ມຽນມ້າແລະໄທ ທີ່ງານລ້ຽງນ້ຳຊາ.



ທ່ານພົງສະຫວັດ ພູມາວົງ ກົງສຸນໃຫຍ່ສປປລາວປະຈຳຄຸນໝິງໄດ້ກ່າວທີ່ງານລ້ຽງນ້ຳຊາວ່າ:ຂໍຂອບໃຈສປຈີນແລະຄະນະປົກຄອງປະຊາຊົນແຂວງຢູນນານທີ່ໄດ້ລິເລີ່ມຈັດພິມວາລະສານ«ຈຳປາ»ສະບັບພາສາລາວໃນປີນີ້, ມັນໄດ້ມີບົດບາດສຳຄັນເພື່ອເພີ່ມພູນຄູນສ້າງມິດຕະພາບຈີນ--ລາວຕື່ມອີກ, ເປັນຂົວສະພານມິດຕະພາບລາວ--ຈີນ. ຜູ້ຊີ້ນຳໃນກະຊວງການຕ່າງປະເທດສປປລາວໄດ້ຕີລາຄາສູງຕໍ່ວາລະສານ«ຈຳປາ». ປະຈຸບັນຕາມຖ້ຽວບິນບໍລິສັດລາວເດີນອາກາດກໍ່ມີການຈຳໜ່າຍວາລະສານດັ່ງກ່າວ. ທ່ານອູມິວຕິງ ກົງສຸນໃຫຍ່ມຽນມ້າປະຈຳຄຸນໝິງໄດ້ກ່າວໃນງານລ້ຽງນ້ຳຊາວ່າ:ວາລະສານ«ມຸງຄຸນ»ສະບັບພາສາມຽນມ້າໄດ້ຈັດທຳມາແຕ່ໃດ ໆ, ຫຼາຍປີມາເປັນເພື່ອນບໍລິສຸດຂອງນັກອ່ານມຽນມ້າໂດຍຕະຫຼອດ. ມັນໄດ້ໂຄສະນາເຜີຍແຜ່ປະເທດຈີນແລະຢູນນານເປັນຢ່າງດີ, ຊຶ່ງໄດ້ສົ່ງເສີມຊຸກຍູ້ມິດຕະພາບຂອງປະຊາຊົນມຽນມ້າ--ຈີນສອງຊາດ, ມີບົດບາດສຳຄັນສຳລັບປະຊາຊົນມຽນມ້າເຂົ້າໃຈຮັບຮູ້ປະເທດຈີນ, ສຶກສາຮ່ຳຮຽນຄວາມຮູ້ທາງວັດທະນະທຳຈີນ, ແລະກໍ່ຫວັງວ່າຜ່ານວາລະສານ«ມຸງຄຸນ»ໃຫ້ປະຊາຊົນຈີນເຂົ້າໃຈຮັບຮູ້ມຽນມ້າຫຼາຍກວ່ານີ້ອີກ. ທ່ານໂຄສິດ ກົງສຸນໃຫຍ່ລາຊະອານາຈັກໄທປະຈຳຄຸນໝິງກ່າວວ່າ:ສະຖານກົງສຸນຂອງພວກເຮົາໄດ້ຈັດສົ່ງນິດຕະຍະສານ«ແມ່ນ້ຳໂຂງ»ພາສາໄທທຸກສະບັບແກ່ເຈົ້ານາຍບຸກຄົນທີ່ສຳຄັນຂອງລັດຖະບານໄທແລະບຸກຄະລາກອນພາກສ່ວນກ່ຽວຂ້ອງນຳໄປອ່ານ. ຍັງມີຄົນໄທຈຳນວນຫຼາຍກໍ່ອ່ານນິດຕະຍະສານສະບັບນີ້, ມີຮ້ານຂາຍປຶ້ມຫຼາຍຮ້ານກໍ່ຈຳໜ່າຍຂາຍນິດຕະຍະສານດັ່ງກ່າວ. ເພາະ«ແມ່ນ້ຳໂຂງ»ເປັນນິດຕະຍະສານທີ່ອ່ານງ່າຍລຽບງ່າຍ, ໄດ້ຮັບຄວາມນິຍົມຊົມຊອບຈາກຜູ້ຄົນທັງຫຼາຍ.






ບັນດາທ່ານກົງສຸນໃຫຍ່ທັງສາມປະຈຳຄຸນໝິງໄດ້ຢືນຢັນຜົນທີ່ໄດ້ມາຈາກສາມວາລະສານດັ່ງກ່າວຢ່າງເຕັມສ່ວນ, ທັງສັນລະເສີນແຜນນະໂຍບາຍຕ່າງປະເທດທີ່ຮ່ວມມືພັດທະນາສ້າງຜົນລາຍຮັບນຳກັນລະຫວ່າງຈີນກັບບັນດາປະເທດ, ແລະເຫັນວ່າ:ການພັດທະນາຂອງປະເທດຈີນໄດ້ສ້າງໂອກາດອຳນວຍໃຫ້ແກ່ໂລກແລະປະເທດອາຊີຕາເວັນອອກສຽງໃຕ້. ບັນດາກົງສຸນໃຫຍ່ສາມທ່ານໄດ້ອວຍພອນໃຫ້ວາລະສານທັງສາມຈົ່ງຈັດທຳນັບມື້ນັບດີຂຶ້ນ, ພ້ອມທັງເສີມຂະຫຍາຍບົດບາດອັນດີເລີດກວ່າເກົ່າໃນວາລະດີຖີຂຶ້ນປີໃໝ່.








# ນາຕະກໍາເພງຊົນເຜົ່າຢູນນານເພີ່ມສີສັນທີ່ກົວລາລໍາເປີ




## 云南民族歌舞添彩吉隆坡

马来西亚—中国（云南）文化与艺术交流巡回大汇演在马来西亚首都吉隆坡举行。这次演出是为纪念郑和下西洋600周年而开展的一次文化与艺术交流活动。云南民族歌舞团在吉隆坡云星剧场演出了主题为《踏歌彩云》的歌舞大汇演，给美丽的吉隆坡增添了异样的色彩。

ການສະແດງເຄື່ອນທີ່ລວມສູນແລກປ່ຽນສິລະປະວັດທະນະທໍາມາເລເຊຍ--ຈີນ(ຢູນນານ)ຄັ້ງໃຫຍ່ໄດ້ຈັດຂຶ້ນທີ່ນະຄອນຫຼວງກົວລາລໍາເປີແຫ່ງມາເລເຊຍ. ນາຍົກລັດຖະມົນຕີມາເລເຊຍ ບາຕາວີໄດ້ສົ່ງຈົດໝາຍອວຍພອນຕໍ່ການເຄື່ອນໄຫວສະແດງໃນຄັ້ງນີ້, ໃນຈົດໝາຍກ່າວວ່າ: ຮູ້ສຶກດີໃຈເປັນຢ່າງຍິ່ງເພື່ອຕ້ອນຮັບຄະນະຜູ້ແທນຢູນນານປະເທດຈີນມາສະແດງຢ້ຽມຢາມທີ່ມາເລເຊຍ. ການເຄື່ອນໄຫວແລກປ່ຽນດັ່ງກ່າວມັນເປັນການຕັ້ງໜ້າສົ່ງເສີມຄວາມເຂົ້າໃຈກັນແລະເປັນແວ່ນແຍງເຊື່ອງກັນແລະກັນລະຫວ່າງວັດທະນະທໍາທີ່ຕ່າງກັນບົນລະດັບສາກົນ. ມາເລເຊຍຈະເຊີດຊູແລະສະໜັບສະໜູນການແລກປ່ຽນສິລະປະວັດທະນະທໍາມາເລເຊຍ--ຈີນສອງປະເທດສະເໝີຕົ້ນສະເໝີປາຍຕະຫຼອດໄປ.

ທ່ານນາງຢຽນຢຽວສີ່ງຫົວໜ້າພະແນກໂຄສະນາຄະນະພັກແຂວງຢູນນານແລະທ່ານຮວາງຈິນຫົງຜູ້ຊ່ວຍວ່າການລັດຖະມົນຕີກະຊວງສິລະປະວັດທະນະທໍາແລະບູຮານວັດຖຸໄດ້ຂຶ້ນກ່າວຄໍາປາໄສໃນພິທີເປີດສາກ. ທ່ານນາງຢຽນຢຽວສີ່ງກ່າວຄໍາປາໄສວ່າ: ການມາຢ້ຽມຢາມຄັ້ງນີ້ ບໍ່ພຽງແຕ່ສະແດງວັດທະນະທໍາອັນອຸດົມສົມບູນສົດຂອງ 26 ຊົນເຜົ່າແຂວງຢູນນານຕໍ່ປະຊາຊົນມາເລເຊຍເທົ່ານັ້ນ, ຍັງນໍາຄວາມຢື້ຢາມຖາມຂ່າວອັນສຸດຈະລິດໃຈແລະສົ່ງພອນອັນປະເສີດມາພ້ອມອີກດ້ວຍ. ກ່ອນນີ້ 600

ປີ, ທ່ານເຈີນເຫີໄດ້ນຳພາກອງເຮືອໃຫຍ່ໂຕນາຢ້ຽມຢາມມາລະກາຂອງທ່ານຫຼາຍຄັ້ງ, ໄດ້ທຳການຄ້າຂາຍຕ່າງຝ່າຍຕ່າງມີຜົນປະໂຫຍດກັບປະຊາຊົນໃນທ້ອງຖິ່ນດັ່ງກ່າວ, ແລະໄດ້ສ້າງຂົວມິດຕະພາບສົ່ງຂ່າວຫາກັນແລະແລກປ່ຽນວັດທະນະທຳ--ເສດຖະກິດການຄ້າລະຫວ່າງຈີນ--ມາເລເຊຍສອງຊາດ, ອັນໄດ້ສະແດງເຖິງຄວາມມຸ່ງມາດປາຖະໜາອັນດີງາມທີ່ຢູ່ຮ່ວມກັນໂດຍສັນຕິຂອງປະຊາຊົນຈີນແລະປະຊາຊົນມາເລເຊຍ. ຄະນະຜູ້ແທນຢູນນານເດີນທາງມາປະເທດມາເລເຊຍຄັ້ງນີ້, ກໍ່ເພື່ອມາເຜີຍແຜ່ມິດຈິດມິດໃຈຂອງປະຊາຊົນຈີນ. ທະແນມແຕ່ພວກເຮົາສືບຕໍ່ເສີມຂະຫຍາຍນ້ຳໃຈ “ຖານເພື່ອນບ້ານສັນມິດທີ່ປອງດອງກັນ” , ຈີນແລະມາເລເຊຍຈະກາຍເປັນເພື່ອນບ້ານໃກ້ຄຽງທີ່ດີ, ໝູ່ຄູ່ທີ່ດີແລະເພື່ອນມິດທີ່ດີຕະຫຼອດໄປ.

ການສະແດງຄັ້ງນີ້ແມ່ນການເຄື່ອນໄຫວແລກປ່ຽນສິລະປະວັດທະນະທຳຄັ້ງໜຶ່ງທີ່ລະນຶກເຖິງທ່ານເຈີນເຫີລົງສູ່ມະຫາສະໝຸດຕາເວັນຕົກຄົບຮອບ 600ປີ. ຈີນແລະມາເລເຊຍສອງຝ່າຍໄດ້ເອົາໃຈໃສ່ເປັນພິເສດຕໍ່ການເຄື່ອນໄຫວຄັ້ງນີ້, «ໜັງສືພິມຈີນ», «ໜັງສືພິມພານິດນານຢາງ»ແລະ«ໜັງສືພິມລາຍວັນຊິນໂຈວ»ຊຶ່ງເປັນໜັງສືພິມອັກສອນຈີນໃນມາເລເຊຍກໍ່ໄດ້ພິມຂ່າວທີ່ກ່ຽວຂ້ອງ, ທະຍອຍກັນຕີລາຄາວິຈານການແລກປ່ຽນຄັ້ງໃຫຍ່ທີ່ເປັນການຊຸກຍູ້ສິລະປະວັດທະນະທຳ, ການຄ້າແລະທ່ອງທ່ຽວຂອງສອງປະເທດຈີນແລະມາເລເຊຍ.

ຄະນະນາຕະກຳເພງຊົນເຜົ່າຢູນນານໄດ້ສະແດງນາຕະກຳເພງລວມສູນຄັ້ງໃຫຍ່ທີ່ມີຫົວຂໍ້«ເຕັ້ນລຳທຳເພງບົນເມກເຝືອສວຍສົດງົດງາມ»ທີ່ໂຮງລະຄອນຢູນຊິນກົວລາລຳເປີ. ຍັງປະກອບໄປດ້ວຍລາຍການອັນດູດດື່ມງາມຕາເຊັ່ນ: «ກອງດຳນາ», «ນິ້ວຕີນຫຼັງຕີນ», «ດູເບິ່ງ»ແລະ«ພື້ນແຜ່ນຢູນນານທີ່ຫຼາຍສັນພັນສີ», ອັນໄດ້ແຖມຕື່ມທະວີສີສັນທີ່ຜິດແຜກແຕກຕ່າງໃຫ້ແກ່ກົວລາລຳເປີເມືອງເອກທີ່ສວຍງາມ.





# ອຸດສາຫະກຳທ່ອງທ່ຽວຄຸນໝິງຫັນຈາກແບບທັດສະນາຈອນໄປສູ່ແບບພັກຜ່ອນຢ່ອນກາຍ

## 昆明旅游产业从观光型转向休闲型

昆明市决定对旅游产业发展思路实施重大调整，从单一的观光型向观光、休闲、度假、康体、会展、商务复合型转变。

ນະຄອນຄຸນໝິງຕົກລົງດັດປັບຄັ້ງໃຫຍ່ກ່ຽວກັບຫົວງນຶກພັດທະນາອຸດສາຫະກຳທ່ອງທ່ຽວ, ໂດຍຫັນຈາກແບບທັດສະນາຈອນແຕ່ຢ່າງດຽວໄປສູ່ແບບສັງລວມທັດສະນາຈອນ, ພັກຜ່ອນຢ່ອນກາຍ, ມາພັກການ, ຮັກສາປົວໂຕ, ຈັດງານວາງສະແດງຕະຫຼອດເຖິງທຸລະກິດການຄ້າ.

ເປົ້າໝາຍສ້າງທຸລະກິດຄັ້ງທີສອງຂອງອຸດສາຫະກຳທ່ອງທ່ຽວຄຸນໝິງແມ່ນຕັ້ງເປົ້າໝາຍຫົວຂໍ້ຄື: ທ່ຽວໄປມາຢູ່ຄຸນໝິງ, ພັກຜ່ອນຢ່ອນກາຍຢູ່ຄຸນໝິງ, ຮັກສາບຳລຸງກາຍຢູ່ຄຸນໝິງແລະສັງເກດຢັ່ງຮູ້ປະສົບການຢູ່ຄຸນໝິງ, ຊຸກຍູ້ອຸດສາຫະກຳທ່ອງທ່ຽວ



ຄຸນໝິງຫັນຈາກແບບທັດສະນາຈອນແຕ່ຢ່າງດຽວໄປສູ່ແບບສັງລວມທັດສະນາຈອນພຽບພ້ອມພັກຜ່ອນຢ່ອນກາຍ,ມາພັກການ,ຮັກສາປົວໂຕ,ຈັດງານວາງສະແດງແລະທຸລະກິດການຄ້າ,ພະຍາຍາມສ້າງຄຸນໝິງເປັນຈຸດທີ່ໝາຍທັດສະນາຈອນແລະພັກຜ່ອນຢ່ອນກາຍພາຍໃນແລະນອກປະເທດພ້ອມທັງເປັນສະຖານທີ່ທ່ອງທ່ຽວສາກົນທີ່ມາພັກການຫຼືພັກຜ່ອນຢ່ອນກາຍເຊິ່ງຫັນໜ້າສູ່ອາຊີອາຄະເນແລະອາຊີໃຕ້.

ການສ້າງທຸລະກິດຄັ້ງທີສອງຂອງການທ່ອງທ່ຽວຄຸນໝິງ,ວິທີເຕີບໂຕຂອງອຸດສາຫະກຳທ່ອງທ່ຽວ ກ່ອນອື່ນຕ້ອງຫັນຈາກແບບບໍ່ລະອຽດໄປສູ່ແບບນິລະສຸມ.ການສ້າງສາພັດທະນາເຂດທິວທັດຕ້ອງເອົາໃຈໃສ່ຕໍ່ການຖືຄົນເປັນກົກ,ຍົກເນື້ອໃນຄວາມໝາຍວັດທະນະທຳໃຫ້ສູງ,ເອົາໃຈໃສ່ຕໍ່ນັກທ່ອງທ່ຽວຜູ້ລະດັບສູງ,ດຶງດູດນັກທ່ອງທ່ຽວຜູ້ລະດັບສູງ.ປະການສອງຄື: ຕ້ອງຊຸກຍູ້ໃຫ້ໂຄງຮ່າງການທ່ອງທ່ຽວຄຸນໝິງຫັນແບບທັດສະນາຈອນແຕ່ຢ່າງດຽວເປັນແບບສັງລວມທັດສະນາຈອນພຽບພ້ອມການພັກຜ່ອນຢ່ອນກາຍ,ມາພັກການ,ຮັກສາປົວໂຕ,ຈັດງານວາງສະແດງແລະທຸລະກິດການຄ້າ,ບັນລຸເຖິງແບບຫັນປ່ຽນພາວະທຸລະກິດທ່ອງທ່ຽວເທື່ອລະກ້າວ,ເຮັດໃຫ້ອັດຕາສ່ວນລາຍຮັບຈາກອຸດສາຫະກຳທ່ອງທ່ຽວທາງດ້ານພັກຜ່ອນຢ່ອນກາຍ,ມາພັກການ,ງານວາງສະແດງແລະທຸລະກິດການຄ້າທະວີສູງຂຶ້ນຢ່າງເດັ່ນຊັດ,ຮັບຕ້ອນຍຸກສະໄໝພັກຜ່ອນຢ່ອນກາຍຄືບຄານມາເຖິງ.

ຕໍ່ນີ້ເມືອໜ້າ,ບ່ອນອ້ອມຂ້າງແຫຼ່ງທິວທັດຕ້ອງວາງໂຄງການເຂດແຄວ້ນ,ຕ້ອງເອົາຊົນນະບົດທີ່ຢູ່ບໍລິເວນທັງໝົດບັນຈຸເຂົ້າໃນໂຄງການ. ໂດຍຜ່ານໂຄງການທ່ອງທ່ຽວ,ເພີ່ມທະວີການປົກປັກຮັກສາແລະຄຸ້ມຄອງການພັດທະນາຊັບພະຍາກອນທ່ອງທ່ຽວ,ສະກັດກັ້ນການຊ່ວງຊິງກັນໂດຍບໍ່ມີລະບຽບຫຼືກໍ່ສ້າງຢ່າງຫຼັບຫູຫຼັບຕາ,ຈັດສັນປັບປຸງປັດໄຈຊັບສິນ,ຊຸກຍູ້ການພັດທະນາເສດຖະກິດສັງຄົມຂອງເຂດແຄວ້ນຢ່າງປະສານກົມກຽວ;ຕ້ອງເສີມຂະຫຍາຍບົດບາດພື້ນຖານຢ່າງເຕັມສ່ວນໃນການຈັດສັນຊັບພະຍາກອນເຂົ້າຕະຫຼາດ,ຕັ້ງໜ້າລິເລີ່ມສົ່ງເສີມໃຫ້ທົ່ວສັງຄົມດຳເນີນທຸລະກິດທ່ອງທ່ຽວ,ເດີນຕາມຊ່ອງທາງໃໝ່ພັດທະນາການທ່ອງທ່ຽວໂດຍອາໄສ "ທຶນປະຊາ,ກຳລັງປະຊາແລະສະຕິປັນຍາຂອງປະຊາ" ;ຕ້ອງຊຸກຍູ້ການປະຕິຮູບວິສາຫະກິດທ່ອງທ່ຽວ,ສ້າງໂຄງປະກອບບໍລິຫານດ້ວຍນິຕິບຸກຄົນຢ່າງສົມບູນ,ເຊີດຊູຄ້ຳຊູວິສາຫະກິດທ່ອງທ່ຽວທີ່ມີພະລັງແໜ້ນໜາເຂົ້າຮ່ວມການດັດສົມປັບປ່ຽນລັດວິສາຫະກິດປະຈຳ,ຊຸກດັນການປະຕິຮູບກຳມະສິດຂອງໂຮງແຮມ,ຫ້າມບໍ່ໃຫ້ເອົາທຶນຂອງລັດໄປລົງທຶນໂຮງແຮມ,ສ່ວນທຶນຂອງລັດໃນປະຈຸບັນຕ້ອງຖອນອອກເປັນເທື່ອລະກ້າວ,ອົງການພັກແລະລັດຕ້ອງຕັດສາຍເຊື່ອມໂຍງຈາກໂຮງແຮມທີ່ສັງກັດໃຫ້ໝົດໄປ.

ຕາມທີ່ໄດ້ຊາບມາວ່າ,ເຂດທິວທັດໃຫຍ່ ໆເຊັ່ນ:ປ່າຫີນແລະສວນໂລກທີ່ຄຸນໝິງໄດ້ວາງໂຄງການແລະຍຸດທະສາດພັດທະນາແບບວິທະຍາສາດ,ອອກແຮງຍົກຖານະວັດທະນະທຳໃຫ້ສູງ,ປະດິດສ້າງລະບົບອັນໃໝ່,ເພື່ອເປັນຜູ້ນຳໜ້າພາທາງຂອງການທ່ອງທ່ຽວຄຸນໝິງ.





# ເວທີປາຖະກະຖາຂັ້ນສູງກ່ຽວກັບການຮ່ວມມືເສດຖະກິດອະນຸພາກພື້ນແມ່ນ້ຳລານຊ້າງ--ແມ່ນ້ຳຂອງໄດ້ຈັດຂຶ້ນທີ່ຄຸນໝິງ

**澜沧江–湄公河次区域经济合作高级论坛在昆明举行**

澜沧江——湄公河次区域经济合作与发展战略高级论坛在昆明举行。云南省有关部门联合邀请国内知名专家，为云南省企业家如何参与澜湄次区域经济合作指点迷津。

ເວທີປາຖະກະຖາຂັ້ນສູງກ່ຽວກັບການຮ່ວມມືເສດຖະກິດອະນຸພາກພື້ນແມ່ນ້ຳລານຊ້າງ--ແມ່ນ້ຳຂອງແລະຍຸດທະສາດພັດທະນາໄດ້ຈັດຂຶ້ນທີ່ຄຸນໝິງ. ພາກສ່ວນກ່ຽວຂ້ອງຢູນນານໄດ້ປະສົມກັນເຊື້ອເຊີນຜູ້ຊ່ຽວຊານຊື່ດັງພາຍໃນປະເທດເພື່ອຊີ້ທິດບອກທາງແກ່ນັກທຸລະກິດແຂວງຢູນນານຈະເຂົ້າຮ່ວມການຮ່ວມມືເສດຖະກິດອະນຸພາກພື້ນແມ່ນ້ຳລານຊ້າງ--ແມ່ນ້ຳຂອງດ້ວຍປະການໃດ.

ເວທີປາຖະກະຖາຄັ້ງນີ້ໂດຍຄະນະກຳມະການເສດຖະກິດແຂວງຢູນນານພ້ອມດ້ວຍພະແນກບຸກຄະລາກອນຢູນນານເປັນຜູ້ຈັດທຳ, ໂດຍໄດ້ເຊີນທ່ານຊີໜີງໜີງ ຮອງເລຂາທິການໃຫຍ່ທັງເປັນກຳມະການສະພາການຄ້າຈີນ--ອາຊຽນຝ່າຍຈີນຖ່າຍທອດ«ການຄືບໜ້າຫລ້າສຸດຂອງເຂດເສລີການຄ້າຈີນ--ອາຊຽນແລະໂອກາດທີ່ຕາມມາ», ສາດສະດາຈານຢາງປາວຢຸນໃນວິທະຍາຄານວິເທດສຳພັນແຫ່ງມະຫາວິທະຍາໄລປັກກິ່ງກ່າວແນະນຳສະພາບການຮ່ວມມືເສດຖະກິດລະຫວ່າງຢູນນານແລະອະນຸພາກພື້ນແມ່ນ້ຳຂອງ, ສາດສະດາຈານວູຜິງໃນມະຫາວິທະຍາໄລວິທະຍາສາດ--ວິສະວະກຳຄຸນໝິງດຳເນີນການວິໄຈ ; SWOT ທີ່ດັດປັບໂຄງປະກອບຊັບສິນໃນເຂດຊາຍແດນຢູນນານຕາມຈັງຫວະກ້າວGMS. ຍັງເຊື້ອເຊີນບໍລິສັດເຫຼັກກ້າຄຸນໝິງແລະບໍລິສັດຮ່ວມມືສາກົນແຂວງຢູນນານແນະນຳບົດຮຽນປະສົບຜົນທີ່ເຂົາເຈົ້າເຂົ້າຮ່ວມການຮ່ວມມືເສດຖະກິດອະນຸພາກພື້ນແມ່ນ້ຳລານຊ້າງ--ແມ່ນ້ຳຂອງ. ຜູ້ຮັບຜິດຊອບມີສ່ວນກ່ຽວຂ້ອງຂອງບັນດາວິສາຫະກິດຂະໜາດໃຫຍ່ແລະຂະໜາດກາງໃນທົ່ວແຂວງ, ບໍລິສັດຫຸ້ນສ່ວນ, ກົມກອງສູນກາງປະຈຳຢູນນານ, ວິສາຫະກິດຜະລິດແລະວິສາຫະກິດຈໍລະຈອນກໍ່ໄດ້ຮ່ວມປະຊຸມຢ່າງພ້ອມພຽງ.

# MEKONG HOTEL

## 湄公酒店

服务中国人，万象有湄公；入住湄公，如在家中

# ໂຮງແຮມ ແມ່ຂອງ




湄公酒店，是中老合资并成立于 1994 年。酒店拥有四栋建筑楼，是首都万象市最大的建筑楼群之一。楼内设有：标房、商务公寓和写字间等。配套服务项目：北京饭庄、夜总会、卡拉 OK 包房、商务中心、会议室、洗熨房、停车场等。全部客房配有：空调、中餐、中文电视、电话、冰箱、卫生间等服务设施。

湄公酒店位于万象市中心，距商业区仅 500 米，离机场 2 公里。前临老挝国家重要的交通枢纽 13 号公路，后依东南亚名河—湄公河 300 米，与泰国隔河相望，地理位置优越，交通便利。客房宽敞明亮，舒适安全，设备齐全，并配有中英文服务和 24 小时保安服务，是商务、旅游、会议、办公及中长期居住和设立办事处的最佳场所。



## Mekong Hotel.We’ve got it all!

Mekong Hotel offers excellent facilities in a superb location,with the mighty Mekong river flowing just be-hind and at a reasonable price.

Our facilities includes hotel rooms,furnished apartment,office space,the Beijing Restaurant,Friendship Night Club,Karaoke and a fully equipped business center.Free transfer service from and to airport both ways.

Whether you need somewhere to sleep,work or relax,the Mekong Hotel is a ideal place.







Address:Luangprabang Rd.Tel:(856 – 21)212937–9 Fax: (856 – 21)212822
E – mail:sales@mekong–ht.com,Website:www.mekong–ht.com










ຕ້ອງການຂໍ້ມູນລະອຽດ ເຊີນຕິດຕໍ່: ບໍລິສັດທ່ອງທ່ຽວ ຈຳປາລາວ

For more information, Please contact CHAMPA LAO TRAVEL

TEL:(++865.21).216616. FAX:(++856.21)215260.

website:www.champalao.muonglao.com    Email:chamlao@laotel.com

# ຈຳປາລາວ





/ຊົນທ່ານ ທ່ອງທ່ຽວ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.
ດິນແດນທີ່ສວຍງາມ ດ້ວຍທຳມະຊາດ,ອຸດົມຮັ່ງມີທາງ ດ້ານປະຫວັດສາດ,
ວັດທະນະທຳ ແລະຫລາຍຊົນຊາດ ຊົນເຜົ່າ,
ເປັນຕົ້ນ: ນະຄອນຫລວງວຽງຈັນ-ເມືອງມໍລະດົກໂລກຫລວງພະບາງ-
ວັດພູຈຳປາສັກ-ທົ່ງໄຫຫີນ-ນ້ຳຕົກຄອນພະເພັງ-ຫລີຜີ ແລະອື່ນ...



主要有 ：
首都万象市
世界文化遗产——
琅勃拉邦
占芭色石庙
查尔平原（石缸平原）
宽帕盆大瀑布
里皮等名胜古迹

## 中国－东盟高官会议在吉隆坡举行

中国－东盟高官会议在吉隆坡会议中心举行。双方积极评价一年来中国－东盟关系取得的积极进展，重点讨论了第九次中国－东盟领导人会议的准备工作。

# ກອງປະຊຸມເຈົ້ານາຍຊັ້ນສູງຈີນ–
# ໄດ້ຈັດຂຶ້ນທີ່ນະຄອນກົວລາລຳເປີ



# – –ອາຊຽນ




ກອງປະຊຸມເຈົ້ານາຍຊັ້ນສູງຈີນ--ອາຊຽນໄດ້ຈັດຂຶ້ນທີ່ສູນກອງປະຊຸມກົວລາລຳເປີ. ທັງສອງຝ່າຍໄດ້ຕີລາຄາສູງຕໍ່ສາຍພົວພັນຈີນ--ອາຊຽນທີ່ມີການຄືບໜ້າອັນຫ້າວຫັນໃນປີທີ່ຜ່ານມາ, ຈຸດສຸມແມ່ນປຶກສາຫາລືວຽກງານກະກຽມກອງປະຊຸມຜູ້ນຳຈີນ--ອາຊຽນຄັ້ງທີ 9.

ທ່ານສູຍທຽນໄຄ ອະທິບໍດີກົມອາຊີຂອງກະຊວງການຕ່າງປະເທດຈີນໄດ້ກ່າວໃນກອງປະຊຸມວ່າ: ທັງສອງຝ່າຍເຫັນເປັນເອກະສັນກັນວ່າ: ຜ່ານການພະຍາຍາມພ້ອມກັນ ກອງປະຊຸມຜູ້ນຳຈີນ--ອາຊຽນຄັ້ງນີ້ແນ່ນອນຈະໄດ້ຮັບໝາກຜົນອັນໃຫຍ່ຫຼວງ, ມັນຈະເພີ່ມທະວີສາຍພົວພັນເປັນຄູ່ຍຸດທະສາດລະຫວ່າງຈີນ--ອາຊຽນຫັນໜ້າສູ່ສັນຕິພາບແລະຄວາມວັດທະນາຖາວອນຕື່ມອີກ. ກ່ອນປະຊຸມ ທ່ານອູ້ຕ້າເວີຍ ຜູ້ອ່ານການຊ່ວຍລັດຖະມົນຕີກະຊວງການຕ່າງປະເທດຈີນໄດ້ພົບປະທ່ານລາຈັກເລຂາທິການໃຫຍ່ກະຊວງການຕ່າງປະເທດມາເລເຊຍ. ທ່ານລາຈັກເວົ້າວ່າ: ຮ່າງຖະແຫຼງການກ່ຽວກັບກອງປະຊຸມຫົວໜ້າລັດຖະບານອາຊຽນໄດ້ກຽມສຳເລັດແລ້ວ, ປະຈຸບັນນີ້ ທຸກຝ່າຍອາຊຽນກຳລັງດຳເນີນການປຶກສາຫາລືກ່ຽວກັບຮ່າງຖະແຫຼງການກອງປະຊຸມສຸດຍອດອາຊີຕາເວັນອອກ. ທ່ານອູ້ຕ້າເວີຍສະແດງຄວາມຫວັງວ່າ: ກອງປະຊຸມສຸດຍອດອາຊຽນຈະສາມາດປະສົບຜົນສຳເລັດຢ່າງຕັ້ງໜ້າ, ເພື່ອສ້າງພື້ນຖານໃຫ້ແກ່ການເປີດການຮ່ວມມືລະຫວ່າງທຸກຝ່າຍທີ່ກ່ຽວຂ້ອງຕໍ່ໄປພາຍໜ້າ, ເພື່ອບັນລຸເຖິງການພັດທະນາພ້ອມກັນລະຫວ່າງອາຊີຕາເວັນອອກກັບເຂດແຄວ້ນອື່ນໆ. ທ່ານກ່າວເນັ້ນວ່າ: ຈີນສະໜັບສະໜູນອາຊຽນເສີມຂະຫຍາຍບົດບາດຊີ້ນຳບາດກ້າວການຮ່ວມມືໃນອາຊີຕາເວັນອອກ, ທ່ານຍ້ອງຍໍຊົມເຊີຍມາເລເຊຍໄດ້ພະຍາຍາມກະກຽມກອງປະຊຸມທີ່ເປັນລະບົບຂອງອາຊຽນ.

ໃນໄລຍະນີ້ ຢູ່ກົວລາລຳເປີ ຍັງໄດ້ຈັດກອງປະຊຸມເຈົ້ານາຍຊັ້ນສູງອາຊຽນ, ກອງປະຊຸມກະກຽມຂອງຄະນະບໍລິຫານງານສະມາຄົມອາຊຽນ, ກອງປະຊຸມເຈົ້ານາຍຊັ້ນສູງເສດຖະກິດອາຊຽນແລະກອງປະຊຸມເຈົ້ານາຍຊັ້ນສູງອາຊຽນ--ຍີ່ປຸ່ນ--ສ.ເກົາຫຼີ. ຖະແຫຼງຂ່າວສະບັບໜຶ່ງທີ່ແຈກຢາຍຫຼັງຈາກກອງປະຊຸມກ່າວວ່າ: ກອງປະຊຸມອາຊຽນໄດ້ອະພິປາຍຮ່າງເອກະສານ 22 ສະບັບໂດຍມີຜູ້ນຳແຕ່ລະປະເທດລົງນາມຫລືຜ່ານ.

ກອງປະຊຸມເຈົ້ານາຍຊັ້ນສູງເສດຖະກິດອາຊຽນໄດ້ບັນລຸຂໍ້ຕົກລົງສາມສັນຍາກ່ຽວກັບການຮັບຮອງເຊິ່ງກັນແລະກັນທີ່ຈັດສັນໂຄງການບໍລິການ, ເຮັດໃຫ້ກົນໄກພະລັງໄຟຟ້າແລະເອເລັກໂຕຼນິກເປັນແບບມາດຖານເອກະພາບກັນແລະສ້າງຕັ້ງ "ກົນໄກປ່ອງຢ້ຽມອັນໜຶ່ງ" ຂອງອາຊຽນເປັນຕົ້ນ. ສາມສັນຍາດັ່ງກ່າວນີ້ຈະໄດ້ອະພິປາຍກວດຜ່ານໃນກອງປະຊຸມລັດຖະມົນຕີເສດຖະກິດອາຊຽນທີ່ຈັດຂຶ້ນໃນວັນທີ 9. ກອງປະຊຸມຍັງໄດ້ປຶກສາຫາລືສະພາບການປະຈຸບັນທີ່ຈະສ້າງເຂດການຄ້າເສລີລະຫວ່າງອາຊຽນກັບຄູ່ສົນທະນາກັນຕະຫຼອດເຖິງກົນໄກທີ່ເພີ່ມທະວີການຕິດຕໍ່ພົວພັນລະຫວ່າງອາຊຽນກັບຈີນ ຍີ່ປຸ່ນແລະສ.ເກົາຫຼີຕື່ມອີກ.

# ອາຊຽນວາງແຜນສຸກເສີນປ້ອງກັນ ແລະຄວບຄຸມໂລກໄຂ້ຫວັດສັດປີກ



**东盟制订禽流感防控应急计划**

东盟秘书长王景荣表示，面对几个东盟国家已发生禽流感的情况，东盟制订出禽流感防控应急计划，进一步加强成员国之间的协调与合作，共同努力控制禽流感的蔓延。

ທ່ານວັງຈິນຢົງເລຂາທິການໃຫຍ່ສະມາຄົມອາຊຽນສະແດງວ່າ:ບາງປະເທດອາຊຽນໄດ້ປະເຊີນໜ້າກັບກໍລະນີໂລກໄຂ້ຫວັດສັດປີກເກີດຂຶ້ນ,ອາຊຽນໄດ້ວາງແຜນສຸກເສີນປ້ອງກັນແລະຄວບຄຸມໂລກໄຂ້ຫວັດສັດປີກແລ້ວເພື່ອເພີ່ມທະວີການປະສານກົມກຽວແລະຮ່ວມມືກັນລະຫວ່າງປະເທດສະມາຊິກຕື່ມອີກ,ພ້ອມກັນອອກແຮງພະຍາຍາມຄວບຄຸມການແຜ່ລະບາດຂອງໂລກໄຂ້ຫວັດສັດປີກ.

ທ່ານວັງຈິນຢົງກ່າວວ່າ:ໂລກໄຂ້ຫວັດສັດປີກມັນບໍ່ແມ່ນບັນຫາສະເພາະທີ່ປະເທດໜຶ່ງ ໆ ປະເຊີນໜ້າເທົ່ານັ້ນ,ຕ້ອງການໃຫ້ປະຊາຄົມໂລກພ້ອມພາກັນອອກແຮງໄປຄວບຄຸມການແຜ່ລະບາດ. ສະມາຊິກອາຊຽນກໍ່ໄດ້ສະແດງວ່າຈະປະສານສົມທົບກຳລັງຕ້ານໂລກໄຂ້ຫວັດສັດປີກພ້ອມທັງຍິນດີໃຫ້ການຊ່ວຍເຫຼືອແກ່ປະເທດສະມາຊິກອື່ນໆທີ່ມີຄວາມຫຍຸ້ງຍາກຂາດເຂີນ. ບັນດາປະເທດອາຊຽນຄວນເພີ່ມທະວີຕິດຕາມຄວບຄຸມໂລກໄຂ້ຫວັດສັດປີກ,ສ້າງການຕິດຕໍ່ສາຍດ່ວນແລະຊົມໃຊ້ຂໍ້ມູນຂ່າວສານສຳຄັນນຳກັນ. ທ່ານກ່າວເນັ້ນວ່າ:ເພີ່ມຄວາມໂປ່ງໃສຕໍ່ຂໍ້ມູນຂ່າວສານແມ່ນຂອດສຳຄັນທີ່ສຸດສຳລັບຈັດການວິກິດການ.

ທ່ານວັງຈິນຢົງຊີ້ອອກວ່າ:ປະສານກຳລັງກົມກຽວພິສູດເຊື້ອໄວຣັດໄຂ້ຫວັດສັດປີກຈະແຜ່ລະບາດໃນເຂດໃດເຂດໜຶ່ງຫລືບໍ່ພ້ອມທັງສະເໜີມາດຕາການຮັບມືຕອບໂຕ້ກໍ່ແມ່ນວຽກງານສຳຄັນຍິ່ງລາຍໜຶ່ງອີກ. ວຽກງານພຽບພ້ອມຍັງລວມທັງບົ່ງບອກໂຮງໝໍສະເພາະສຳລັບປິ່ນປົວບົວລະບັດຜູ້ຕິດເຊື້ອໂລກ,ຈັດຫາຢຸກຢາຕ້ານເຊື້ອໄວຣັດໃຫ້ພຽງພໍແລະໂຄສະນາເຜີຍແຜ່ຄວາມຮູ້ທາງດ້ານປ້ອງກັນເຊື້ອໂລກໃນໝູ່ມະຫາຊົນໃຫ້ທົ່ວເຖິງ.

ປຸກລະດົມກຳລັງຂອງລັດຖະບານບັນດາປະເທດອາຊຽນດຳເນີນການຄວບຄຸມໂລກໄຂ້ຫວັດສັດປີກຢ່າງເຂັ້ມງວດພ້ອມທັງອອກແຮງຈັດຫາທຶນຮອນຊຶ່ງເປັນວຽກງານລາຍໜຶ່ງອີກທີ່ອາຊຽນລົງມືປະຕິບັດເພື່ອທົດແທນຄ່າເສຍຫາຍທາງເສດຖະກິດແກ່ຄອບຄົວລ້ຽງສັດທີ່ໄດ້ຂ້າສັດປີກຢ່າງຫຼວງຫຼາຍຕາມຄຳສັ່ງຂອງພາກສ່ວນກ່ຽວຂ້ອງ.

ທ່ານຊີ້ເນັ້ນວ່າ:ເພີ່ມທະວີການໂຄສະນາເຜີຍແຜ່ຄວາມຮູ້ພື້ນຖານກ່ຽວກັບການປ້ອງກັນການຕິດແປດໂລກໄຂ້ຫວັດສັດປີກແກ່ຊຸມຊົນທີ່ມັກແຕະຕ້ອງກັບສັດປີກແລະຄົນລ້ຽງສັດປີກໃນບັນດາປະເທດແມ່ນໜ້າທີ່ອັນຮີບຮ້ອນລາຍໜຶ່ງ.

ເມື່ອກ່າວເຖິງການມານະພະຍາຍາມຄວບຄຸມໂລກໄຂ້ຫວັດສັດປີກຂອງປະເທດຈີນ,ທ່ານວັງຈິນຢົງສະແດງວ່າ:ລັດຖະບານຈີນໄດ້ເຮັດວຽກຄວບຄຸມໂລກໄຂ້ຫວັດສັດປີກຢ່າງຫຼວງຫຼາຍພາຍມາກ,ພ້ອມທັງເຮັດໃຫ້ຂໍ້ມູນຂ່າວສານມີຄວາມໂປ່ງໃສອີກ.







## 撒尼人——把美绣在衣服上

美丽的阿诗玛，包头红光闪，耳环垂两颊，面秀如皎月，身修似金竹，左手戴金戒，右手戴银镯，身披絮羊皮，漂亮的围腰带，美似老胡须，一缕又一缕，垂须颤悠悠。脚像黄萝卜，穿着绣花鞋，灰衣配黑裤，全身多协调。这就是云南彝族撒尼姑娘的服饰。



# ໄທຊານີ--ແສ່ວຄວາມງາມໃສ່ເສື້ອຜ້າ

ເມື່ອກ່າວເຖິງເສື້ອຜ້າອາພອນຂອງໄທຊານີເຜົ່າຢີ່ຢູນນານແລ້ວ ຄົນທັງຫຼາຍກໍ່ຈະຫວນຄິດເຖິງການແຕ່ງຕົວຂອງນາງອາສືມາ ອໍລະຊອນອ່ອນຊ້ອຍທີ່ເອ້ຢ້ອງໄປດ້ວຍລາຍຂັດດອກໄມ້ນາ ໆ ຊະນິດ. ຈັ່ງແມ່ນງາມແສນງາມ ສູດສາດສະດຸດສາຍຕາ. ໃນຄຳກອນເລົ່າເລື່ອງຂອງເຜົ່າຢີ່ «ອາສືມາ»ພັນລະນາໄວ້ວ່າ: "ອາສືມານາງສາວງາມຜຸດຜ່ອງ, ຜ້າຄຽນຫົວແດງແວວວາວ, ຕຸ້ມຫູຢ່ອນລົງພວງແກ້ມ, ໜ້າສວຍ ໆຄືວກົ່ງປານດວງເດືອນ, ຄິງກົມບາງງາມອ້ອນແອ້ນ, ນີ້ວມືຊ້າຍໃສ່ປອກແຫວນຄຳ, ມືຂວາຖືກ້ອງແຂນເງິນ, ຮັດສາຍແອວສວຍງາມ, ຖືເກີບແຜ່ນແສ່ວລວດລາຍ, ນຸ່ງໂສ້ງດຳຫົ່ມເສື້ອສີປອນປະສານກົມກຽວແທ້ດາຍ." ເສື້ອຜ້ານຸ່ງຖືຂອງນາງສາວຊານີໃນວັນນີ້ ກໍ່ບໍ່ຕ່າງຫຍັງກັບທີ່ກ່າວມາ, ມັນມີລັກສະນະອາບເອ້ຄວາມງາມຂອງຊີວິດທັງມີນິມິດໝາຍເຖິງໄວເພດຍິງຜູ້ໃຫຍ່ຜູ້ນ້ອຍ ຜູ້ຍັງເປັນສາວຫລືເອົາຜົວແລ້ວອີກ; ນອກນີ້ ຍັງເປັນສັນຍາລັກແຫ່ງຄວາມເຫຼື້ອມໃສສັດທາແລະຈິດຕະສຸນທອນທັດພ້ອມດ້ວຍເອກະລັກສະເພາະຂອງທຳນອງສິລະປະ. ຕາມປົກກະຕິເພດຍິງໄທຊານີຕ້ອງຮຽນຖັກແສ່ວຂີດລາຍດອກມາແຕ່ລາວຍັງນ້ອຍເພາະ





ສີໄມ້ລາຍມືຖັກແສ່ວຂິດລາຍດອກເກັ່ງຫລືບໍ່ເກັ່ງມັນໄດ້ຕິດພັນກັບໂຊກເປັນດີເປັນຮ້າຍສຳລັບລົມບ່າວສ້າງຄອບຄົວໃນອະນາຄົດຂອງຂາເຈົ້ານັ້ນເອງ. ການລົມບ່າວລົມສາວ, ເລືອກແຟນຫາຄູ່ຄອງຂອງເພດຊາຍ ກ່ອນອື່ນແມ່ນຂໍເອົາສາຍແອວລາຍດອກອັນເປັນຂອງຖັກແສ່ວລາຍຂິດຕິດຕົວຜູ້ສາວ. ລວດລາຍປະດັບຂອງໄທຊານີມີສີສັນກົມກືນສົດໃສ, ສີມີປານີດບັນຈົງ, ມີຈຸດພິເສດຂອງອຸິນເຜົ່າ. ຜ້າດອກຄຽນຫົວຂອງສາວຊານີປະກົດວ່າເປັນຂອງດຶງດູດສາຍຕາຄົນທີ່ສຸດໃນເຄື່ອງເອ້ຢ້ອງປະຈຳຕົວ. ຜ້າດອກຄຽນຫົວຖັກແສ່ວຊຶ່ງປະກອບໄປດ້ວຍເສັ້ນໄໝສີແດງ, ສີ້ວ, ຄາມ, ອິດ, ເຫຼືອງ, ຂຽວແລະຂາວທັງເຈັດ, ເຊີງຜ້າແຂບດ້ວຍຕຸ້ມເງິນ, ຜົມເປຍຍາວມ້ວນໄວ້ໃນຜ້າຄຽນຫົວ, ສອງສົ້ນຂອງຜ້າຄຽນຫົວຫຍິບ “ກະເບື້ອສີ” (ແຜລວດລາຍແສ່ວດອກຮູບສາມລ່ຽມ) ຕິດໃສ່, ເບື້ອງຂວາຍັງຫ້ອຍພວງໝາກປັດຫຼາຍພວງແລະຜົມດຳປອຍໜຶ່ງ. ພວງໝາກປັດຢ່ອນລົງຮອດໜ້າເອິກ, ເມື່ອຖືກຂາຍ່າງພວງໝາກປັດກວັດແກວ່ງໄປມາ ປ່ຽນລົ້ນໄປດ້ວຍໄວໜຸ່ມຄະນອງມີສະເໜ່ງາມວິໄລ. ເທິງຜ້າຄຽນຫົວຂອງສາວທີ່ບໍ່ທັນແຕ່ງດອງສຽບປ້າຍນ້ອຍ ໆແມງກະເບື້ອຢູ່ສອງຂ້າງ, ສ່ວນແມ່ຍິງເອົາຜົວແລ້ວນັ້ນ ປົດປ້າຍມ້ຽນໄວ້ຈອມຫົວ, ບໍ່ໃສ່ພວງໝາກປັດແລະຕຸ້ມເງິນນັ້ນອີກ. ພໍເມື່ອອ້າຍບ່າວແນມເຫັນ “ກະເບື້ອສີ” ຫາຍຕົວກໍ່ບໍ່ຫານໄປລົມໄປຕື້ອີກເພາະເປັນເມຍເພິ່ນ. ແມ່ຍິງຜູ້ແຕ່ງດອງແລ້ວນັ້ນສີເສື້ອກໍ່ຄ່ອຍ ໆປ່ຽນຈາກສີອ່ອນກາຍເປັນສີແກ່ ເພື່ອສະແດງເຖິງຄວາມສຸກງອມແລະຄ່ຽມຄົມ.

ການຂິດລາຍດອກເປັນສີມີປະເສີດຂອງແມ່ຍິງຊານີ, ມີການຂິດລາຍດອກຫຼາຍແບບໄດ້ແກ່ລາຍຂິດຄືກ, ລາຍຂິດສອງໜ້າ, ລາຍຂິດສີຂາວແລະລາຍຂິດສີສັນຕ່າງ ໆເປັນຕົ້ນ. ແບບລວດລາຍປະກອບໄປດ້ວຍລວດລາຍວິຈິດຕະການແລະທຳນອງບໍລິສຸດຜຸດຜ່ອງຕ່າງ ໆກ່ຽວກັບລາຍເລຂາຄະນິດຫຼືລາຍປ່ຽນຮູບດວງເດືອນດາວ, ທ້ອງຟ້າສີຄາມ, ເມກເຝື້ອເລື່ອນລອຍ, ພູຂຽວຫລັງຈາກຝົນຕົກ, ສາຍນ້ຳທີ່ຂຽວສ່ອງໃສ, ດວງດອກໄມ້ທີ່ອໍລະຊອນອ້ອນແອ້ນຕະຫຼອດຮອດພືກສາສັດນາ ໆພັນ, ໝາຍຄວາມວ່າ ທຸກສິ່ງທຸກຢ່າງທີ່ຈົບງາມໃນຊີວິດກໍ່ຖືກແມ່ຍິງໄທຊານີແສ່ວໄວ້ໃນເສື້ອຜ້າອາພອນເປັນທີ່ເອ້ຢ້ອງ.






# ພິທີຄຶກຄື້ນໃນບຸນປີໃໝ່ຂອງເຜົ່າລີຊູ

## 傈僳族阔时节盛典

傈僳族是一个勤劳勇敢的民族，主要生活在云南西南部的大山峡谷中。傈僳族人民在漫长历史发展的生产生活中，创造了悠久的历史文化和丰富多彩的生活习俗。

ເຜົ່າລີຊູເປັນຊົນເຜົ່າທີ່ກ້າຫານດຸໝັ່ນຂະຫຍັນພຽນ, ເຂົາເຈົ້າດຳລົງຊີບຢູ່ທີ່ຮ່ອມຫ້ວຍເຫວເລິກພາກຕາເວັນຕົກສຽງໃຕ້ຢູນນານ. ໃນທ່າມກາງດຳລົງຊີບທຳການຜະລິດແຕ່ງການວິວັດທະນາຂອງປະຫວັດສາດອັນຍືດເຍື້ອຍາວນານນັ້ນ ປະຊາຊົນເຜົ່າລີຊູໄດ້ປະດິດຄິດສ້າງວັດທະນະທຳປະຫວັດສາດອັນຍາວນານແລະຮີດຄອງວາດຢູ່ກິນອັນອຸດົມສົມບູນຫຼາຍຫຼາກ.

ວັນໂຄສີ່(ບຸນປີໃໝ່)ເປັນບຸນປະເພນີທີ່ຄຶກຄື້ນໃຫຍ່ໂຕຂອງເຜົ່າລີຊູ. ຕາມປົກກະຕິເຮັດບຸນໃນລະຫວ່າງວັນທີ 5 ເດືອນ 12 ຫາວັນທີ 10 ເດືອນຈຽງປີຕໍ່ມາ. ຍາມວັນບຸນປີໃໝ່, ຂາເຈົ້າມັກເຮັດເຂົ້າໜົມແປ້ງເຂົ້າໜຽວ, ຕົ້ມເຫຼົ້າ, ຂ້າໝູແລະກິນເຂົ້າຮ່ວມພາສາມັກຄີ, ຍັງໄປບະເທວະດາເຈົ້າປ່າ, ວິງວອນຂໍໃຫ້





ຝົນຟ້າອຳນວຍ,ນ້ຳມາຟ້າຊ່ວຍໃນປີໜ້າ ຈິ່ງໄດ້ຮັບໝາກຜົນເກັບກູ້ອຸດົມສົມບູນ.ເມື່ອຮອດວັນບຸນ,ປະຊາຊົນເຜົ່າລີຊູລ້ວນແຕ່ນຸ່ງເຄື່ອງເອ້ຍ້ອງຊົນເຜົ່າ,ຊັກຊວນເອົາຜູ້ເຖົ້າຜູ້ແກ່ນ້ອຍໃຫຍ່ຍິງຊາຍມາເຕົ້າໂຮມກັນທີ່ລານເຂົ້າຫຼືແຄມບໍ່ນ້ຳຮ້ອນ.ຜູ້ເຖົ້າອາວຸໂສທີ່ມີຄຸນໜັກສັກໜາຂອງໄທລີຊູໄດ້ເປັນພິທີກອນຈັດພິທີໄຫວ້ຟ້າຢ່າງຄຶກຄື້ນ,ໄລຍະວັນບຸນ,ມີການສະແດງທັກສະວິຊາໂດດເດັ່ນຂອງຊົນເຜົ່າທີ່ຮຽກກັນວ່າ: “ໂດດລົງທະເລໄຟ,ປີນຂຶ້ນພູຄົມພ້າ” ແລະເປົ້າຂອງໜັກໄຕ່ເຊືອກຂ້າມແມ່ນ້ຳນູ່ຈຽງ,ຍັງມີງານແຂ່ງຂັນຂັບຮ້ອງ,ສະແດງກິລາກາຍຍະກຳຊົນເຜົ່າເພື່ອສະຫຼອງການເກັບກູ້ຜົນລະປູກໄດ້ອຸດົມສົມບູນເຊິ່ງປ່ຽນລົ້ນໄປດ້ວຍຫຼາຍຮູບຫຼາຍແບບຢ່າງມ່ວນຊື່ນເບີກບານທັງສະແດງຄຳສິ່ງພອນອັນປະເສີດໃນວັນບຸນປີໃໝ່.

ໃນວັນບຸນຂອງເຜົ່າລີຊູ,ຂາເຈົ້າຍັງມັກດື່ມເຫຼົ້າໄຂວ່ແຂນສາມຈອກ,ໝາຍຄວາມວ່າພີ່ນ້ອງເຜົ່າລີຊູຍົກຈອກເຫຼົ້າກອດຄໍແຂກຄົນນຳກັນດື່ມເຫຼົ້າສາມຈອກ:ຈອກທີ່ໜຶ່ງແມ່ນເຫຼົ້າທີ່ພົບໜ້າຮູ້ຈັກກັນເອີ້ນວ່າ “ເຫຼົ້າໄຂວ່ແຂນກັນ” ;ຈອກທີສອງແມ່ນເຫຼົ້າທີ່ສະແດງຄວາມເຄົາລົບຮັກແພງກັນເອີ້ນວ່າ “ເຫຼົ້າແຖມຈອກ” ;ຈອກທີສາມແມ່ນເຫຼົ້າຮ່ວມຈິດຮ່ວມໃຈກັນເອີ້ນວ່າ “ເຫຼົ້າຮ່ວມໃຈ” .ເຫຼົ້າສາມຈອກດັ່ງກ່າວມັນໄດ້ສ່ອງແສງເຖິງປະຊາຊົນເຜົ່າລີຊູຮັກຫອມຊີວິດ,ມີມູນເຊື້ອຄຸນສົມບັດອັນດີງາມທີ່ຮັກແຂກນັບຖືເພື່ອນແລະມີນິດໄສໃຈຄໍຊື່ສັດທະນົງໃຈຢ່າງລົ້ນຫລັ່ງ. “ເຫຼົ້າສາມຈອກ” ນີ້ແຫຼະອາດຈະຈູງໃຈຫຼາຍທ່ານລືມເລືອນກັບຕ່າວບໍ່ຢາກໜີຈາກແມ່ນ້ຳນູ່ຈຽງແລະໝູ່ບ້ານພູດອຍຊົນເຜົ່າລີຊູ.






# ດອກດວງມາລາຢູນນານຫອມຫວນເປັນອາຫານ

## 秀色可餐云南花

四季如春的云南，鲜花四时竞妍。这几年，花农们利用先进的大棚技术，即便是难得一现的奇花也会随愿而开。在这片花的红土地上，鲜花不仅可供观赏，而且还是餐桌上的菜肴。



ດອກໄມ້ສີດຂາຍເປັນຊຸ່ງເປັນກິໂລ,ແມ່ນ “ເລື່ອງປະຫຼາດ” ຂອງຢູນນານ.ຢູນນານເໝືອນດັ່ງລະດູບານຕະຫຼອດປີ,ໝູ່ມາລາແຂ່ງກັນບານທຸກລະດູການ,ຂາຍດອກໄມ້ຕາມນ້ຳໜັກໝາຍຄວາມວ່າດອກໄມ້ມັນມາກມາຍເຫຼືອຫຼາຍບໍ່ເປັນຕາຈືດເລີຍ.ຊຸມປີທີ່ຜ່ານມາ,ໝູ່ຊາວສວນດອກໄມ້ໄດ້ນຳໃຊ້ເຕັກນິກຜາມຕູບທີ່ກ້າວໜ້າ,ດອກໄມ້ນາໆຊະນິດທີ່ແປກປະຫຼາດກໍ່ສາມາດໄຂກີບເບັ່ງບານຕາມໃຈ.ຢູ່ໃນພື້ນທີ່ດິນແດງແຫ່ງບຸບຜານີ້,ດອກໄມ້ບໍ່ສະເພາະແຕ່ເປັນສິ່ງປະດັບຊົມເບິ່ງເທົ່ານັ້ນມັນຍັງເປັນອາຫານພິດນິຍົມແຊບຊ້ອຍໃນພາເຂົ້າອີກດ້ວຍ.

ຕາມການຄົ້ນຄວ້າຂອງທ່ານເຝິງກົກເໝີຍນັກພືກສາສາດຈີນ,ພືກສາປະດັບໃນປ່າມີປະມານ 2500 ຊະນິດ.ຢູ່ໃນຖານເມັດສີສົມ(gin)ທາດ,ມີດອກໄມ້ຫລາຍຊະນິດເປັນພືດອາຫານກິນໄດ້ເຊັ່ນະດອກສີແດງຂອງຕົ້ນງີ້ວ,ດອກໝາກພິລາ,ດອກມະລິທີ່ຣົດທະຣ່ວງ,ດອກທະກາງທີ່ເກີດເຕັມປ່າແລະດອກມູຫຼານ(Magnolia liliflora) ລ້ວນແຕ່ເປັນອາຫານຍອດຢ້ຽມ,ເໝືອນດັ່ງຄຳວ່າ “ຫອມຫວນຮັບປະທານໄດ້” .ເປັນອັນວ່າຊາວຢູນນານຫວງແຫນລະດູບານບໍ່ຢາກໃຫ້ດອກໄມ້ຊຸຫຼົ່ນຮ່ວງໂຣຍ,ຕາມຂໍ້ມູນທີ່ກ່ຽວຂ້ອງໄດ້ສະແດງໃຫ້ຮູ້ວ່າະປະຫວັດການກິນດອກໄມ້ຂອງເຂົາເຈົ້າຕັ້ງພັນກວ່າປີມາ

ແລ້ວ, ເມື່ອຮອດຍາມລະດູບານໃໝ່, ຊຸມຊົນພາກັນຂຶ້ນພູເດັດເອົາດອກໄມ້ຕາມປ່າທັງຂັບລຳທຳນອງເພງພູດອຍເອີ່ຍໃສ່ກັນ, ພາຍຫຼັງເກັບໄດ້ດອກໄມ້ມາ ໆຊະນິດກິນໄດ້ມາແລ້ວ ກໍ່ເອົາຕາກແຫ້ງໝັກດອງໄວ້ໃນໄຫເພື່ອແຮ່ໄວ້ບໍລິໂພກ.

ບັນດາຊົນເຜົ່າຢູນນານກໍ່ມີລາຍການອາຫານດອກໄມ້. ຮ້ານອາຫານຂອງໄທລື້ ມີ 80-90ສ່ວນຮ້ອຍໃນລາຍການອາຫານກໍ່ມີຮ່ອງຮອຍຂອງດວງດອກໄມ້. ເຜົ່າລາກູທີ່ດຳລົງຊີວິດຢູ່ແຄມແມ່ນ້ຳລານຊາງກໍ່ແມ່ນຊົນເຜົ່າທີ່ອາໄສດອກໄມ້ເປັນສິ່ງເພື່ອລ້ຽງຊີບ, ດວງດອກໄມ້ບໍ່ພຽງແຕ່ເປັນອາຫານແຊບຊ້ອຍຂອງຂາເຈົ້າເທົ່ານັ້ນຫາກຍັງເປັນສັນຍາລັກແຫ່ງຊີວິດອິນຊີຂອງຂາເຈົ້າອີກດ້ວຍ. ເຜົ່ານີ້ງກໍ່ມີປະເພນີຂຶ້ນພູປິດດອກໄມ້ເຊັ່ນກັນ, ຂາເຈົ້າໄດ້ຂັບລຳມີເນື້ອເພງຕອນໜຶ່ງວ່າ: "ປິດດອກໄມ້ມາໄດ້ຮ້ອຍຊະນິດຄືອາຫານຮ້ອຍຢ່າງ, ຕ້ອນຮັບຜູ້ຈະເປັນພົນລະຍາໃນພາຍຂ້າງໜ້າ." ເຮົາຈະເຫັນໄດ້ວ່າຖານະຂອງອາຫານດວງດອກໄມ້ມີກຽດເຖິງສຳໃດ. ສ່ວນຊົນເຜົ່ານາສີພັດຖືພືດທີ່ມີດອກໄມ້ຂາວລ້ວນເປັນສິ່ງມີທາດບຳລຸງແກ່ຮ່າງກາຍຂອງຄົນ.

ດວງດອກໄມ້ທັງເປັນອາຫານແລະກໍ່ເປັນຢາດີມີປະໂຫຍດ, ດອກໝ້ຽງປ່າ(Camellia japonica) ມີສັບພະຄຸນຜ່ອນເລືອດເຢັນແລະຫ້າມເລືອດ, ເປັນຢາດີແກ້ຂາກເລືອດຫຼືຖ່າຍອອກເລືອດ; ດອກໝີໝົງ(Buddleja officinalis)ມີສັບພະຄຸນກຳຈັດລົມເຮັດໃຫ້ຕາໃສເບິ່ງແຈ້ງ; ດອກຂ່າໂຄມ(Alpinia bracteata)ເປັນຕຳລາຢາສະເພາະອົບອຸ່ນກະເພາະອາຫານ, ບຳລຸງປ້າງແຂງແຮງ. ເມື່ອເຮົາປຶດເບິ່ງປຶ້ມຮູບຕຳລາຢາສະໝຸນໄພຈີນ, ຈະເຫັນພືດທີ່ມີດອກໄຂກິບບານ ກວມເຄິ່ງໜຶ່ງຂຶ້ນເມືອແລະກໍ່ດວງດອກໄມ້ດັ່ງກ່າວມັກປະກົດຢູ່ຈານອາຫານຂອງບັນດາຊົນເຜົ່າຢູນນານເປັນປະຈຳ, ອັນໄດ້ເສີມວັດທະນະທຳກິນດື່ມໃນພູພຽງດິນແດງຢ່າງຫລວງຫລາຍພາຍມາກ.





## 云南美食：汽锅鸡

“汽锅鸡”是云南特有的名菜，它的烹制方法特殊，鸡肉细嫩、汤汁鲜美、富于营养，在国内外均享盛誉。

# ອາຫານໂອຊາລົດຢູນນານ:ໄກ່ອົບໝໍ້ດິນ



“ໄກ່ອົບໝໍ້ດິນ” ແມ່ນອາຫານທີ່ມີຊື່ສຽງສະເພາະຢູນນານ, ວິທີປຸງແຕ່ງກໍ່ມີລັກສະນະພິເສດ, ຊີ້ນໄກ່ອ່ອນແລບດີ, ນ້ຳແກງຂອງມັນກໍ່ແຊບຊ້ອຍທັງມີທາດບຳລຸງພຽບພ້ອມ, ມີຊື່ສຽງຊ່າລືໄປພາຍໃນແລະນອກປະເທດ.

ກ່ອນນີ້ປີສຽນຫລົງສະໄໝລາຊະວົງຊິງ ໄກ່ອົບໝໍ້ດິນກໍ່ນິຍົມແຜ່ຜາຍກັນຕາມພື້ນເມືອງເຂດໃຕ້ຢູນນານ, ໄກຈາກປະຈຸບັນນີ້



200ກວ່າປີແລ້ວ. ເຄື່ອງປັ້ນດິນເຜົາທີ່ຜະລິດຈາກເມືອງຈ້ຽນສ່ວຍເຂດໃຕ້ຢູນນານມີປະຫວັດສາດຍາວນານ, ຮູບຊົງເກົ່າແກ່ເປັນເອກະລັກພິເສດ. ຊາວທ້ອງຖິ່ນດັ່ງກ່າວຊື່ວ່າຢາງຫລີໃຊ້ດິນປັ້ນເມືອງຈ້ຽນສ່ວຍ ປະດິດຄິດປັ້ນເປັນໝໍ້ໜຶ່ງທີ່ມີຮູທໍ່ໂລ່ງກົ້ນທາງກາງ, ຕັ້ງຊື່ວ່າ “ໝໍ້ອາຍອົບ” . ພາຊະນະສຳລັບໜຶ້ງຄວນໃຊ້ໝໍ້ດິນປັ້ນລົດຊາດຈຶ່ງແທດເໝາະດີ. ຮູບນອກຂອງໝໍ້ດິນອົບມີລັກສະນະເກົ່າແກ່, ມີຮູບກົມຄ່ອນຂ້າງແປ, ປາກມົນມີຝາອັດ, ທາງກາງໝໍ້ມີທໍ່ໂລ່ງກົ້ນໝໍ້ອັນໜຶ່ງ, ອາຍນ້ຳຕົ້ມຜ່ານຮູທໍ່ເຂົ້າສູ່

ໃນໝໍ້ດິນ,ອາຍກະທົບຝາໝໍ້ກາຍເປັນນ້ຳຢາດລົງເປັນນ້ຳແກງໄກ່.ຄັນໜື້ງ 2 -3 ຊົ່ວໂມງ,ຊີ້ນໄກ່ກໍ່ເປື່ອຍດີກິນໄດ້ບໍ່ຫຍາບ.

ການປຸງແຕ່ງໄກ່ອົບໝໍ້ດິນ,ຕ້ອງເລືອກເອົາແນວພັນໄກ່ລາດ,ບໍ່ຄວນໃຫຍ່ເກີນໄປ,ເອົາໂຕໃຫຍ່ສ່ຳກາງດີກວ່າ,ດີທີ່ສຸດແມ່ນໄກ່ແມ່ທີ່ເລີ່ມຈະອອກໄຂ່ຫລືໄກ່ຜູ້ຮາມເລີ່ມຈະຂັນ.ສ່ວນເຄື່ອງເທດປຸງລົດພຽງແຕ່ໃສ່ຂີງ,ຜັກບົ່ວ,ເກືອແລະໂຮຍໝາກພິກໄທໃສ່ໜ້ອຍໜຶ່ງ.ເວລາກິນຄີບຂີງແລະຜັກບົ່ວອອກ,ຈຶ່ງໄວ້ອາຍຂອງມັນເພື່ອດັບກິ່ນຄາວ,ທ່ານຈະຮູ້ສຶກມີລົດແຊບຊ້ອຍສົດຊື່ນ.

ຖ້າຈະປະສົມຢາສະໝຸນໄພມີຄ່າພິເສດຂອງຢູນນານໃສ່ໄກ່ອົບໝໍ້ດິນເປັນຕົ້ນຄື: “ຊານສີ” (Panax pseudoginseng var. major), “ສົ່ງເຊົ້າ” (Cordyceps sinensis) ແລະທຽນມົ້ວ (Gastrodia elata),ອາດເຮັດແກງໄກ່ເພີ່ມທາດບຳລຸງຕື່ມອີກ,ມີສັບພະຄຸນຊຸ່ມປອດ ບຳລຸງໝາກໄຂ່ຫຼັງ,ຍັງມີສັບພະຄຸນເດັ່ນຊັດສຳລັບປົວພະຍາດໝາກຫົວໃຈແລະອາການເລືອດຈາງອີກ,ເປັນອາຫານດີມີທາດບຳລຸງ.

ວິທີປຸງແຕ່ງໄກ່ອົບໝໍ້ດິນ:

ວັດຖຸດິບ:ໄກ່ລາດໂຕໜຶ່ງ 2000 ກຣາມ,ຜົງພິກໄທ 3 ກຣາມ,ຂີງແລະຜັກບົ່ວແຕ່ລະຢ່າງ 30 ກຣາມ;

ວິທີປຸງແຕ່ງ:ລ້າງໄກ່ໃຫ້ສະອາດແລ້ວຊອຍເປັນຕ່ອນເອົາໃສ່ໃນໝໍ້ດິນອົບ,ຕັກນ້ຳເຢັນໃສ່ໝໍ້ຕື່ມນ້ຳກ້ອງໝໍ້ດິນ,ຊອຍຜັກບົ່ວແລະຝານຂີງໃສ່ຕ່ອນຊີ້ນໄກ່ໜື້ງປະມານ 4 -5 ຊົ່ວໂມງຈົນຊີ້ນໄກ່ເປື່ອຍດີ.ແລ້ວຄີບຂີງແລະຜັກບົ່ວອອກຍອງໃສ່ພາເຂົ້າຮັບປະທານ,ຈະໂຮຍເຄື່ອງປຸງລົດຕື່ມໃສ່ກໍ່ໄດ້.

ຈຸດສຳຄັນ: ຕ້ອງລ້າງເລືອດໄກ່ອອກໃຫ້ສະອາດ,ເມື່ອຊອຍເປັນຕ່ອນແລ້ວຄວນເອົານ້ຳຮ້ອນລວກຕ່ອນຊີ້ນໄກ່ຈັກໜ້ອຍຈຶ່ງເອົາໃສ່ໝໍ້ດິນ,ເພື່ອຮັກສາແກງໄກ່ໃສສະອາດ ມີລົດຫອມນົວແຊບຊ້ອຍ.



文 / 苏雯雯

# ຫາຊື້ໝາກໄມ້

## mǎi shuǐ guǒ
## 买 水 果

zǎo shang hǎo xiān shēng xiǎng mǎi diǎn
——早上好，先生！想买点
shén me shuǐ guǒ
什么水果？
-- ສະບາຍດີ!ທ່ານຢາກຊື້ໝາກໄມ້ຫຍັງແດ່?

píng guǒ
——苹果。
-- ໝາກໂປມ(ໝາກແອັບເປີນ).

zhè xiē píng guǒ dōu shì jīn tiān zǎo
——这些苹果都是今天早
chén gāng dào de hěn xīn xiān
晨刚到的，很新鲜。
-- ໝາກໂປມເຫຼົ່ານີ້ແມ່ນຫາກໍ່ສົ່ງມາຮອດໃນເຊົ້າມື້ນີ້, ຍັງສົດໆຢູ່.

kàn qǐ lái zhēn de hěn bú cuò duō shǎo qián
——看起来真的很不错。多少钱？
-- ເບິ່ງຄືດີເອົາແທ້.ລາຄາເທົ່າໃດ?

wǔ yuán yī gōng jīn
——伍元一公斤。
-- ກິໂລໜຶ່ງ 5 ຢວນ.

qǐng nín gěi wǒ chēng liǎng gōng jīn píng guǒ
——请您给我称两公斤苹果。
-- ຂໍທ່ານຊັ່ງໝາກໂປມໃຫ້ 2 ກິໂລ .

hǎo de nín shāo děng
——好的，您稍等。
-- ເຈົ້າ, ຂໍໃຫ້ທ່ານຖ້າຈັກໜ້ອຍ.

hǎo
——好。
-- ເຈົ້າ.

zhè shì nín xū yào de liǎng gōng jīn
——这是您需要的两公斤
píng guǒ zǒng gòng yuán qián
苹果，总共 10 元钱。
-- ນີ້ລະແມ່ນໝາກໂປມ 2 ກິໂລທີ່ທ່ານຕ້ອງການ, ຄິດລວມເປັນ 10 ຢວນ.

gěi nín qián xiè xiè
——给您钱，谢谢。
-- ຈ່າຍເງິນໃຫ້ທ່ານ,ຂອບໃຈເດີ.

bú kè qì huān yíng nín zài cì guāng lín
——不客气，欢迎您再次光临。
-- ບໍ່ຕ້ອງຈຽມໃຈດອກ,ຍິນດີຕ້ອນຮັບທ່ານຈົ່ງກະລຸນາ ມາອຸດໜູນອີກ.







# ພູມພາບພູຜາທາລາກູ່ຍຫຼິນເປັນເອກໃຕ້ລຸ່ມຟ້າ

## (ກວາງຊີເມືອງຈີນ)








Welcome to Laos... Land of Timeless Beauty
ການບິນລາວ
Lao Airlines
The Beauty of Lao Hospitality